

# ຄູ່ມື ການບໍ່ເຮັດໄພອັນຕະລາຍ ສຳລັບການເຮັດວຽກ ກັບຜູ້ຖືກຄ້າມະນຸດ

ການລວມເອົາການຈັດຕັ້ງປະຕິບັດຂອງແຜນງານ
ອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT)

*ພຶດສະພາ 2021*

Australian Aid | ASEAN-Australia Counter Trafficking

ຂະສິດທັງໝົດ ແລະ ໃນທຸກໆພາກສ່ວນຂອງເອກະສານນີ້ ເປັນລິຂະສິດຂອງຄາດໂນ້ (Cardno) ແລະ ບໍ່ສາມາດນໍາໃຊ້, ຂາຍ, ໂອນ, ສໍາເນົາ ຫຼື ຜະລິດຊໍ້າຄືນ ທັງໝົດ ຫຼື ບາງພາກສ່ວນ ໃນລັກສະນະ ຫຼື ໃນຮູບແບບໃດໜຶ່ງ ຫຼື ທາງສື່ໃດໜຶ່ງ ໃຫ້ແກ່ບຸກຄົນໃດໜຶ່ງ ທີ່ນອກເໜືອຈາກຂໍ້ຕົກລົງກັບ ຄາດໂນ້.

ເອກະສານສະບັບນີ້ຜະລິດຂຶ້ນໂດຍ ຄາດໂນ້ ແຕ່ພຽງຜູ້ດຽວເພື່ອຜົນປະໂຫຍດ ແລະ ນໍາໃຊ້ໂດຍ ລູກຄ້າ ອີງຕາມຂໍ້ກໍານົດໃນການມີສ່ວນຮ່ວມເທົ່ານັ້ນ. ຄາດໂນ້ ຈະບໍ່ຮັບ ແລະ ບໍ່ມີຄວາມຮັບຜິດຊອບ ໃດໆ ຫຼື ບໍ່ຮັບຜິດຊອບໃດໆ ຕໍ່ກັບບຸກຄົນທີ່ສາມ ທີ່ນໍາໃຊ້ ຫຼື ອ້າງອີງເນື້ອໃນຂອງເອກະສານສະບັບນີ້.

ໝາຍເຫດ/ຂໍ້ຄວາມປະຕິເສດຄວາມຮັບຜິດຊອບ: ລັດຖະບານອົດສະຕາລີ ໄດ້ໃຫ້ທຶນການພິມ ເຜີຍແຜ່ເອກະສານສະບັບນີ້ ຜ່ານກະຊວງການຕ່າງປະເທດ ແລະ ການຄ້າ. ຄວາມຄິດເຫັນໃນ ເອກະສານພິມເຜີຍແຜ່ສະບັບນີ້ ເປັນຂອງຜູ້ຂຽນແຕ່ພຽງຜູ້ດຽວ ແລະ ບໍ່ແມ່ນຄວາມຄິດເຫັນຂອງ ລັດຖະບານອົດສະຕາລີ.

ຂໍ້ຄວາມແຈ້ງໃຫ້ຊາບ: ເອກະສານສະບັບນີ້ແມ່ນສະຫລຸບຈາກ ຄູ່ມື ການບໍ່ເຮັດໄພອັນຕະລາຍ ສະບັບເຕັມ, ດ້ວຍການສະໜັບສະໜູນຈາກທີ່ປຶກສາຂອງ ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການ ຄ້າມະນຸດ ແລະ ທີ່ປຶກສາດ້ານບົດບາດຍິງຊາຍຂອງສາກົນ ໂຟຣນິກາ ກຣິກ (Froniga Greig)

## ຄູ່ມືນີ້ນຳໃຊ້ແນວໃດ?

ຄູ່ມືນີ້ ລວມມີສີ່ພາກ ເຊິ່ງສາມາດອ່ານລວມກັນ ຫຼື ແຍກອ່ານກໍໄດ້. ແຕ່ລະພາກ ຈະນຳສະເໜີພາບລວມໄພອັນຕະລາຍທີ່ອາດຈະເກີດຂຶ້ນ ແລະ ບັນຊີລາຍການວ່າຈະເຮັດແນວໃດເພື່ອບໍ່ໃຫ້ມີໄພອັນຕະລາຍໃດໆ. ຄຳແນະນຳສະເພາະດ້ານຕ່າງໆ ກຳນົດໄວ້ລຸ່ມນີ້:

- ການກຳນົດຕົວຜູ້ຖືກເຄາະຮ້າຍ
- ການຕອບໂຕ້ຄວາມຍຸຕິທຳທາງອາຍາ
- ການເຮັດວຽກກັບເດັກ
- ການເຮັດວຽກກັບກຸ່ມສ່ຽງ

ເອກະສານຊ້ອນທ້າຍ ໄດ້ນຳສະເໜີກໍລະນີສຶກສາ ທີ່ກໍລະນີ ເພື່ອເປັນຕົວຢ່າງວິທີການປະເມີນ ແລະ ຫຼຸດຜ່ອນໄພອັນຕະລາຍທີ່ອາດຈະເກີດຂຶ້ນ ເມື່ອຕ້ອງເຮັດວຽກກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

## ການບໍ່ເຮັດໄພອັນຕະລາຍແມ່ນຫຍັງ?

ການບໍ່ເຮັດໄພອັນຕະລາຍ (DNH) ເປັນຫຼັກການທີ່ຢືມມາຈາກຄຳສາບານຂອງຮິບໂປເຄຣຕິສ ຜູ້ທີ່ເປັນບິດາທາງການແພດ ເຊິ່ງຖືກນຳໃຊ້ໃນຂົງເຂດອື່ນໆ ເປັນຕົ້ນໃນຂົງເຂດການພັດທະນາສາກົນ. ວິທີການຂອງ DNH ຮັບຮູ້ວ່າການອອກແບບການຈັດຕັ້ງປະຕິບັດທີ່ຕັ້ງໃຈໄວ້ ເພື່ອຊ່ວຍເຫຼືອ ຫຼື ການຊ່ວຍເຫຼືອທີ່ອາດຈະເກີດໄພອັນຕະລາຍໂດຍບໍ່ໄດ້ຕັ້ງໃຈ ແລະ ຮຽກຮ້ອງໃຫ້ຜູ້ປະຕິບັດຕົວຈິງກຳນົດ ແລະ ຫຼຸດຜ່ອນໄພອັນຕະລາຍທີ່ອາດຈະເກີດຂຶ້ນ. DNH ມີຫຼາຍຢ່າງທີ່ຄ້າຍຄືກັບສິດທິມະນຸດ, ວິທີການຕອບສະໜອງດ້ານບົດບາດຍິງ-ຊາຍ ແລະ ການລວມເອົາທຸກຄົນໃນສັງຄົມ. DNH ສົ່ງເສີມ ການບໍ່ຈຳແນກ ແລະ ຄວາມສຳຄັນຂອງເອກະລັກທາງສັງຄົມ ເພື່ອສ້າງຄວາມເຂົ້າໃຈ ແລະ ການປະເມີນ ປະສົບການຂອງແຕ່ລະຄົນຕໍ່ກັບໄພອັນຕະລາຍ.

## DNH ມີຄວາມກ່ຽວຂ້ອງກັບ ການຄ້າມະນຸດແນວໃດ?

ແຜນງານຕ້ານການຄ້າມະນຸດ ເຮັດວຽກແບບບໍ່ເຕັມສ່ວນກັບຜູ້ຖືກເຄາະຮ້າຍ ແລະ ກຸ່ມສ່ຽງ ທີ່ຖືກຈຳແນກ ແລະ ຂູດຮີດ ອັນເນື່ອງມາຈາກ ເພດ, ສາສະໜາ, ຊົນເຜົ່າ, ສະຖານະແຮງງານເຄື່ອນຍ້າຍ ຫຼື ອາຍຸຂອງເຂົາເຈົ້າ.[1] ທ່າແຮງຂອງໄພອັນຕະລາຍຕ່າງໆທີ່ອາດຈະເກີດຂຶ້ນໃນແຕ່ລະບາດກ້າວຂອງຂະບວນການ - ການກຳນົດຕົວຜູ້ຖືກເຄາະຮ້າຍຜິດພາດວ່າເຂົາເຈົ້າເປັນອາຊະຍາກອນ, ບໍ່ໄດ້ໃຫ້ຂໍ້ມູນ ແລະ ການຕີຄວາມໝາຍຢ່າງພຽງພໍ ໃນໄລຍະຂະບວນການທາງກົດໝາຍ ແລະ ການສົ່ງຜູ້ຖືກເຄາະຮ້າຍກັບຄືນປະເທດຕົ້ນກຳເນີດຂອງຕົນ ເຖິງວ່າຈະມີຄວາມສ່ຽງທີ່ຈະຖືກແກ້ແຄ້ນຈາກຜູ້ຄ້າມະນຸດ. ສາເຫດທົ່ວໄປອີກຢ່າງໜຶ່ງຂອງໄພອັນຕະລາຍທີ່ອາດຈະເກີດຂຶ້ນນັ້ນ ລວມມີ ການອອກແບບ ແລະ ຈັດຫາໂຄງການທາງດ້ານຈິດຕະສັງຄົມ, ເສດຖະກິດ ແລະ ສັງຄົມ/ໂຄງການອາຊີວະສຶກສາທີ່ບໍ່ພຽງພໍ ແລະ ບໍ່ໄດ້ຄຳນຶງເຖິງຄວາມເປັນສ່ວນຕົວຂອງບຸກຄົນ, ເອກະລັກທາງສັງຄົມ, ຄວາມເປັນເອກະລາດ ແລະ ໜ່ວຍງານຕ່າງໆ.[2]

ຈາກຜູ້ໃຫ້ຂໍ້ມູນທຳອິດ ເຊິ່ງລວມມີອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (NGO), ຜູ້ປະຕິບັດຕົວຈິງ ແລະ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ໄປຮອດໄອຍະການ, ຜູ້ພິພາກສາ, ຜູ້ວາງນະໂຍບາຍ ຕ້ອງໄດ້ເຮັດທຸກໆຄວາມພະຍາຍາມເພື່ອຫຼີກລ້ຽງການກໍ່ໃຫ້ເກີດໄພອັນຕະລາຍ ໃນເວລາທີ່ໃຫ້ການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ບາງຫຼັກການຂອງ DNH ທີ່ກ່ຽວຂ້ອງກັບການເຮັດວຽກກ່ຽວກັບການຄ້າມະນຸດ ລວມມີ:

1. ການເຄົາລົບ ແລະ ການປົກປ້ອງສິດທິມະນຸດ
2. ການຮັກສາຄວາມລັບ, ສິດທີ່ຈະມີຄວາມເປັນສ່ວນຕົວ ແລະ ການບໍ່ລະບຸຊື່
3. ການໄດ້ຮັບຂໍ້ມູນຢ່າງເຕັມສ່ວນ ແລະ ຄວາມຍິນຍອມ
4. ການມີສ່ວນຮ່ວມ ແລະ ຕັດສິນໃຈດ້ວຍຕົນເອງ
5. ການບໍ່ຖືກຈຳແນກ
6. ຄວາມອ່ອນໄຫວດ້ານເພດ
7. ຜົນປະໂຫຍດສູງສຸດຂອງເດັກ

ຫຼັກການ DNH ກຳນົດໃຫ້ທຸກໆອົງການຈັດຕັ້ງ ທີ່ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມມີ ຂະແໜງຍຸຕິທຳ, ຜູ້ໃຫ້ການບໍລິການ, ໜ່ວຍງານດ້ານການພັດທະນາ, ອົງການ NGO, ນັກວິຊາການ/ນັກຄົ້ນຄວ້າໃນຂະແໜງການສຶກສາ, ແລະ ສື່ຕ່າງໆ ເພື່ອເຮັດການປະເມີນໄພອັນຕະລາຍທີ່ອາດຈະເກີດຂຶ້ນ ແລະ ຈັດຫາທາງເລືອກເພື່ອຫຼຸດຜ່ອນຄວາມສ່ຽງ.

1 ອົງການ UNODC. ຄູ່ມືການຕ້ານການຄ້າມະນຸດ ສຳລັບຜູ້ປະຕິບັດຕົວຈິງດ້ານຍຸຕິທຳທາງອາຍາ: ການປະເມີນຄວາມສ່ຽງໃນການສືບສວນ-ສອບສວນການຄ້າມະນຸດ. (ນິວຢອກ: 2009) https://www.unodc.org/documents/human-trafficking/TIP_module5_Ebook.pdf

2 Rende Taylor, L. & Latonero, M. ຄູ່ມືສະບັບປັບປຸງກ່ຽວກັບຈັນຍາບັນ ແລະ ສິດທິມະນຸດ ໃນການຕ້ານການຄ້າມະນຸດ: ມາດຕະຖານດ້ານຈັນຍາບັນໃນການເຮັດວຽກກັບແຮງງານເຄື່ອນຍ້າຍ ແລະ ຜູ້ຖືກຄ້າມະນຸດໃນຍຸກດິຈິຕອນ. (ບາງກອກ, ສະຖາບັນອິດສະຣະ: 2018). https://44f2713d-a205-4701-bba3-8d419653b4b6.filesusr.com/ugd/5bf36e_1307f698e5ec46b6b-2fc7f4391bff4b6.pdf

# ການກຳນົດຕົວຜູ້ຖືກເຄາະຮ້າຍ: ໄພອັນຕະລາຍທີ່ອາດຈະເກີດຂຶ້ນ ແລະ ຄຳແນະນຳສຳລັບ DNH

**ຄຳແນະນຳ ແລະ ຂັ້ນຕອນໃນພາກພື້ນອາຊຽນ** ກຳນົດໄວ້ວ່າ ການກຳນົດຜູ້ຖືກເຄາະຮ້າຍຢ່າງຖືກຕ້ອງ ແລະ ທັນເວລາ ມີຄວາມສຳຄັນຕໍ່ກັບຄວາມປອດໄພ ແລະ ສະຫວັດດີພາບຂອງເຂົາເຈົ້າ. ມັນມີຄວາມຈຳເປັນເພື່ອຮັບປະກັນວ່າຜູ້ກະທຳຜິດຈາກການຄ້າມະນຸດ ສາມາດຖືກຈັບຕົວ ແລະ ລົງໂທດຕໍ່ກັບອາຊະຍາກຳຂອງພວກເຂົາ. ນອກນັ້ນ, ຍັງຮຽກຮ້ອງໃຫ້ມີກົນໄກ ແລະ ຂັ້ນຕອນ ເພື່ອແນະນຳ ແລະ ອຳນວຍຄວາມສະດວກໃຫ້ແກ່ການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ຄວນຈະເປັນມາດຕະຖານໃນທົ່ວພາກພື້ນອາຊຽນ.

3 ການຕ້ານການເປັນຂ້າທາດລະຫວ່າງປະເທດ. ການຄ້າມະນຸດ, ສິດທິມະນຸດ: ນິຍາມໃໝ່ຂອງການປົກປ້ອງຜູ້ຖືກເຄາະຮ້າຍ. (ລອນດອນ: 2002) http://www.antislavery.org/wp-content/uploads/2017/01/hum_traff_hum_rights_redef_vic_protec_final_full.pdf

4 ນີ້ແມ່ນຂໍ້ສັງເກດທົ່ວໄປຢູ່ໃນຫຼາຍປະເທດໃນອາຊຽນ ທີ່ໄດ້ເຮັດບົດລາຍງານໂດຍແຜນງານ ASEAN-ACT ກ່ຽວກັບ ແຜນວາດພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບຄວາມສະເໝີພາບ ແລະ ການລວມເອົາທຸກຄົນໃນສັງຄົມ.

## ໄພອັນຕະລາຍທີ່ອາດຈະເກີດຂຶ້ນ: ບໍ່ສາມາດກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

*ສິ່ງນີ້ຖືກນຳໃຊ້ບໍ່ສະເພາະແຕ່ບຸກຄົນ* ຜູ້ທີ່ຖືກຂູດຮີດໃນຕ່າງປະເທດ ແຕ່ມັນຍັງຖືກນຳໃຊ້ສຳລັບບຸກຄົນທີ່ຖືກເຄາະຮ້າຍຈາກການຄ້າມະນຸດພາຍໃນ. ຜູ້ທີ່ບໍ່ຖືກຮັບຮູ້ໂດຍເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ອາດຈະເຄີຍຖືກຄ້າມະນຸດ, ພົບກັບຄວາມສ່ຽງຕ່າງໆເຊັ່ນ: ສືບຕໍ່ຖືກຂູດຮີດ ແລະ ລ່ວງລະເມີດ, ຖືກກັກຂັງ, ການຖືກສົ່ງກັບປະເທດ, ການຖືເປັນຄະດີອາຍາ, ການລະເມີດສິດທິ, ບໍ່ສາມາດເຂົ້າເຖິງການຊ່ວຍເຫຼືອ ແລະ ການບໍລິການທີ່ຈຳເປັນ, ຖືກຄ້າມະນຸດຊ້ຳຄືນ ແລະ ຖືກແກ້ແຄ້ນຈາກຜູ້ຄ້າມະນຸດ.[3] ຫຼາຍປະເທດໃນອາຊີຕາເວັນອອກສ່ຽງໃຕ້, ຈຳນວນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຈຳນວນຫຼາຍ ໄດ້ຖືກກຳນົດຕົວວ່າເປັນຜູ້ຍິງ ແລະ ເດັກຍິງ ໃນຂະນະທີ່ຜູ້ຊາຍ ແລະ ເດັກຊາຍ, ຜູ້ທີ່ມີຄວາມພິການ ແລະ ຍິງຮັກຍິງ (lesbian), ຊາຍຮັກຊາຍ (gay), ຄົນທີ່ມັກທັງສອງເພດ (bisexual), ຄົນຂ້າມເພດ (transgender), ຄົນທີ່ບໍ່ມີຄວາມຊັດເຈນໃນຄວາມເປັນເພດ (queer) ແລະ ຄົນທີ່ມີສອງເພດ (intersex)-(LGBTQI) ມັກຈະບໍ່ຖືກຮັບຮູ້.[4]

**ຄຳແນະນຳ #1:**

ປະຕິບັດຕາມຄຳແນະນຳລະດັບຊາດ ຫຼື ຂັ້ນຕອນການປະຕິບັດຕາມມາດຕະຖານ (SOPs) ກ່ຽວກັບການກຳນົດຕົວ ແລະ ສົ່ງຕໍ່. ການນຳໃຊ້ຕົວຊີ້ວັດທີ່ລັດຖະບານ ຫຼື ໜ່ວຍງານໄດ້ຮັບຮອງ ເພື່ອຊ່ວຍໃຫ້ແກ່ການກຳນົດວ່າບຸກຄົນດັ່ງກ່າວເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຖ້າຫາກມີຂໍ້ສົງໄສ, ໃຫ້ປຶກສາກັບຫົວໜ້າ ຫຼື ພະນັກງານທີ່ມີຄວາມຮູ້ ແລະ ປະສົບການກ່ຽວກັບຄະດີດັ່ງກ່າວ.

**ຄຳແນະນຳ #2:**

ໃຊ້ເວລາເພື່ອປະເມີນວ່າບຸກຄົນດັ່ງກ່າວເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ບໍ່. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະບໍ່ຕອບສະໜອງກັບຕົວຊີ້ວັດທັງໝົດຂອງການຄ້າມະນຸດ ໃນຂັ້ນຕອນການກວດສອບ ຫຼື ການກຳນົດຕົວ ໂດຍສະເພາະ ຖ້າຫາກພວກເຂົາຮູ້ສຶກບໍ່ປອດໄພ ຫຼື ບໍ່ສະບາຍໃຈ ຫຼື ກຳລັງມີບັນຫາຈາກຄວາມບອບຊ້ຳທາງດ້ານຈິດໃຈ. ເດັກ, ບຸກຄົນທີ່ມີຄວາມພິການ ແລະ ຜູ້ທີ່ມີຄວາມຕ້ອງການພິເສດ ອາດຈະມີປະສົບການທີ່ຫຍຸ້ງຍາກໃນການແບ່ງປັນປະສົບການ ແລະ ມີຜົນສະທ້ອນຕໍ່ກັບການກຳນົດຕົວ.

## ໄພອັນຕະລາຍທີ່ອາດຈະເກີດຂຶ້ນ: ການຖືເປັນຄະດີອາຍາ, ການຈັບຕົວ, ການຖືກກັກຂັງ ແລະ ການຖືກສົ່ງກັບປະເທດ

***ຜູ້ຖືກເຄາະຮ້າຍ*** ຈາກການຄ້າມະນຸດ ຜູ້ທີ່ບໍ່ໄດ້ຖືກກຳນົດຕົວຢ່າງເໝາະສົມອາດຈະຖືກຈັບຕົວ, ຖືກກັກຂັງ ແລະ ໃນກໍລະນີທີ່ການເຄື່ອນຍ້າຍທີ່ຜິດກົດໝາຍ ຈະຖືກສົ່ງກັບປະເທດ. ແຮງງານເຄື່ອນຍ້າຍຜູ້ທີ່ເຂົ້າ ແລະ ອາໄສຢູ່ໃນປະເທດຢ່າງຜິດກົດໝາຍ ສ່ວນໃຫຍ່ຈະຖືກຈັບຕົວ, ກັກຂັງ ແລະ ຖືກສົ່ງກັບປະເທດ ເນື່ອງຈາກສະຖານະຄວາມຜິດກ່ຽວກັບສະຖານະທີ່ເປັນແຮງງານເຄື່ອນຍ້າຍ ແລະ ການກະທຳຜິດທາງອາຍາໃນໄລຍະທີ່ພວກເຂົາຖືກຄ້າມະນຸດ. ການເຄື່ອນຍ້າຍແຮງງານທີ່ຜິດກົດໝາຍ ສ່ວນໃຫຍ່ຈະຖືກປະຕິບັດຄືກັບຜູ້ຖືກເຄາະຮ້າຍຈາກການລັບລອບເຂົ້າ-ອອກເມືອງ ເຊິ່ງແຕກຕ່າງຈາກຜູ້ຄ້າມະນຸດ ແລະ ບໍ່ໄດ້ຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ມັນເປັນເລື່ອງປົກກະຕິທີ່ຫຼາຍໆຄົນ ຈະຖືກກັກຂັງໃນສູນພັກເຊົາການເຂົ້າ-ອອກເມືອງ, ຖືກຄຸກ ຫຼື ສະຖານທີ່ພັກເຊົາແບບຜິດ ເຊິ່ງເປັນບ່ອນທີ່ພວກເຂົາບໍ່ສາມາດເຂົ້າ ແລະ ອອກ ໄດ້ຢ່າງອິດສະລະ.

## ຄຳແນະນຳ #3:

ຜູ້ຖືກຄ້າມະນຸດ ອາດບໍ່ຕ້ອງການຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍ ຫຼື ໄດ້ຮັບການປົກປ້ອງ ຫຼື ການຊ່ວຍເຫຼືອ. ພວກເຂົາຄວນຈະໄດ້ຮັບຄວາມໝັ້ນໃຈວ່າພວກເຂົາຈະບໍ່ຖືກລົງໂທດ ຫຼື ຖືເປັນການກະທຳຜິດທາງອາຍາ.

## ຄຳແນະນຳ #4:

ຖ້າຫາກມີເຫດຜົນທີ່ດີເຮັດໃຫ້ເຊື່ອວ່າບຸກຄົນໃດໜຶ່ງຖືກຄ້າມະນຸດ, ບຸກຄົນດັ່ງກ່າວຄວນຖືກປະຕິບັດໃນຖານະຜູ້ຖືກເຄາະຮ້າຍ ເພື່ອຈຸດປະສົງໃນການຖືກສະໜັບສະໜູນ ແລະ ປົກປ້ອງ ຈົນກວ່າຈະມີການຕັດສິນໃຈອີກຄັ້ງ. ສິ່ງນີ້ເປັນສິ່ງທີ່ສຳຄັນຢ່າງຍິ່ງ ໃນກໍລະນີຂອງການເຄື່ອນຍ້າຍແຮງງານທີ່ຜິດກົດໝາຍ ແລະ ເດັກ.[5]

## ຄຳແນະນຳ #5:

ຮັບປະກັນວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ໄດ້ຖືກກັກຂັງ, ຖືກສົ່ງກັບປະເທດ, ຖືກດຳເນີນຄະດີ ຫຼື ລົງໂທດ ຕໍ່ກັບການກະທຳຜິດກົດໝາຍ ທີ່ພວກເຂົາມີສ່ວນຮ່ວມ ເຊິ່ງເປັນຜົນກະທົບໂດຍກົງຈາກສະຖານະການຂອງພວກເຂົາໃນຖານະຜູ້ຖືກເຄາະຮ້າຍ ລວມທັງ ການລະເມີດ ແລະ ຄວາມຜິດທີ່ກ່ຽວກັບການເປັນໂສເພນີ, ອາຊະຍາກຳເລັກນ້ອຍ ຫຼື ກົດໝາຍວ່າດ້ວຍການເຂົ້າ-ອອກເມືອງ.

5 ຄະນະກຳມາທິການອາຊຽນວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິແມ່ຍິງ ແລະ ເດັກ. ຄຳແນະນຳ ແລະ ຂັ້ນຕອນໃນການແກ້ໄຂຄວາມຕ້ອງການອັນຈຳເປັນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນພາກພື້ນ. ເອກະສານຊ້ອນທ້າຍ: ການອ້າງອີງ ແລະ ການປະຕິບັດທີ່ເປັນຕົວແບບທີ່ດີ. (n.d);

## ໄພອັນຕະລາຍທີ່ອາດຈະເກີດຂຶ້ນ: ການຖືກບອບຊ້ຳທາງດ້ານຈິດໃຈຊ້ຳຄືນໃນລະຫວ່າງການສຳພາດໂດຍເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ

ໃນຂະບວນການກຳນົດຕົວ ແລະ ການຊ່ວຍເຫຼືອນັ້ນ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຖືກຖາມຄຳຖາມ ຫຼື ໃຫ້ເລົ່າລາຍລະອຽດກ່ຽວກັບປະສົບການທີ່ພວກເຂົາຖືກຄ້າມະນຸດ. ສິ່ງເຫຼົ່ານີ້ເຮັດໃຫ້ຄວາມຕ້ອງການດ້ານຮ່າງກາຍ, ຈິດໃຈ ແລະ ສັງຄົມຕໍ່ກັບບຸກຄົນ ຜູ້ທີ່ຢູ່ພາຍໃຕ້ຄວາມກົດດັນຢູ່ແລ້ວ. ບາງຄົນອາດຈະມີບັນຫາເລື່ອງຄວາມກົດດັນຫຼັງຈາກມີຄວາມບອບຊ້ຳທາງດ້ານຈິດໃຈ ແລະ ການສູນເສຍຄວາມຈື່ຈຳ - ເຊິ່ງເປັນການຮ້ອງທຸກທີ່ພົບເຫັນໄດ້ເລື້ອຍໆກ່ຽວກັບການຄ້າມະນຸດ - ໂດຍທີ່ຜູ້ຖືກເຄາະຮ້າຍ ໄດ້ຖືກຄ້າມະນຸດເປັນເວລາດົນນານ, ຖືກຂູດຮີດ, ຖືກໃຊ້ຄວາມຮຸນແຮງ, ທໍລະມານ ແລະ ເຄື່ອນຍ້າຍແບບຊ້ຳໆ.[6]

### ຄຳແນະນຳ #6:

ຜູ້ຖືກເຄາະຮ້າຍຄວນຈະຖືກສຳພາດໂດຍເພດໃດໜຶ່ງກໍ່ໄດ້ທີ່ເຂົາເຈົ້າຮູ້ສຶກສະບາຍໃຈທີ່ຈະໃຫ້ສຳພາດນຳ.

### ຄຳແນະນຳ #7:

ດຳເນີນການຄັດແຍກ ຫຼື ສຳພາດໃນສະພາບແວດລ້ອມທີ່ປອດໄພ ແລະ ບໍ່ມີຄວາມກັງວົນໃດໆ ໂດຍເຈົ້າໜ້າທີ່ຕຳຫຼວດ/ເຈົ້າໜ້າທີ່ສອບສວນການເຂົ້າ-ອອກເມືອງ, ຜູ້ຊ່ຽວຊານດ້ານການແພດ/ຈິດຕະສັງຄົມ ທີ່ໄດ້ຮັບການຝຶກອົບຮົມສະເພາະດ້ານ ຫຼື ຄູ່ຮ່ວມງານຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ມີຄວາມຊ່ຽວຊານ.[7]

### ຄຳແນະນຳ #8:

ຮັບປະກັນວ່າຜູ້ຖືກເຄາະຮ້າຍໄດ້ສິດຕໍ່ກັບຄວາມເປັນສ່ວນຕົວ ແລະ ບໍ່ເປີດເຜີຍຕົວຕົນຂອງເຂົາເຈົ້າ ແລະ ແຈ້ງກ່ຽວກັບມາດຕະການສະເພາະແກ່ເຂົາເຈົ້າ ເພື່ອຮັບປະກັນການຮັກສາຄວາມລັບຕໍ່ກັບຂໍ້ມູນທີ່ໄດ້ສະໜອງໃຫ້.

### ຄຳແນະນຳ #9:

ເມື່ອມີການຮ້ອງຂໍການຍິນຍອມ ແລະ ຄວາມຍິນຍອມ (ສຳລັບເດັກ ແລະ ໄວໜຸ່ມ), ມັນເປັນສິ່ງທີ່ຮັບບໍ່ໄດ້ ຖ້າຫາກມີການກົດດັນໃຫ້ບຸກຄົນ ຫຼື ແມ້ແຕ່ບອກວ່າເປັນສິ່ງທີ່ດີທີ່ສຸດສຳລັບເຂົາເຈົ້າ. ມັນເປັນສິ່ງທີ່ສຳຄັນ ທີ່ຂໍ້ມູນ ແລະ ການຮ້ອງຂໍທີ່ກ່ຽວຂ້ອງກັບການຍິນຍອມ ໄດ້ຖືກນຳສະເໜີໃນລັກສະນະທີ່ເປັນກາງໂດຍສະເໜີໃຫ້ແຕ່ລະຄົນຄັດເລືອກເອງ ແລະ ສິ່ງທີ່ເຂົາເຈົ້າເລືອກນັ້ນ ຕ້ອງເປັນສິ່ງທີ່ຍອມຮັບ ໂດຍບໍ່ມີອັກຄະຕິໃດໆຕໍ່ກັບພວກເຂົາ.[8]

6 ອົງການ IOM. ການເບິ່ງແຍງຜູ້ຖືກຄ້າມະນຸດ, ຄຳແນະນຳສຳລັບຜູ້ສະໜອງການບໍລິການດ້ານສຸຂະພາບ. (ເຈນີວາ: 2009). https://publications.iom.int/system/files/pdf/ct_handbook.pdf

7 ອາຊຽນ.ຄຳແນະນຳໃນການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງຊາຍ (ຈາກາຕາ:2016). https://asean.org/wp-content/uploads/2012/05/FAASN_gender_8_email_REV.pdf ວັກທີ 3.3.1

8 Ibid.

## ຄຳແນະນຳ #10:

ພິຈາລະນາໃນການອະນຸຍາດໃຫ້ບຸກຄົນທີ່ຈະເປັນຜູ້ສະໜັບສະໜູນ ຫຼື ໝູ່ຂອງເຂົາເຈົ້າ ເຂົ້າຮ່ວມໃນເວລາການສຳພາດ ເມື່ອຜູ້ຖືກເຄາະຮ້າຍ ຫຼື ພະຍານ ໄດ້ຮ້ອງຂໍ.

## ຄຳແນະນຳ #11:

ນຳໃຊ້ຜູ້ແປພາສາ ທີ່ຖືກກວດສອບໂດຍອົງການຈັດຕັ້ງທີ່ກ່ຽວຂ້ອງ. ຫ້າມບໍ່ໃຫ້ບຸກຄົນໃດທີ່ມາຈາກຊຸມຊົນ (ລວມທັງໝູ່, ຄອບຄົວ, ເພື່ອນບ້ານ, ຜູ້ນຳຊຸມຊົນ ຫຼື ບຸກຄົນທີ່ກ່ຽວຂ້ອງ ທີ່ອາດຈະເປັນຜູ້ຂູດຮີດ) ມາເປັນຜູ້ແປພາສາ.[9]

## ຄຳແນະນຳ #12:

ຫຼີກລ້ຽງຄຳຖາມສຳພາດທີ່ບົ່ງບອກເຖິງການຕັດສິນໃຈທາງລົບ ຕໍ່ກັບການຕັດສິນໃຈຂອງຜູ້ຖືກເຄາະຮ້າຍ, ການກະທຳຂອງເຂົາເຈົ້າ ຫຼື ຄຳຖາມກ່ຽວກັບລັກສະນະຂອງເຂົາເຈົ້າ. ຄຳຖາມ ຄວນຖາມໃນຮູບແບບທີ່ສະໜັບສະໜູນ, ບໍ່ເປັນການຕັດສິນ ແລະ ຄຳຕອບຂອງຜູ້ຖືກເຄາະຮ້າຍ ຄວນຖືກຢືນຢັນດ້ວຍການສະໜັບສະໜູນ. [10]

## ຄຳແນະນຳ #13:

ຮັກສາໄລຍະຫ່າງ ແລະ ການປະຕິບັດທີ່ເປັນມືອາຊີບ, ແຕ່ໃນຂະນະດຽວກັນກໍສະແດງຄວາມເຫັນອົກເຫັນໃຈ ແລະ ເຮັດໃຫ້ຮູ້ສຶກສະບາຍໃຈ.[11] ເພື່ອເຮັດໃຫ້ຜູ້ຖືກເຄາະຮ້າຍໝັ້ນໃຈວ່າພວກເຂົາຈະບໍ່ຖືກຕຳນິ ພ້ອມທັງອະທິບາຍວ່າສິ່ງທີ່ເກີດຂຶ້ນຕໍ່ກັບພວກເຂົານັ້ນ ບໍ່ແມ່ນຄວາມຜິດຂອງພວກເຂົາ. ສິ່ງສຳຄັນແມ່ນຕ້ອງສື່ສານຕໍ່ກັບຜູ້ຖືກເຄາະຮ້າຍວ່າພວກເຂົາຈະບໍ່ມີຄວາມຮັບຜິດຊອບທາງອາຍາ ຫຼື ທາງສິນທຳ ຕໍ່ກັບການຖືກຫຼອກ ຫຼື ຕົວະຍົວະຫຼອກລວງໃນການເດີນທາງ ຫຼື ການມີສ່ວນຮ່ວມຕໍ່ກັບການກະທຳທີ່ເກີດຂຶ້ນ.[12]

## ຄຳແນະນຳ #14

ຖ້າຫາກວ່າບຸກຄົນໃດໜຶ່ງ ສະແດງອາການວິຕົກກັງວົນຢ່າງຮຸນແຮງ, ຄວນໂຈະ ຫຼື ຍົກເລີກການສຳພາດ ຈົນວ່າຈະສາມາດສືບຕໍ່ສຳພາດໄດ້. ມັນເປັນສິ່ງທີ່ສຳຄັນ ໃນເວລາທີ່ສຳພາດມີການຕິດຕາມການສື່ສານທີ່ບໍ່ແມ່ນຮູບແບບຂອງການປາກເວົ້າເຊັ່ນ: ສັນຍານຄວາມຢ້ານກົວ ຫຼື ຄວາມອິດເມື່ອຍ. ເມື່ອໃດກໍຕາມທີ່ມີເຫດຜົນໃຫ້ເຊື່ອວ່າຜູ້ທີ່ຖືກສຳພາດມີບັນຫາຈາກຄວາມບອບຊ້ຳຢ່າງຮຸນແຮງ, ຄວນຂໍຄວາມຊ່ວຍເຫຼືອຈາກນັກຈິດຕະວິທະຍາ ກ່ອນການດຳເນີນການຕໍ່ໄປ.[13]

---

9 ຂະບວນການບາຫຼີ. ຄຳແນະນຳດ້ານນະໂຍບາຍໃນການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ຄູ່ມືນຳສະເໜີສຳລັບຜູ້ວາງນະໂຍບາຍ ແລະ ຜູ້ປະຕິບັດຕົວຈິງ. (ບາງກອກ, ຫ້ອງການລະດັບພາກພື້ນ ເພື່ອສະໜັບສະໜູນຂະບວນການບາຫຼີ: 2015). https:// www.baliprocess.net/UserFiles/ baliprocess/File/ Policy%20 Guide%20on%20 Identifying%20 VIctims%20of%20 Trafficking.pdf

10 OSCE. ການສອບຖາມຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ຮູບແບບ The P.E.A.C.E. (ອຸສເບກິສຖານ: 2016). https://polis. osce.org/index.php/ questioning-victims-trafficking-peace-model

11 ອົງການ IOM. ຄູ່ມືຂອງອົງການ IOM ກ່ຽວກັບການຊ່ວຍເຫຼືອໂດຍກົງແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. (ເຈນີວາ: 2007). https://publications.iom. int/ system/files/pdf/iom_ handbook_ assistance.pdf

12 ອົງການ IOM (2007).

13 ອົງການ IOM (2007).

### ໄພອັນຕະລາຍທີ່ອາດຈະເກີດຂຶ້ນ: ການເຮັດໃຫ້ບໍ່ມີອຳນາດ, ການບັງຄັບໃຫ້ກຳນົດຕົວ ແລະ ການຊ່ວຍເຫຼືອ

ບໍ່ແມ່ນຜູ້ຖືກເຄາະຮ້າຍທຸກຄົນທີ່ຈະເຫັນວ່າຕົນເອງເປັນຜູ້ຖືກເຄາະຮ້າຍ. ຜູ້ຖືກເຄາະຮ້າຍບາງຄົນ ອາດຈະບໍ່ຢາກຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍ ແລະ ອາດຈະຫຼີກລ້ຽງ ຫຼື ຫຼົບໜີຈາກການກຳນົດຕົວ ດ້ວຍເຫດຜົນຕ່າງໆທີ່ແຕກຕ່າງກັນ.[14] ຂະບວນການກຳນົດຕົວຜູ້ຖືກເຄາະຮ້າຍທີ່ເປັນທາງການກ່ຽວຂ້ອງກັບການຊ່ວຍເຫຼືອທີ່ຜູ້ຖືກເຄາະຮ້າຍບໍ່ຕ້ອງການ ຫຼື ຢູ່ໃນຮູບແບບທີ່ເຂົາເຈົ້າບໍ່ຕ້ອງການຈະໄດ້ຮັບ (ຕົວຢ່າງ: ເພາະວ່າມັນອາດຈະຮຽກຮ້ອງໃຫ້ເຂົາເຈົ້າຕ້ອງຢູ່ໃນສູນພັກເຊົາຊົ່ວຄາວ ຫຼື ອາໄສຢູ່ແຍກຈາກຄອບຄົວຂອງເຂົາເຈົ້າ). ການກຳນົດຕົວອາດຈະເຮັດໃຫ້ເຂົາເຈົ້າຕ້ອງກັບຄືນປະເທດ ຫຼື ສະຖານທີ່ຕົ້ນກຳເນີດຂອງເຂົາເຈົ້າ, ເຊິ່ງເຂົາເຈົ້າປາຖະໜາທີ່ຈະຫຼີກລ້ຽງ, ໂດຍຫວັງວ່າຈະຊອກວຽກໃນຕົວເມືອງ ຫຼື ປະເທດປາຍທາງ.

14 ອີງການ IOM (2007).

15 ສົນທິສັນຍາ ACTIP ມາດຕາ 14 (9)

16 ຂະບວນການບາຫຼີ (2015).

**ຄຳແນະນຳ #15:**

ແຈ້ງໃຫ້ຜູ້ຖືກເຄາະຮ້າຍຮັບຊາບ ຕໍ່ກັບຈຸດປະສົງຂອງການເກັບກຳຂໍ້ມູນ ແລະ ວິທີການທີ່ຈະນຳໃຊ້ຂໍ້ມູນນັ້ນຢ່າງຄົບຖ້ວນ. ຜູ້ຖືກເຄາະຮ້າຍຄວນຮັບຮູ້ຕໍ່ກັບສິດຂອງເຂົາເຈົ້າໃນການເຂົ້າຮ່ວມ, ຢຸດຕິການສຳພາດໃນເວລາໃດກໍໄດ້.

**ຄຳແນະນຳ #16:**

ຮັບປະກັນວ່າຜູ້ຖືກເຄາະຮ້າຍທີ່ໄດ້ຮັບການກຳນົດຕົວ ໄດ້ຮັບຂໍ້ມູນທີ່ຈະແຈ້ງກ່ຽວກັບລັກສະນະຂອງການປົກປ້ອງ, ການຊ່ວຍເຫຼືອ ແລະ ການສະໜັບສະໜູນທີ່ເຂົາເຈົ້າມີສິດທີ່ຈະໄດ້ຮັບພາຍໃຕ້ກົດໝາຍພາຍໃນ ແລະ ສົນທິສັນຍາ ACTIP ພາຍໃນໄລຍະເວລາທີ່ເໝາະສົມ.[15]

**ຄຳແນະນຳ #17:**

ຜູ້ຖືກເຄາະຮ້າຍຄວນໄດ້ຮັບການສະທ້ອນຄືນ ແລະ ການຟື້ນຟູ ໃນເວລາທີ່ໄດ້ຮັບການສະໜັບສະໜູນໂດຍບໍ່ມີເງື່ອນໄຂ (ລວມທັງທີ່ພັກເຊົາຊົ່ວຄາວ, ການປິ່ນປົວທາງການແພດ, ການຊ່ວຍເຫຼືອທາງດ້ານກົດໝາຍ, ການໃຫ້ຄຳປຶກສາ, ການສື່ສານກັບຄອບຄົວຂອງເຂົາເຈົ້າ ແລະ ອື່ນໆ) ໂດຍມີເປົ້າໝາຍເພື່ອໃຫ້ເຂົາເຈົ້າມີເວລາ ແລະ ພື້ນທີ່ໃນການຕັດສິນໃຈຕໍ່ກັບທາງເລືອກຂອງເຂົາເຈົ້າ, ລວມທັງ ເຂົາເຈົ້າຈະໃຫ້ຄວາມຮ່ວມມືກັບໜ່ວຍງານຍຸຕິທຳທາງອາຍາໃນການດຳເນີນຄະດີຕໍ່ກັບຜູ້ຂູດຮີດເຂົາເຈົ້າ ຫຼື ບໍ່.[16]

## ໄພອັນຕະລາຍທີ່ອາດຈະເກີດຂຶ້ນ: ການຈຳແນກ, ສັງຄົມປະນາມ ແລະ ຖືກປະຕິເສດຈາກຄອບຄົວ ແລະ ຊຸມຊົນ

ຜູ້ຖືກເຄາະຮ້າຍອາດຈະມີປະສົບການໃນການຖືກຈຳແນກມາແລ້ວ ທີ່ເປັນຜົນມາຈາກສັນຊາດ, ຊົນເຜົ່າ, ສາສະໜາ, ເພດ, ອາຍຸ ຫຼື ຜູ້ທີ່ຖືກຂູດຮີດທາງເພດ ອາດຈະຮູ້ສຶກອັບອາຍ ແລະ ບໍ່ເຕັມໃຈທີ່ຈະແບ່ງປັນເລື່ອງຂອງເຂົາເຈົ້າ ເພາະຢ້ານທີ່ຈະຖືກຈຳແນກ, ສັງຄົມປະນາມ ເພີ່ມເຕີມ ແລະ ຖືກປະຕິເສດຈາກຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າ.[17] ໃນກໍລະນີທີ່ຄວາມຮຸນແຮງ ແລະ ການຂູດຮີດຖືເປັນເລື່ອງທຳມະດາໃນການປະຕິບັດທາງວັດທະນະທຳ, ຮີດຄອງປະເພນີ ແລະ ສາສະໜາເຊັ່ນ: ການແຕ່ງງານກ່ອນໄວ, ການແຕ່ງງານໃນໄວເດັກ, ການບັງຄັບແຕ່ງງານ ແລະ ການແຕ່ງງານຊົ່ວຄາວນັ້ນ, ຜູ້ຖືກເຄາະຮ້າຍ ມີຄວາມເປັນໄປໄດ້ໜ້ອຍທີ່ຈະປະສົບ ແລະ ອາດຈະບໍ່ຄິດວ່າພວກເຂົາຈະໄດ້ຮັບການຊ່ວຍເຫຼືອໃນການເຂົ້າເຖິງຄວາມຍຸຕິທຳ.[18]

### ຄຳແນະນຳ #18:

ຂະບວນການກຳນົດຕົວ ຈະຕ້ອງລວມເອົາທຸກຄົນ ແລະ ອະນຸຍາດໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທຸກຄົນ ໄດ້ຖືກກຳນົດຕົວ ຊຶ່ງລວມມີແມ່ຍິງ, ເດັກຍິງ, ຜູ້ຊາຍ ແລະ ເດັກຊາຍ. ທັດສະນະຄະຕິດ້ານລົບ, ອັກຄະຕິ ແລະ ຄວາມລຳອຽງໃດໆ ບໍ່ຄວນກໍ່ໃຫ້ເກີດພຶດຕິກຳທີ່ເຮັດໃຫ້ບຸກຄົນທີ່ຖືກສຳພາດມີຄວາມຮູ້ສຶກດ້ອຍກວ່າ.[19] ເຈົ້າໜ້າທີ່ຜູ້ຕອບໂຕ້ດ່ານໜ້າ ຫຼື ບຸກຄົນທີ່ສະໜັບສະໜູນ ຄວນປະເມີນຕົນເອງວ່າພວກເຂົາມີທັດສະນະຄະຕິດ້ານລົບ, ອັກຄະຕິ, ຄວາມລຳອຽງ ຫຼື ຄວາມຮູ້ສຶກກຽດຊັງເຊື້ອຊາດຕໍ່ກັບຜູ້ຖືກເຄາະຮ້າຍ ຫຼື ບໍ່.[20] ພວກເຂົາຄວນພິຈາລະນາວ່າພວກເຂົາຮູ້ສຶກແນວໃດກ່ຽວກັບບຸກຄົນທີ່ມີສ່ວນຮ່ວມໃນການຄ້າມະນຸດປະເພດແຮງງານທົ່ວໄປ (ຕົວຢ່າງ: ການບໍລິການທາງເພດ, ການຂໍທານ, ການເຮັດວຽກໃນຄົວເຮືອນ), ບຸກຄົນທີ່ຕົກເປັນຜູ້ຖືກເຄາະຮ້າຍປະເພດຂອງການລ່ວງລະເມີດ (ຕົວຢ່າງ: ການລ່ວງລະເມີດທາງເພດ), ບຸກຄົນທີ່ອາດຈະມີບັນຫາຈາກການມີກາບາບ ຫຼື ການເຈັບປ່ວຍ ຫຼື ການບາດເຈັບ (ຕົວຢ່າງ: ບຸກຄົນທີ່ມີເຊື້ອພະຍາດ HIV, ບຸກຄົນທີ່ມີຄວາມພິການທາງດ້ານຮ່າງກາຍ ຫຼື ຄົນພິການ) ແຮງງານເຄື່ອຍຍ້າຍ, ຜູ້ໃຊ້ຢາເສບຕິດ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ, ບຸກຄົນທີ່ກຳນົດຕົວເອງວ່າເປັນກຸ່ມຄົນຫຼາກຫຼາຍທາງເພດ (LGBTQI) ແລະ ຜູ້ທີ່ມີສັງຄົມ, ວັດທະນະທຳ ຫຼື ສາສະໜາ ຫຼູ ການປະຕິບັດທີ່ແຕກຕ່າງຈາກຕົນເອງ.

17 ການປະສານງານລະຫວ່າງໜ່ວຍງານເພື່ອຕ້ານການຄ້າມະນຸດ (ICAT). ຮ່າງການສົ່ງຂໍ້ສະເໜີແນະນຳທົ່ວໄປຂອງ CEDAW ກ່ຽວກັບການຄ້າແມ່ຍິງ ແລະ ເດັກ ໃນບໍລິບົດຂອງແຮງງານເຄື່ອນຍ້າຍໃນທົ່ວໂລກ (n.d.) http://icat.network/sites/default/files/publications/documents/ICAT%20submission%20to%20CEDAW.pdf

18 ອີງການ UNODC. ຊຸດເຄື່ອງມືໃນການເຊື່ອມສານເອົາສິດທິມະນຸດ ແລະ ຄວາມສະເໝີພາບດ້ານຍິງ-ຊາຍ ເຂົ້າໃນການເຊື່ອມສານຍຸຕິທຳທາງອາຍາ ເພື່ອແກ້ໄຂບັນຫາການຄ້າມະນຸດ ແລະ ການລັກລອບເຂົ້າ-ອອກເມືອງ. (UNODC & IOM, ວຽນນາ: 2021) https://www.unodc.org/documents/human-trafficking/GLO-ACTII/UNODC_Toolkit_for_mainstreaming_Human_Rights_and_Gender_Equality_February_2021.pdf

19 ດັດແກ້ມາຈາກອີງການ IOM, ເຕັກນິກການສຳພາດ ແລະ ການກຳນົດຕົວຜູ້ຖືກເຄາະຮ້າຍ (2006).

20 ອີງການ IOM (2007).

## ໄພອັນຕະລາຍທີ່ອາດຈະເກີດຂຶ້ນ: ຂາດການເຂົ້າເຖິງການປົກປ້ອງ ແລະ ທີ່ພັກເຊົາທີ່ປອດໄພ

ຜູ້ຖືກເຄາະຮ້າຍທີ່ໄດ້ຖືກກຳນົດຕົວ ອາດຈະມີຄວາມຢ້ານກົວຕໍ່ກັບການດຳລົງຊີວິດ ແລະ ຄວາມປອດໄພຂອງເຂົາເຈົ້າ. ປະສົບການທີ່ມີຄວາມບອບຊ້ຳທາງດ້ານຈິດໃຈຊ້ຳໄປຊ້ຳມາ ແລະ ເປັນເວລາດົນ ລວມທັງ ການຖືກລ່ວງລະເມີດທາງດ້ານຮ່າງກາຍ, ທາງເພດ, ທາງດ້ານຈິດໃຈ ແລະ ຄວາມຮຸນແຮງ, ການຖືກຈຳກັດສິດ ແລະ ການທໍລະມານ. ທີ່ພັກເຊົາທີ່ ມີຄວາມປອດໄພ ຫຼື ທີ່ພັກຊົ່ວຄາວ ສ່ວນໃຫຍ່ຈະເປັນຫົນທາງໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນການເຂົ້າເຖິງການບໍລິການທີ່ຈຳເປັນ ລວມທັງ ການຊ່ວຍເຫຼືອ ທາງດ້ານການແພດ ແລະ ການຟື້ນຟູຄືນຈາກປະສົບການທີ່ຖືກຄ້າມະນຸດຂອງເຂົາເຈົ້າ. ເຖິງຢ່າງໃດກໍຕາມ, ການເຂົ້າເຖິງການປົກປ້ອງ ແລະ ສູນພັກເຊົາ ແລະ ທີ່ພັກເຊົາທີ່ເໝາະສົມ ຍັງເປັນສິ່ງທ້າທາຍໃນຫຼາຍໆປະເທດ.[21]

### ຄຳແນະນຳ #19:

ສົ່ງຕໍ່ຜູ້ທີ່ໄດ້ຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄປຫາສູນພັກເຊົາ ຫຼື ທີ່ພັກເຊົາຊົ່ວຄາວທີ່ມີຄວາມປອດໄພ ໂດຍທັນທີ. ຜູ້ຖືກເຄາະຮ້າຍຄວນຈະຖືກສົ່ງຕໍ່ໂດຍໄວ ໃຫ້ແກ່ໜ່ວຍງານທີ່ມີໜ້າທີ່ຮັບຜິດຊອບ ເພື່ອໃຫ້ໄດ້ຮັບການສະໜັບສະໜູນ ແລະ ການຊ່ວຍເຫຼືອສະເພາະດ້ານ.[22]

### ຄຳແນະນຳ #20:

ສຳລັບຜູ້ຖືກເຄາະຮ້າຍທີ່ເປັນເພດຍິງ ທີ່ມີປະສົບການຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ເພດ, ຕ້ອງຮັບປະກັນວ່າມີການສົ່ງຕໍ່ເຂົາເຈົ້າ ເພື່ອຂໍການຊ່ວຍເຫຼືອສະເພາະດ້ານຄວາມຮຸນແຮງຕໍ່ແມ່ຍິງ (VAW)

### ຄຳແນະນຳ #21:

ແມ່ຍິງທີ່ຖືພາ ແລະ ໃຫ້ນົມລູກ ແລະ ແມ່ທີ່ມາກັບເດັກໄວໜຸ່ມ ຄວນຈະແຍກສະຖານທີ່ພັກເຊົາຢ່າງເໝາະສົມ, ໄດ້ຮັບການເບິ່ງແຍງໂດຍເຈົ້າໜ້າທີ່ທີ່ເປັນເພດຍິງ ແລະ ໃຫ້ຢູ່ໃນການຄຸ້ມຄອງແຍກອອກຈາກຜູ້ຊາຍ.[23]

### ຄຳແນະນຳ #22:

ໃນກໍລະນີທີ່ເປັນໄປໄດ້, ຈັດຫາທາງເລືອກໃຫ້ແກ່ຜູ້ຖືກເຄາະຮ້າຍ ເພື່ອໃຫ້ໄດ້ຮັບການບໍລິການນອກຈາກລະບົບສູນພັກເຊົາທີ່ເປັນທາງການ. ອາດຈະເປັນບ່ອນພັກເຊົາທີ່ປອດໄພ ລວມມີການເຊົ່າເຮືອນ ຫຼື ອາພາດເມັ້ນ ຫຼື ທີ່ພັກເຊົາທີ່ຕັ້ງຢູ່ໃນຊຸມຊົນ.[24]

21 ການຕ້ານການເປັນຂ້າທາດລະຫວ່າງປະເທດ (2002).

22 ຄູ່ມືກ່ຽວກັບການເອົາໃຈໃສ່ບົດບາດຍິງຊາຍໃນອາຊຽນ ແຖວທີ 3.3.1

23 ອີງການ UNICEF, UNODC, UN Women. ພາລະບົດບາດຂອງຜູ້ບັງຄັບໃຊ້ກົດໝາຍ ໃນການປົກປ້ອງແມ່ຍິງ ແລະ ເດັກທີ່ຢູ່ລະຫວ່າງວິກິດການດ້ານສາທະລະນະສຸກ, ລວມທັງ COVID-19. ເບິ່ງທີ່ https://asiapacific.unwomen.org/-/media/field%20office%20eseasia/docs/misc/2020/09/poster_%20law%20enforcement%20women%20and%20girls%20covid%2019_%20burmese.pdf?la=en&vs=5708

24 McAdam, M. ອິດສະຫລະພາບໃນການເຄື່ອນຍ້າຍຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ກົດໝາຍ, ນະໂຍບາຍ ແລະ ການປະຕິບັດໃນພາກພື້ນອາຊຽນ. ບັນທຶກຂໍ້ມູນນີ້ໄດ້ຮັບການສະໜັບສະໜູນໂດຍລັດຖະບານປະເທດອົດສະຕຣາລີ. ແຜນງານ ASEAN-ACT. (ບາງກອກ, 2020) https://aseanactpartnershiphub.com/resources/asean-shelter-study-mcadam-freedom-of-movement-for-victims-of-trafficking-final/

## ໄພອັນຕະລາຍທີ່ອາດຈະເກີດຂຶ້ນ: ການບັງຄັບໃຫ້ກັບຄືນປະເທດ/ສະຖານທີ່ຕົ້ນກຳເນີດ

ການສົ່ງຜູ້ຖືກເຄາະຮ້າຍກັບຄືນບ່ອນທີ່ເປັນຕົ້ນກຳເນີດ ອາດຈະນຳມາເຊິ່ງຄວາມສ່ຽງ ທີ່ຈະເຮັດໃຫ້ພວກເຂົາກັບໄປສູ່ສະຖານະການເກົ່າ ທີ່ເຮັດໃຫ້ເຂົາເຈົ້າຖືກຄ້າມະນຸດ ຫຼື ໃນສະຖານທີ່ ທີ່ມີສະຖານະການທີ່ຈຳກັດຫຼາຍ.[25] ພວກເຂົາອາດຈະຖືກໃຊ້ຄວາມຮຸນແຮງ ຫຼື ຖືກຂົ່ມຂູ່ຈາກຜູ້ຄ້າມະນຸດ - ໂດຍສະເພາະ ຖ້າພວກເຂົາໃຫ້ຄວາມຮ່ວມມືກັບໜ່ວຍງານຍຸຕິທຳທາງອາຍາ ຫຼື ເປັນໜີ້ທີ່ບໍ່ສາມາດຈ່າຍຄືນໄດ້.[26]

**ຄຳແນະນຳ #23:**

ຮັບປະກັນວ່າຜູ້ຖືກເຄາະຮ້າຍ ທີ່ຕ້ອງການສືບຕໍ່ຢູ່ໃນປະເທດນັ້ນ ໄດ້ເຂົ້າເຖິງທີ່ປຶກສາທາງດ້ານກົດໝາຍອິດສະລະ ເພື່ອຮັບປະກັນຄວາມປອດໄພ ຫຼື ການກັບຄືນປະເທດໂດຍສະໝັກໃຈ.[27] ເຄົາລົບສິດທິຂອງຜູ້ຖືກຄ້າມະນຸດ, ອົງການຕ່າງໆຕ້ອງຮັບປະກັນວ່າການສົ່ງຜູ້ຖືກເຄາະຮ້າຍກັບຄືນປະເທດ ເຮັດຂຶ້ນດ້ວຍຄວາມສະໝັກໃຈ ແລະ ອີງໃສ່ການຮຽກຮ້ອງຂອງຜູ້ຖືກເຄາະຮ້າຍ ແລະ ເທົ່າທີ່ເປັນໄປໄດ້ ຕ້ອງໄດ້ຮັບຄວາມຍິນຍອມຢ່າງເປັນລາຍລັກອັກສອນ.[28] ຕ້ອງໄດ້ອະນຸມັດໃບອະນຸຍາດທີ່ພັກເຊົາຊົ່ວຄາວດ້ວຍເຫດຜົນທາງດ້ານສັງຄົມ ຫຼື ດ້ານມະນຸດສະທຳທີ່ອາດຈະກ່ຽວຂ້ອງ. ຕົວຢ່າງ: ການເຄົາລົບຫຼັກການບໍ່ຖືກສົ່ງກັບ, ການບໍ່ສາມາດຮັບປະກັນຄວາມປອດໄພໃນການສົ່ງກັບຄືນ ແລະ ຄວາມສ່ຽງທີ່ຈະຖືກຄ້າມະນຸດຊ້ຳຄືນອີກ.

25 ອົງການ UNODC. (2009)

26 ອາຊຽນ. ການທົບທວນກົດໝາຍ, ນະໂຍບາຍ ແລະ ການປະຕິບັດໃນລະດັບພາກພື້ນໃນອາຊຽນທີ່ກ່ຽວຂ້ອງກັບການກຳນົດຕົວ, ການຄຸ້ມຄອງ ແລະ ການປະຕິບັດຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກ. (ຈາກາຕ້າ: 2016) https://asean.org/?static_post=asean-handbook-on-international-legal-cooperation-in-trafficking-in-persons-cases-3

27 ການທົບທວນໃນພາກພື້ນອາຊຽນ (2016) ຂໍ້ສະເໜີແນະນຳ 7.2

28 ອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ, ມາດຕາ 8.

## ການຕອບໂຕ້ດ້ານຄວາມຍຸຕິທຳທາງອາຍາ: ໄພອັນຕະລາຍທີ່ອາດຈະເກີດຂຶ້ນ ແລະ ຄຳແນະນຳ ສຳລັບ DNH

ສິດທິ ແລະ ຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍເປັນຫົວໃຈສຳຄັນຂອງຂະບວນການຍຸຕິທຳທາງອາຍາທັງໝົດ. ເຖິງຢ່າງໃດກໍຕາມ, ຫຼາຍໆຄັ້ງ ທີ່ຜູ້ຖືກເຄາະຮ້າຍມັກຈະຖືວ່າເປັນສ່ວນໜຶ່ງຂອງຫຼັກຖານໃນຂະບວນການຍຸຕິທຳທາງອາຍາ ທີ່ສຸມໃສ່ການດຳເນີນຄະດີຕໍ່ກັບຜູ້ກະທຳຜິດ. ຄຳແນະນຳ ແລະ ຂັ້ນຕອນໃນລະດັບພາກພື້ນອາຊຽນ ຢັ້ງຢືນວ່າ *ຜູ້ຖືກເຄາະຮ້າຍທຸກຄົນ ທີ່ໄດ້ເຂົ້າຮ່ວມໃນການສືບສວນ-ສອບສວນ ຫຼື ການດຳເນີນຄະດີຕໍ່ກັບຜູ້ທີ່ຂູດຮີດເຂົາເຈົ້າ ຄວນຈະໄດ້ຮັບການປົກປ້ອງ, ສະໜັບສະໜູນ ແລະ ຊ່ວຍເຫຼືອຕາມກົດໝາຍຢ່າງພຽງພໍ ໃນໄລຍະທີ່ເຂົາເຈົ້າມີສ່ວນຮ່ວມກັບການດຳເນີນຄະດີອາຍາ.* ບັນດາປະເທດຂອງອາຊຽນ ຕ້ອງຮັບປະກັນວ່າຜູ້ຖືກເຄາະຮ້າຍຮັບຮູ້ການປຽວຍາທີ່ມີຢູ່ ແລະ ກຳນົດໄວ້ໃນຂັ້ນຕອນ ແລະ ກົດໝາຍ ເພື່ອຮັບປະກັນຄວາມເປັນໄປໄດ້ ທີ່ຈະໄດ້ຮັບຄ່າຊົດເຊີຍ.

### ໄພອັນຕະລາຍທີ່ອາດຈະເກີດຂຶ້ນ: ຂາດການໄດ້ຮັບຄວາມຍິນຍອມ

ການໄດ້ຮັບຄວາມຍິນຍອມຈາກຜູ້ຖືກເຄາະຮ້າຍຈາກການຄ້າມະນຸດເປັນສິ່ງທີ່ຫຍຸ້ງຍາກ. ທຳອິດແມ່ນຄວາມແຕກຕ່າງດ້ານພາສາ, ວັດທະນະທຳ ແລະ ເສດຖະກິດສັງຄົມເປັນອຸປະສັກທີ່ສຳຄັນ. ນອກນັ້ນ, ບາງຄົນອາດຈະຖືກສັນຍາວ່າຈະໄດ້ຮັບການສະໜັບສະໜູນທາງດ້ານການເງິນ, ການປົກປ້ອງ, ຄ່າຊົດເຊີຍ, ພັກຢູ່ໃນທີ່ພັກເຊົາໄລຍະສັ້ນ ຫຼື ອື່ນໆ ເພື່ອໃຫ້ໄດ້ຮັບການຮ່ວມມືຈາກເຂົາເຈົ້າໃນການດຳເນີນຄະດີຕາມກົດໝາຍ.

**ຄຳແນະນຳ #1:**

ຂໍຄວາມຍິນຍອມໂດຍສະໝັກໃຈ ເພື່ອໃຫ້ເຂົ້າຮ່ວມໃນຂະບວນການ ແລະ ອະນຸຍາດໃຫ້ຜູ້ຖືກເຄາະຮ້າຍປະຕິເສດການປົກປ້ອງ ແລະ ການຊ່ວຍເຫຼືອໄດ້ຕະຫຼອດເວລາ ໃນໄລຍະຂະບວນການຍຸຕິທຳທາງອາຍາ.

**ຄຳແນະນຳ #2:**

ແຈ້ງຜູ້ຖືກເຄາະຮ້າຍກ່ອນ ແລະ ໃນໄລຍະການມີສ່ວນຮ່ວມໃນຂະບວນການຍຸຕິທຳທາງອາຍາ, ລະບົບຍຸຕິທຳທາງອາຍາ, ຖານະທາງດ້ານກົດໝາຍຂອງເຂົາເຈົ້າ, ສິດທິຂອງເຂົາເຈົ້າ, ທາງເລືອກຂອງເຂົາເຈົ້າ, ການບໍລິການທີ່ມີຢູ່ ແລະ ປັດໄຈທາງດ້ານເວລາໃນຂະບວນການພິຈາລະນາຄະດີ ດ້ວຍນ້ຳສຽງທີ່ບໍ່ເປັນການຂົ່ມຂູ່ ແລະ ໃນພາສາທີ່ເຂົາເຈົ້າເຂົ້າໃຈ. ການພິຈາລະນາຄວນຄຳນຶງເຖິງສັນຊາດ, ຊົນເຜົ່າ, ອາຍຸ, ຄວາມພິການ, ເພດ ແລະ ອື່ນໆຂອງເຂົາເຈົ້ານຳ.[29]

**ຄຳແນະນຳ #3:**

ຈັດໃຫ້ມີໄລຍະເວລາໃນການສະທ້ອນຄືນ ແລະ ການຟື້ນຟູ ໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ໄດ້ຮັບການກຳນົດຕົວ ເພື່ອເຮັດການຕັດສິນໃຈກ່ຽວກັບການຮ່ວມມື ແລະ ຊ່ວຍໃຫ້ຜູ້ຖືກເຄາະຮ້າຍຫຼີກລ້ຽງການຕົກລົງທີ່ຈະ ແກ້ໄຂ ຄະດີຂອງເຂົາເຈົ້າຢ່າງບໍ່ເປັນທາງການ ເພື່ອທີ່ເຂົາເຈົ້າຈະສາມາດກັບໄປໃຊ້ຊີວິດແບບທຳມະດາ. ການກະກຽມດັ່ງກ່າວ ຍ່ອມຈະມີການປານີປານອມ ເພາະວ່າພວກເຂົາສິ່ງເສີມການສໍ້ລາດບັງຫຼວງ ແລະ ຂະຫຍາຍເວລາທີ່ຈະບໍ່ລົງໂທດຜູ້ທີ່ຂູດຮີດເຂົາເຈົ້າ.[30]

29 ແຜນປະຕິບັດງານຂອງອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ພາກ B (g); ຄູ່ມືກ່ຽວກັບການເອົາໃຈໃສ່ບົດບາດຍິງຊາຍ ຂອງອາຊຽນ ແຖວທີ 3.6.4; ການທົບທວນລະດັບພາກພື້ນ ຂອງ ACWC ຂໍ້ສະເໜີແນະນຳ 4.4.

30 ເຄື່ອງມືຕິວແບບໃນການຈັດຕັ້ງປະຕິບັດຂອງຜູ້ປະຕິບັດງານ ສຳລັບຄຳແນະນຳ ແລະ ຂັ້ນຕອນປະຕິບັດຂອງ ACWC ລະດັບພາກພື້ນ ເພື່ອຕອບສະໜອງຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ (2019).

## ໄພອັນຕະລາຍທີ່ອາດຈະເກີດຂຶ້ນ: ຖືກບັງຄັບ ຫລື ນາບຂູ່ໃນການໃຫ້ການ ຕໍ່ກັບ ຜູ້ທີ່ຂູດຮີດເຂົາເຈົ້າ

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຫຼາຍຄົນ ບໍ່ເຫັນຜົນປະໂຫຍດທີ່ປະຈັກຕາໃນການເຂົ້າຮ່ວມຂະບວນການຍຸຕິທຳທາງອາຍາ ແຕ່ອາດຈະຖືກຂົ່ມຂູ່ ຫຼື ຖືກບັງຄັບໃຫ້ເຂົ້າຮ່ວມໂດຍເຈົ້າໜ້າທີ່ສອບສວນ, ໄອຍະການ, ທະນາຍຄວາມ ຫຼື ຜູ້ໃຫ້ບໍລິການອື່ນໆ. ຄວາມຢ້ານກົວຂອງເຂົາເຈົ້າທີ່ຈະຖືກສົ່ງກັບບ້ານ ເພື່ອປະເຊີນໜ້າກັບການຖືກສັງຄົມປະນາມ ແລະ ຖືກປະຕິເສດຈາກຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າ ອາດຈະເປັນແຮງຈູງໃຈ.

### ຄຳແນະນຳ #4:

ຕັດສິນໃຈຮ່ວມກັບຜູ້ຖືກເຄາະຮ້າຍວ່າສາມາດນຳໃຊ້ທາງເລືອກອື່ນໄດ້ ຫຼື ບໍ່ ເຊັ່ນ: ການນຳໃຊ້ ຫຼັກຖານປະກອບ ແລະ ຜູ້ຊ່ຽວຊານ/ພະຍານອື່ນໆ ແທນຄຳໃຫ້ການ ແລະ ການໃຫ້ການຂອງຜູ້ຖືກເຄາະຮ້າຍ ຖ້າຫາກວ່າສຸດທ້າຍແລ້ວມັນຈະກໍ່ໃຫ້ເກີດໄພອັນຕະລາຍຕໍ່ກັບຜູ້ຖືກເຄາະຮ້າຍ. ການນຳໃຊ້ຫຼັກຖານປະກອບຍັງໝາຍເຖິງຄະດີບໍ່ໄດ້ເອື່ອຍອີງໃສ່ແຕ່ຄຳໃຫ້ການຂອງຜູ້ຖືກເຄາະຮ້າຍພຽງຢ່າງດຽວ ແລະ ສາມາດດຳເນີນການຕໍ່ໄດ້ ຖ້າຫາກຜູ້ຖືກເຄາະຮ້າຍບໍ່ສາມາດ ຫຼື ບໍ່ຕ້ອງການທີ່ຈະໃຫ້ການ.

### ຄຳແນະນຳ #5:

ຫຼີກລ້ຽງທີ່ຈະປະຕິບັດຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນຖານະທີ່ເປັນແຫຼ່ງຂໍ້ມູນຫຼັກຖານພຽງຢ່າງດຽວ. ສິ່ງນີ້ເປັນວິທີການໄລຍະສັ້ນ ທີ່ອາດຈະບໍ່ປະສົບຜົນສຳເລັດ. ຜູ້ຖືກເຄາະຮ້າຍ ແລະ ພະຍານ ມີແນວໂນ້ມຈະໃຫ້ຄວາມຮ່ວມມືໃນຂະບວນການສືບສວນ-ສອບສວນ ແລະ ດຳເນີນຄະດີ ຖ້າພວກເຮົາຮູ້ສຶກມີຄວາມປອດໄພ ແລະ ເຂົ້າໃຈຄວາມຕ້ອງການຂອງເຂົາເຈົ້າ ແລະ ແກ້ໄຂຄວາມຕ້ອງການນັ້ນຢ່າງເໝາະສົມ.[31]

### ຄຳແນະນຳ #6:

ແຈ້ງຜູ້ຖືກເຄາະຮ້າຍວ່າເຂົາເຈົ້າມີສິດທີ່ຈະນຳສະເໜີ ແລະ ສະແດງຄວາມຄິດເຫັນຂອງເຂົາເຈົ້າໃນໄລຍະການດຳເນີນຄະດີຕາມກົດໝາຍ.[32]

31 ຫ້ອງການຂອງຄະນະກຳມາທິການໃຫຍ່ເພື່ອສິດທິມະນຸດ. ຄູ່ມື ແລະ ຫຼັກການກ່ຽວກັບຂໍ້ສະເໜີແນະນຳ ກ່ຽວກັບສິດທິມະນຸດ ແລະ ການຄ້າມະນຸດ. (n.d.) https://www.ohchr.org/Documents/Publications/Traffickingen.pdf

32 APA ພາກທີ B(g). ອານຸສັນຍາສາກົນວ່າດ້ວຍການຕ້ານການຄ້າມະນຸດ, ມາດຕາ 6(2)(b).

## ໄພອັນຕະລາຍທີ່ອາດຈະເກີດຂຶ້ນ: ການສູນເສຍຄວາມເປັນສ່ວນຕົວ ແລະ ການບໍ່ລະບຸຕົວຜູ້ຖືກເຄາະຮ້າຍ

ການເປັນສ່ວນໜຶ່ງໃນຂະບວນຍຸຕິທໍາທາງອາຍາ ໄດ້ເພີ່ມຄວາມສ່ຽງທີ່ຈະລະເມີດຄວາມເປັນສ່ວນຕົວ ແລະ ການບໍ່ລະບຸຕົວ/ບໍ່ເປີດເຜີຍຕົວຕົນຂອງຜູ້ຖືກເຄາະຮ້າຍ. ການສູນເສຍຄວາມເປັນສ່ວນຕົວ ແລະ ການບໍ່ລະບຸຕົວ/ບໍ່ເປີດເຜີຍຕົວຕົນຂອງພວກເຂົາເຈົ້າ ຈະມີຜົນກະທົບຕໍ່ກັບຄວາມປອດໄພຂອງພວກເຂົາເຈົ້າ ເນື່ອງຈາກຈະມີຄວາມສ່ຽງຈາກການຖືກແກ້ແຄ້ນຈາກຜູ້ຄ້າມະນຸດ; ມັນອາດຈະນໍາໄປສູ່ຄວາມອັບອາຍ, ການຖືກປະຕິເສດ ແລະ ຖືກລົງໂທດໂດຍຄອບຄົວ ຫຼື ຊຸມຊົນຂອງເຂົາເຈົ້າ.

### ຄໍາແນະນໍາ #7:

ຖ້າຜູ້ຖືກເຄາະຮ້າຍຕັດສິນໃຈທີ່ຈະເຂົ້າຮ່ວມໃນການດໍາເນີນຄະດີຜູ້ທີ່ຄ້າມະນຸດເຂົາເຈົ້າ, ຕ້ອງປົກປ້ອງຄວາມເປັນສ່ວນຕົວ ແລະ ຮັກສາຄວາມລັບຂອງເຂົາເຈົ້າຕະຫຼອດໄລຍະຂະບວນການດໍາເນີນຄະດີ. ຕົວຢ່າງ: ບໍ່ແບ່ງປັນລາຍລະອຽດຄະດີໂດຍບໍ່ໄດ້ຮັບອະນຸຍາດຈາກເຂົາເຈົ້າ ແລະ ຂໍ້ມູນໃດໆ ທີ່ອາດຈະເປີດເຜີຍຕົວຕົນ ຫຼື ທີ່ຢູ່ຂອງຜູ້ຖືກເຄາະຮ້າຍ ເຊິ່ງຕ້ອງໄດ້ປະຕິບັດການຮັກສາຄວາມລັບຢ່າງເຂັ້ມງວດທີ່ສຸດ.[33]

### ຄໍາແນະນໍາ #8:

ນໍາໃຊ້ມາດຕະການປົກປ້ອງໃນສານ ເຊັ່ນ: ແຍກຫ້ອງລໍຖ້າ, ທາງເຂົ້າສ່ວນຕົວ, ການບັນທຶກຄໍາໃຫ້ການ, ນາມແຝງ, ການປະຊຸມສານແບບປິດລັບ, ການບິບສຽງ/ວິດີໂອ, ແວ່ນແຍງດ້ານດຽວ, ໜ້າຈໍ ຫຼື ຜ້າກັ້ງ ເພື່ອຮັບປະກັນບໍ່ໃຫ້ມີການເປີດເຜີຍຕົວຕົນຂອງຜູ້ຖືກເຄາະຮ້າຍ. ອະທິບາຍໃຫ້ຜູ້ຖືກເຄາະຮ້າຍຊາບວ່າພວກເຂົາຈະດໍາເນີນການໃຫ້ການແບບໃດ ແລະ ຕົວຕົນຂອງພວກເຂົາຈະຖືກເປີດເຜີຍສໍ່າໃດ ຖ້າທັງໝົດນີ້ ຈະຖືກເປີດເຜີຍຕໍ່ຈໍາເລີຍ ແລະ ສາທາລະນະ. ໃຫ້ເວລາແກ່ຜູ້ຖືກເຄາະຮ້າຍຢ່າງພຽງພໍ ເພື່ອໃຫ້ການ ແລະ ບໍ່ໃຫ້ມີການລົບກວນ ຫຼື ເລັ່ງໃຫ້ພວກເຂົາເຈົ້າທົບທວນເຫດການທີ່ເກີດຂຶ້ນຕໍ່ກັບພວກເຂົາເຈົ້າຄືນ.

### ຄໍາແນະນໍາ #9:

ຫ້າມບໍ່ໃຫ້ສື່ເຂົ້າຮ່ວມໃນການພິຈາລະນາຄະດີຂອງສານ ຫຼື ພະຍາຍາມທີ່ຈະເອົາຄໍາໃຫ້ການ ຫຼື ບັນທຶກພາບ ຢູ່ນອກຫ້ອງປະຊຸມສານ.

33 ຕາມທີ່ໄດ້ກໍານົດໄວ້ໃນ ຄູ່ມືຂອງຜູ້ປະຕິບັດຕົວຈິງໃນອາຊຽນ: ໃນກໍລະນີທີ່ຈໍາເປັນ, ຜູ້ຖືກເຄາະຮ້າຍທີ່ເປັນພະຍານ, ຄອບຄົວຂອງພວກເຂົາ ຄວນຈະໄດ້ຮັບການປົກປ້ອງຈາກການຖືກແກ້ແຄ້ນ. ກົດໝາຍ ຄວນຈະປົກປ້ອງຄວາມເປັນສ່ວນຕົວຂອງຜູ້ຖືກເຄາະຮ້າຍທີ່ເປັນພະຍານ ແລະ ການຮັກສາຄວາມລັບຕໍ່ກັບຄວາມເປັນຕົວຕົນຂອງເຂົາເຈົ້າ. ພາກທີໜຶ່ງ E.1 ແລະ E.2; ສົນທິສັນຍາ ACTIP ມາດຕາ 14(6).

## ໄພອັນຕະລາຍທີ່ອາດຈະເກີດຂຶ້ນ: ການຖືກແກ້ແຄ້ນຈາກຜູ້ຄ້າມະນຸດ.

ຄວາມຢ້ານກົວທີ່ຈະຖືກແກ້ແຄ້ນຈາກຜູ້ຄ້າມະນຸດນັ້ນ ເປັນຄວາມກັງວົນໂດຍແທ້ຈິງ, ໂດຍສະເພາະຜູ້ຖືກເຄາະຮ້າຍທີ່ເປັນພະຍານ ແລະ ຜູ້ທີ່ມີສ່ວນຮ່ວມໃນຂະບວນຍຸຕິທຳທາງອາຍາ. ຄວາມສາມາດຂອງຜູ້ຄ້າມະນຸດທີ່ຈະຕອບໂຕ້ໃສ່ຜູ້ຖືກເຄາະຮ້າຍ ຜູ້ທີ່ຈະຫຼົບໜີ ແລະ/ຫຼື ໄດ້ໃຫ້ການເພື່ອຕໍ່ຕ້ານພວກເຂົານັ້ນ ໄດ້ຮັບການບັນທຶກໄວ້ເປັນຢ່າງດີ.[34] ນອກຈາກນັ້ນ, ການຖືກແກ້ແຄ້ນບໍ່ໄດ້ເກີດຂຶ້ນສະເພາະຈາກຜູ້ຄ້າມະນຸດເທົ່ານັ້ນ ແຕ່ອາດຈະມາຈາກນາຍຈ້າງ, ຕົວແທນການຄ້າມະນຸດ, ຜູ້ທີ່ເຮັດໜ້າທີ່ຄຸ້ມຄອງໂສເພນີ ແລະ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ.

**ຄຳແນະນຳ #10:**

ຜູ້ຖືກເຄາະຮ້າຍຄວນຈະໄດ້ຮັບການແຈ້ງບອກຕໍ່ກັບຄວາມຄືບໜ້າຂອງຄະດີທີ່ພວກເຂົາໄດ້ມີສ່ວນຮ່ວມ ແລະ ສາມາດຂໍຂໍ້ມູນໄດ້ຕະຫຼອດເວລາ.[35]

34 ອີງການ IOM (2007).

35 APA ພາກທີ B(g). ອານຸສັນຍາສາກົນວ່າດ້ວຍການຕ້ານການຄ້າມະນຸດ, ມາດຕາ 6(2)(b).

## ໄພອັນຕະລາຍທີ່ອາດຈະເກີດຂຶ້ນ: ການບັງຄັບໃຫ້ຢູ່ໃນສະຖານທີ່ກັກຕົວ ຫຼື ໃນສູນພັກເຊົາແບບປິດ

ຜູ້ຖືກເຄາະຮ້າຍອາດຈະໄດ້ຢູ່ໃນສູນພັກເຊົາແບບປິດ ທີ່ຂັດກັບຄວາມຕ້ອງການຂອງເຂົາເຈົ້າ ເພື່ອຈຸດປະສົງໃນການປົກປ້ອງຄວາມປອດໄພຂອງເຂົາເຈົ້າເອງ. ໃນບາງປະເທດ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຜູ້ທີ່ເປັນແຮງງານເຄື່ອນຍ້າຍທີ່ຜິດກົດໝາຍ ຈະຖືກກັກຕົວຢູ່ທີ່ສູນພັກເຊົາຂອງລັດຖະບານ ຫຼື ສູນທີ່ໄດ້ຮັບອະນຸມັດຈາກລັດຖະບານ ໂດຍຈຳກັດການເຄື່ອນໄຫວຂອງເຂົາເຈົ້າ. ຜູ້ຖືກເຄາະຮ້າຍຍັງຖືກກັກຕົວໄວ້ໃນສູນພັກເຊົາແບບປິດ ດ້ວຍເຫດຜົນທີ່ວ່າເຂົາເຈົ້າພ້ອມທີ່ຈະເຂົ້າຮ່ວມໃນການສອບສວນ-ສອບສວນ ແລະ ດຳເນີນຄະດີ.[36]

**ຄຳແນະນຳ #11:**

ສ້າງຄວາມໄວ້ວາງໃຈ ເປັນສິ່ງທີ່ຈຳເປັນເພື່ອໃຫ້ໄດ້ຮັບຄວາມຮ່ວມມືຈາກຜູ້ຖືກເຄາະຮ້າຍ. ການຈັບຕົວ ຫຼື ກັກຕົວ ອາດນຳໄປສູ່ບັນຫາທີ່ຮຸນແຮງ ຫຼື ທຳລາຍໂອກາດໃນການສ້າງຄວາມໄວ້ວາງໃຈກັບຜູ້ຖືກເຄາະຮ້າຍ.

36 McAdam (2020).

### ຄໍາແນະນໍາ #12:

ໃຫ້ການປົກປ້ອງຢ່າງພຽງພໍ ແລະ ອະນຸຍາດໃຫ້ຢູ່ອາໄສຊົ່ວຄາວ ແກ່ຜູ້ຖືກເຄາະຮ້າຍ ແລະ ພະຍານ ຜູ້ທີ່ບໍ່ໄດ້ເປັນພົນລະເມືອງຂອງປະເທດຕົນ ໃນໄລຍະການດໍາເນີນຄະດີຕາມກົດໝາຍ.[37]

### ຄໍາແນະນໍາ #13:

ຊອກຫາວິທີທາງທີ່ຈະໄດ້ຮັບຄໍາໃຫ້ການ/ຄໍາຊີ້ແຈງທີ່ເປັນຫຼັກຖານ ຫຼື ຄໍາໃຫ້ການຈາກຜູ້ຖືກເຄາະຮ້າຍ ໂດຍທີ່ບໍ່ຕ້ອງກັກຕົວພວກເຂົາເຈົ້າເປັນໄລຍະເວລາຍາວນານຢູ່ໃນສູນພັກເຊົາ.[38] ເຊິ່ງອາດຈະໄດ້ນໍາໃຊ້ການໃຫ້ການກ່ອນລ່ວງໜ້າ, ການບັນທຶກວິດີໂອຄໍາໃຫ້ການ ຫຼື ການໃຫ້ການຜ່ານວິດີໂອທາງໄກ. ຖ້າຫາກຜູ້ຖືກເຄາະຮ້າຍເຕັມໃຈ ແລະ ສາມາດໃຫ້ຄໍາໃຫ້ການ, ນໍາໃຊ້ຄໍາໃຫ້ການກ່ອນລ່ວງໜ້າ, ຜ່ານວິດີໂອທາງໄກ ແລະ ພິຈາລະນາແບບເລັ່ງດ່ວນ ບ່ອນທີ່ເປັນໄປໄດ້ທາງດ້ານກົດໝາຍ ເພື່ອຊ່ວຍໃຫ້ຫຍໍ້ເວລາສັ້ນເຂົ້າໃນການຢູ່ສູນພັກເຊົາແບບປິດຂອງຜູ້ຖືກເຄາະຮ້າຍ.[39]

37 ສົນທິສັນຍາ ACTIP ມາດຕາ 14(4) ແລະ 14(5) ), ເຄື່ອງມືຕົວແບບໃນການຈັດຕັ້ງປະຕິບັດຂອງຜູ້ປະຕິບັດຕົວຈິງໃນອາຊຽນ (2019)

38 ການທົບທວນລະດັບພາກພື້ນ ACWC ຂໍ້ສະເໜີແນະນໍາ 5.1, 5.2 ແລະ 5.3. ເບິ່ງທີ່ຫ້ອງການຂອງຄະນະກໍາມາທິການໃຫຍ່ເພື່ອສິດທິມະນຸດ. ຄູ່ມື ແລະ ຫຼັກການກ່ຽວກັບຂໍ້ສະເໜີແນະນໍາ ກ່ຽວກັບສິດທິມະນຸດ ແລະ ການຄ້າມະນຸດ. (n.d.) https://www.ohchr.org/Documents/Publications/Traffickingen.pdf

39 ການທົບທວນລະດັບພາກພື້ນ ACWC ຂໍ້ສະເໜີແນະນໍາ 4.1.

## ໄພອັນຕະລາຍທີ່ອາດຈະເກີດຂຶ້ນ: ການເປັນຜູ້ຖືກເຄາະຮ້າຍຊໍ້າຄືນອີກໃນໄລຍະການພິຈາລະນາຄະດີໃນສານ

ເຖິງແມ່ນວ່າຜູ້ຖືກເຄາະຮ້າຍຈະຕົກລົງໂດຍສະໝັກໃຈໃນການເຂົ້າຮ່ວມຢ່າງເຕັມສ່ວນໃນຂະບວນການຂອງສານ, ຜູ້ຖືກເຄາະຮ້າຍຍັງມີຄວາມສ່ຽງທີ່ຈະຖືກຂົ່ມຂູ່ເວລາຢູ່ໃນສານ ແລະ ບໍລິເວນຂອງສານ. ເຂົາເຈົ້າອາດຈະຖືກຊັກຈູງໄດ້ງ່າຍ, ຄວາມໜ້າເຊື່ອຖືຂອງພວກເຂົາເຈົ້າອາດຈະຖືກທໍາລາຍໂດຍທະນາຍຄວາມຈໍາເລີຍທີ່ມີຄວາມເຂັ້ມແຂງ ຫຼື ເຂົາເຈົ້າອາດຈະຖືກຜູ້ຄ້າມະນຸດໂນ້ມນ້າວໃຫ້ຖອນການຮ່ວມມື ໂດຍຜ່ານການໃຫ້ສິນບົນ ຫຼື ຖືກຂົ່ມຂູ່ໂດຍກົງຕໍ່ກັບຜູ້ຖືກເຄາະຮ້າຍ ແລະ/ຫຼື ຕໍ່ກັບຄອບຄົວຂອງເຂົາເຈົ້າ.[40] ຜູ້ທີ່ຖືກບັງຄັບໃຫ້ປະເຊີນໜ້າກັບຜູ້ຄ້າມະນຸດນັ້ນ ອາດຈະມີຄວາມບອບຊໍ້າທາງດ້ານຈິດໃຈຊໍ້າຄືນອີກ ໃນລະຫວ່າງຂະບວນການນີ້.

40 ການຕ້ານການເປັນຂ້າທາດລະຫວ່າງປະເທດ (2002).

## ຄຳແນະນຳ #14:

ປະເມີນຄວາມສ່ຽງຂອງຜູ້ຖືກເຄາະຮ້າຍ ທີ່ອາດຈະມີໄພອັນຕະລາຍຈາກການເຂົ້າຮ່ວມໃນລະບົບຍຸຕິທຳທາງອາຍາ ໂດຍການປະສານງານກັບເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ຜູ້ໃຫ້ການສະໜັບສະໜູນແກ່ຜູ້ຖືກເຄາະຮ້າຍ, ເຊິ່ງລວມມີນັກຈິດຕະວິທະຍາ. ການຕີຄວາມໝາຍ ແລະ ການປະເມີນຄວາມສ່ຽງຂອງຜູ້ຖືກເຄາະຮ້າຍເປັນສິ່ງສຳຄັນຫຼາຍ. ຄວາມສ່ຽງນັ້ນ ອາດຈະລວມມີ ແຕ່ບໍ່ຈຳກັດເຖິງ: ຄວາມບອບຊ້ຳທາງດ້ານຈິດໃຈ, ການຖືກຂົ່ມຂູ່ຈາກຜູ້ຄ້າມະນຸດ ຫຼື ບຸກຄົນທີ່ເຂົາເຈົ້າສະໜິດສະໜົມນຳ, ການຖືກສັງຄົມປະນາມ ແລະ ຖືກປະຈານໂດຍຄອບຄົວ ແລະ ສະມາຊິກໃນຊຸມຊົນ.

## ຄຳແນະນຳ #15:

ໃນຂະບວນການສືບສວນ-ສອບສວນແບບບໍ່ເຕັມໃຈນັ້ນ ຈຳເປັນຕ້ອງມີການກວດສອບດ້ານຮ່າງກາຍ ແລະ ຈິດໃຈ ແລະ ການປະເມີນຄວນຈະເຮັດຂຶ້ນໂດຍໄດ້ຮັບຄວາມຍິນຍອມຈາກຜູ້ຖືກເຄາະຮ້າຍ. ຜູ້ຖືກເຄາະຮ້າຍຄວນຖືກແຈ້ງໃຫ້ຊາບຕໍ່ກັບບາດກ້າວ ແລະ ຂະບວນການທີ່ກ່ຽວຂ້ອງ ແລະ ເຫດຜົນທີ່ຈຳເປັນຕ້ອງມີການສືບສອບ-ສອບສວນ. ຄວາມມິດງຽບຂອງຜູ້ຖືກເຄາະຮ້າຍ ບໍ່ຄວນຖືກຕີຄວາມໝາຍວ່າເປັນຄວາມຍິນຍອມ. ການກວດກາ ແລະ ປະເມີນຜົນ ຄວນຖືກດຳເນີນການໂດຍບຸກຄົນໃດໜຶ່ງ ທີ່ຜູ້ຖືກເຄາະຮ້າຍມີຄວາມສະບາຍໃຈ.

## ຄຳແນະນຳ #16:

ຖ້າເປັນໄປໄດ້ ຄວນມອບໝາຍໃຫ້ ຜູ້ຊ່ວຍຜູ້ຖືກເຄາະຮ້າຍທີ່ເປັນພະຍານ ຫຼື ຜູ້ປະສານງານຜູ້ຖືກເຄາະຮ້າຍທີ່ເປັນພະຍານ ເພື່ອນຳພາ ແລະ ຊ່ວຍຜູ້ຖືກເຄາະຮ້າຍຕະຫຼອດໄລຍະຂອງຂະບວນການຢູ່ສານ. ບຸກຄົນນີ້ ສາມາດລາຍງານສະຖານະຂອງຄະດີ ແລະ ຂໍ້ມູນກ່ຽວກັບການສົ່ງຕໍ່ເພື່ອໄປຫາການບໍລິການຕ່າງໆ.[41]

## ຄຳແນະນຳ #17:

ຂໍມາດຕະການສະໜັບສະໜູນຈາກສານ ໃນການປະຕິບັດ ເພື່ອຫຼຸດຜ່ອນຄວາມເຄັ່ງຕຶງ ແລະ ຄວາມບອບຊ້ຳທາງດ້ານຈິດໃຈຂອງຜູ້ຖືກເຄາະຮ້າຍເຊັ່ນ: ການມາຫ້ອງປະຊຸມສານກ່ອນການພິຈາລະນາຄະດີ ເພື່ອໃຫ້ຜູ້ຖືກເຄາະຮ້າຍມີຄວາມລຶ້ງເຄີຍກັບສິ່ງອ້ອມຂ້າງ ແລະ ຮູ້ວ່າໃຜຈະນັ່ງຢູ່ໃສ; ຄຸ້ມກັນໃນການມາເຖິງ ແລະ ອອກຈາກອາຄານຂອງສານ, ການໃຊ້ທາງເຂົ້າທີ່ແຍກກັນ ເພື່ອເຂົ້າມາທີ່ອາຄານຂອງສານ, ຂີດເຂດການລໍຖ້າສ່ວນຕົວ ແລະ ການໃຫ້ຂໍ້ມູນຢ່າງເປັນປະຈຳກ່ຽວກັບການດຳເນີນການພິຈາລະນາຄະດີຈາກຝ່າຍດຳເນີນຄະດີຕະຫຼອດໄລຍະການດຳເນີນຄະດີຢູ່ສານ.[42]

41 ເຄື່ອງມືຕົວແບບໃນການຈັດຕັ້ງປະຕິບັດຂອງຜູ້ປະຕິບັດງານຕົວຈິງຂອງອາຊຽນ (2019).

42 ຄູ່ມືຂອງຜູ້ປະຕິບັດຕົວຈິງໃນອາຊຽນ, ພາກໜຶ່ງ F.4. ຄູ່ມືກ່ຽວກັບການເອົາໃຈໃສ່ບົດບາດຍິງຊາຍໃນອາຊຽນ ແຖວທີ 3.6.

## ໄພອັນຕະລາຍທີ່ອາດຈະເກີດຂຶ້ນ: ການສືບສວນ-ສອບສວນ ແລະ ການຕັດສິນຂອງສານໂດຍອີງໃສ່ອັກຄະຕິ ແລະ ແນວຄິດແບບດັ້ງເດີມ

ຄວາມຄິດທີ່ຕັດກັນ ແລະ ແນວຄິດແບບດັ້ງເດີມທີ່ຍຶດຕິດກ່ຽວກັບຍິງ-ຊາຍ ແລະ ການຈຳແນກໃນຮູບແບບອື່ນໆ ອາດຈະເປັນການປ້ອງກັນຜູ້ຖືກເຄາະຮ້າຍຈາກການເຂົ້າເຖິງຄວາມຍຸຕິທຳ. ຕົວຢ່າງ: ບຸກຄົນທີ່ມີຄວາມບົກພ່ອງ ຫຼື ພິການທາງດ້ານຈິດໃຈ ຖືກສັນນິຖານວ່າເປັນຄົນທີ່ບໍ່ມີຄວາມສາມາດ ຫຼື ເປັນພະຍານທີ່ບໍ່ມີຄວາມໜ້າເຊື່ອຖື. ທັດສະນະຄະຕິ ຫຼື ແນວຄິດດັ້ງເດີມ ສາມາດປານີປານອມຄວາມບໍ່ລຳອຽງຂອງຜູ້ທີ່ເຮັດໜ້າທີ່ດ້ານຍຸຕິທຳເຊັ່ນ: ການຕັດສິນໃຈຂອງຜູ້ພິພາກສາ ແລະ ໄອຍະການ ລວມທັງທັດສະນະຂອງເຂົາເຈົ້າກ່ຽວກັບຄວາມໜ້າເຊື່ອຖືຂອງພະຍານ ແລະ/ຫຼື ຄວາມສາມາດທາງດ້ານກົດໝາຍຂອງພະຍານ.

### ຄຳແນະນຳ #18:

ຖ້າເປັນໄປໄດ້ ໂດຍການປຶກສາຫາລືກັບຜູ້ຖືກເຄາະຮ້າຍ, ມອບໝາຍໃຫ້ເຈົ້າໜ້າທີ່ສືບສອບ-ສອບສວນ ເພດຍິງ ແລະ ເພດຊາຍ ທີ່ໄດ້ຮັບການຝຶກອົບຮົມແລ້ວ ເພື່ອໃຫ້ການປົກປ້ອງທາງດ້ານຮ່າງກາຍແກ່ຜູ້ຖືກເຄາະຮ້າຍ ຜູ້ທີ່ສະແດງຄວາມຢ້ານກົວຕໍ່ກັບການດຳລົງຊີວິດ ແລະ ຄວາມປອດໄພຂອງເຂົາເຈົ້າ ແລະ ສະມາຊິກຄອບຄົວຂອງເຂົາເຈົ້າ.[43] ການຈັດຫາການບໍລິການເພື່ອການປົກປ້ອງ ສາມາດປະສານງານກັບໜ່ວຍງານ/ຜູ້ປະສານງານ ປົກປ້ອງພະຍານ ແລະ ຜູ້ຖືກເຄາະຮ້າຍ ທີ່ມີຢູ່ໃນບາງຂົງເຂດສິດອຳນາດຂອງສານ.

### ຄຳແນະນຳ #19:

ຜູ້ພິພາກສາ ແລະ ທະນາຍຄວາມຂອງຈຳເລີຍ ຈະຕ້ອງປະຕິບັດຕາມກົດຈັນຍາບັນ ແລະ ຄວາມເປັນມືອາຊີບ. ສິ່ງນີ້ລວມມີການຫຼີກເວັ້ນການໃຊ້ພາສາ ຫຼື ນ້ຳສຽງທີ່ແຂງກະດ້າງ ຫຼື ນ້ຳສຽງທີ່ຮ້າຍ ຕໍ່ກັບຜູ້ຖືກເຄາະຮ້າຍ. ຜູ້ຖືກເຄາະຮ້າຍບໍ່ຄວນຈະຖືກບັງຄັບໃຫ້ເລົ່າເຫດການຄືນກ່ຽວກັບເລື່ອງຂອງເຂົາເຈົ້າ.

### ຄຳແນະນຳ #20:

ຝຶກອົບຮົມວິຊາຊີບໃຫ້ແກ່ຜູ້ທີ່ເຮັດວຽກໃນຂະແໜງຍຸຕິທຳທາງອາຍາກ່ຽວກັບກົດໝາຍດ້ານສິດທິມະນຸດ ແລະ ແນວຄິດຍຶດຕິດດັ້ງເດີມ ແລະ ອັກຄະຕິດ້ານເພດ. ເນັ້ນໃຫ້ເຫັນຄວາມສຳຄັນຂອງໄພອັນຕະລາຍກ່ຽວກັບທັດສະນະຄະຕິຂອງຕຸລາການຜ່ານບົດວິໄຈຕາມຫຼັກຖານ. ວິເຄາະເຫດການຂອງຕຸລາການ ເພື່ອເປັນຫຼັກຖານທາງແນວຄວາມຄິດແບບດັ້ງເດີມ ແລະ ເນັ້ນໃຫ້ເຫັນເຖິງຕົວຢ່າງທີ່ເປັນການປະຕິບັດທີ່ເປັນຕົວແບບທີ່ດີຂອງຜູ້ທີ່ເຮັດວຽກໃນຂະແໜງຍຸຕິທຳຜູ້ທີ່ມີແນວຄິດຍຶດຕິດກັບເພດ.

43 ເຄື່ອງມືຕົວແບບໃນການຈັດຕັ້ງປະຕິບັດຂອງຜູ້ປະຕິບັດງານຕົວຈິງຂອງອາຊຽນ (2019).

## ໄພອັນຕະລາຍທີ່ອາດຈະເກີດຂຶ້ນ: ຄວາມກົດດັນທາງດ້ານເສດຖະກິດ ແລະ ຂໍ້ຈຳກັດຕໍ່ກັບຄ່າຊົດເຊີຍ ຫຼື ຄ່າປິ່ນປົວແປງຈິດໃຈ

ການມີສ່ວນຮ່ວມໃນການດຳເນີນຄະດີທາງອາຍາ ອາດຈະມີຄ່າໃຊ້ຈ່າຍທີ່ສຳຄັນຕໍ່ກັບຜູ້ຖືກເຄາະຮ້າຍ ແລະ ຄອບຄົວຂອງພວກເຂົາ. ສຳລັບຜູ້ຖືກເຄາະຮ້າຍຫຼາຍຄົນ, ຜູ້ທີ່ເປັນເສົາຫຼັກໃນຄອບຄົວ, ສະຖານະການໄດ້ສ້າງຄວາມກົດດັນທາງດ້ານເສດຖະກິດ, ອາລົມ ແລະ ຈິດໃຈ. ການດຳເນີນຄະດີຕໍ່ຜູ້ຄ້າມະນຸດທີ່ປະສົບຜົນສຳເລັດ ບໍ່ໄດ້ນຳໄປສູ່ການໄດ້ຮັບຄ່າຊົດເຊີຍ ຫຼື ຄ່າປິ່ນປົວແປງດ້ານຈິດໃຈແກ່ຜູ້ຖືກເຄາະຮ້າຍ ແລະ ຄອບຄົວຂອງເຂົາເຈົ້າ. ຜົນປະໂຫຍດຈາກການຊ່ວຍໃນຂະບວນການຍຸຕິທຳທາງອາຍາ ບໍ່ມີຄວາມຊັດເຈນຕໍ່ກັບຜູ້ຖືກເຄາະຮ້າຍຫຼາຍຄົນ.

### ຄຳແນະນຳ #21:

ບໍ່ຄວນເວົ້າ ຫຼື ໃຫ້ສັນຍາເກີນຄວາມຈິງ ຕໍ່ກັບຜົນປະໂຫຍດໃນການເຂົ້າຮ່ວມໃນການດຳເນີນຄະດີທາງອາຍາ. ການບໍລິການໃນການປົກປ້ອງ ແລະ ການສະໜັບສະໜູນ ເຊັ່ນ: ການຊ່ວຍເຫຼືອທາງດ້ານການແພດ ແລະ ທີ່ພັກເຊົາ (ລວມທັງທີ່ພັກຊົ່ວຄາວ) ບໍ່ຄວນຖືກເຊື່ອມໂຍງກັບຈຸດປະສົງຂອງຄວາມຍຸຕິທຳທາງອາຍາ.

### ຄຳແນະນຳ #22:

ໃຫ້ຂໍ້ມູນທີ່ຊັດເຈນກ່ຽວກັບການຢຽວຢາ ໃນພາສາ ແລະ ໃນຮູບແບບທີ່ຜູ້ຖືກເຄາະຮ້າຍເຂົ້າໃຈໄດ້ງ່າຍ. ອາດຈະລວມມີ: ສິດຂອງເຂົາເຈົ້າໃນການເຂົ້າເຖິງການຢຽວຢາ ໂດຍສະເພາະຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດ; ຂັ້ນຕອນໃນການສະໝັກ ແລະ ເອກະສານທີ່ຈຳເປັນ; ໄລຍະເວລາການປະເມີນ ແລະ ການອະນຸມັດ ແລະ ອື່ນໆ.[44] ຜູ້ຖືກເຄາະຮ້າຍທີ່ບໍ່ໄດ້ເປັນພົນລະເມືອງຂອງປະເທດນັ້ນ ຄວນໄດ້ຮັບສິດໃນການອາໄສຢູ່ໃນປະເທດນັ້ນ ລວມທັງ ສິດໃນການເຮັດວຽກ ຖ້າເຂົາເຈົ້າຕ້ອງການ ຈົນກວ່າຈະມີການແກ້ໄຂກ່ຽວກັບການຮຽກຮ້ອງຄ່າເສຍຫາຍ.

### ຄຳແນະນຳ #23:

ໃຫ້ການຊົດເຊີຍ ແລະ ຄ່າປິ່ນປົວແປງຈິດໃຈ ເຖິງແມ່ນວ່າຜູ້ຄ້າມະນຸດມີຈຳນວນຫຼາຍ ຫຼື ບໍ່ມີເງິນ .

44 Ibid.

45 ອີງການ UNICEF. ຄຳແນະນຳກ່ຽວກັບການປົກປ້ອງຜູ້ຖືກເຄາະຮ້າຍທີ່ເປັນເດັກ. ການບັນທຶກທາງວິຊາການຂອງ UNICEF (ນິວຢອກ: 2006). https://ec.europa.eu/anti-trafficking/sites/antitrafficking/files/unicef_guidlines_on_protection_of_the_rights_of_teh_child_2006_en_2.pdf

## ການເຮັດວຽກກັບເດັກນ້ອຍ: ຄຳແນະນຳຕໍ່ກັບການບໍ່ເຮັດໄພອັນຕະລາຍ DNH

ເດັກທີ່ຖືກຄ້າມະນຸດໂດຍອີງຕາມອາຍຸ, ວຸດທິພາວະ ແລະ ປະສົບການທີ່ຖືກຄ້າມະນຸດ, ມີຄວາມຈຳເປັນໃນການຊ່ວຍເຫຼືອທີ່ຕ້ອງມີການເບິ່ງແຍງເປັນອັນສະເພາະ. ມັນເປັນສິ່ງທີ່ສຳຄັນ ທີ່ຜູ້ປະຕິບັດຕົວຈິງ ຕ້ອງຮັບຮູ້ວ່າ ບໍ່ແມ່ນເດັກທຸກຄົນ ທີ່ເປັນຜູ້ຖືກເຄາະຮ້າຍຈະປະກົດຕົວໃນລັກສະນະນີ້. ເຂົາເຈົ້າອາດຈະຖືເອກະສານປອມໃນການກຳນົດຕົວ ທີ່ອາດຈະກຳນົດອາຍຸທີ່ຜິດພາດ, ອາດຈະຕົວະອາຍຸຕົນເອງ ຍ້ອນວ່າຜູ້ທີ່ຂູດຮີດເຂົາເຈົ້າບອກໃຫ້ເຮັດ. ເນື່ອງຈາກວ່າເດັກທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ສາມາດຈະເອົາຕົວເອງ ອອກມາເປັນເອກະລາດຈາກສະຖານະການທີ່ຂູດຮີດເຂົາເຈົ້າໄດ້, ເຂົາເຈົ້າອີງໃສ່ມາດຕະການ ການກຳນົດຕົວທີ່ເອົາໃຈໃສ່ແບບຕັ້ງໜ້າ ທີ່ດຳເນີນການໂດຍໜ່ວຍງານຂອງລັດຖະບານ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງຂອງແຮງງານ ແລະ ສະຫວັດດີການສັງຄົມຂັ້ນທ້ອງຖິ່ນ.[45] ລັດສະມາຊິກອາຊຽນ ຕ້ອງມີນະໂຍບາຍ, ກົດໝາຍ ແລະ ກົນໄກທີ່ເໝາະສົມເພື່ອຮັບປະກັນຄວາມປອດໄພ ແລະ ສະຫວັດດີການຂອງເດັກທີ່ເປັນຜູ້ຖືກເຄາະຮ້າຍ ໃນທຸກໆຂັ້ນ - ນັບແຕ່ຂັ້ນຕອນການກຳນົດຕົວ ໄປເຖິງການຮັບປະກັນການແກ້ໄຂບັນຫາໄລຍະຍາວ.

## ຄໍາແນະນໍາ #1:

ຜູ້ຖືກເຄາະຮ້າຍ ທີ່ມີອາຍຸບໍ່ແນ່ນອນ ຄວນຖືກສັນນິຖານວ່າເປັນເດັກ ແລະ ຂັ້ນຕອນການສໍາພາດ ແລະ ການກໍານົດຕົວ ຄວນຈະສອດຄ່ອງກັບຫຼັກການຂອງ ສົນທິສັນຍາວ່າດ້ວຍສິດທິເດັກ (CRC). ການກໍານົດຕົວຜູ້ຖືກເຄາະຮ້າຍ ຈໍາເປັນຕ້ອງເຮັດໂດຍໄວ ແລະ ຈັດລໍາດັບບູລິມະສິດທີ່ສໍາຄັນ ເພື່ອກໍານົດອາຍຸຂອງຜູ້ຖືກເຄາະຮ້າຍ ເພື່ອຮັບປະກັນວ່າການສະເໜີການບໍລິການໃຫ້ແກ່ຜູ້ຖືກເຄາະຮ້າຍນັ້ນມີຄວາມເໝາະສົມ.[46]

## ຄໍາແນະນໍາ #2:

ເທົ່າທີ່ເປັນໄປໄດ້ຫຼາຍທີ່ສຸດ, ມີພຽງແຕ່ພະນັກງານທີ່ໄດ້ຮັບການຝຶກອົບຮົມກ່ຽວກັບສິດທິ ແລະ ຄວາມຕ້ອງການສະເພາະຂອງຜູ້ຖືກເຄາະຮ້າຍທີ່ເປັນເດັກເທົ່ານັ້ນ ທີ່ຄວນຈະດໍາເນີນການສໍາພາດຜູ້ຖືກເຄາະຮ້າຍທີ່ເປັນເດັກ.

## ຄໍາແນະນໍາ #3:

ຜູ້ຖືກຄ້າມະນຸດທີ່ເປັນເດັກ ຄວນໄດ້ຮັບການແຕ່ງຕັ້ງຜູ້ປົກຄອງຕາມກົດໝາຍ ເພື່ອໃຫ້ຄໍາແນະນໍາ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດຂອງເຂົາເຈົ້າ ເມື່ອໃດກໍຕາມທີ່ພໍ່ແມ່ຂອງເຂົາເຈົ້າ ບໍ່ຕ້ອງການ, ບໍ່ເໝາະສົມ ຫຼື ບໍ່ສາມາດນໍາໃຊ້ສິດທິໃນຖານະພໍ່ແມ່ ແບບຊົ່ວຄາວ ຫຼື ຖາວອນໄດ້.[47] ຜູ້ປົກຄອງທີ່ໄດ້ຮັບການແຕ່ງຕັ້ງ ຄວນຈະປຶກສາ ແລະ ແຈ້ງທຸກໆການກະທໍາທີ່ກ່ຽວຂ້ອງກັບເດັກ.

## ຄໍາແນະນໍາ #4:

ທຸກໆຂໍ້ມູນທີ່ສື່ສານກັບເດັກ ຈໍາເປັນຕ້ອງໄດ້ມີການປັບອີງໃສ່ອາຍຸ, ວຸດທິພາວະ, ລະດັບການສຶກສາ, ແລະ ປະສົບການຂອງເດັກ ແລະ ຕ້ອງນໍາສະເໜີໃນລັກສະນະທີ່ເໝາະສົມ ແລະ ເປັນມິດກັບເດັກ. ສົ່ງເສີມ ແລະ ຮັບປະກັນວ່າ ທຸກໆການຕັດສິນໃຈ ທີ່ໄດ້ເຮັດຂຶ້ນນັ້ນ ໄດ້ມີສ່ວນຮ່ວມ ແລະ ຂໍ້ມູນຈາກເດັກ.ໃນຂອບເຂດທີ່ເດັກສາມາດໃຫ້ຄວາມຍິນຍອມນັ້ນ ຈະມີຄວາມແຕກຕ່າງກັນ ໂດຍອີງໃສ່ອາຍຸ, ປະສົບການ ແລະ ລະດັບການພັດທະນາຂອງເດັກ. ຄໍານຶງໄວ້ສະເໝີວ່າ ຄວາມເປັນໄປໄດ້ຂອງຜົນກະທົບດ້ານອໍານາດທີ່ບໍ່ດຸ່ນດ່ຽງກັນລະຫວ່າງເດັກ ແລະ ຜູ້ໃຫຍ່, ລວມທັງ ສ້າງຄວາມກົດດັນໃນການໃຫ້ຄວາມຍິນຍອມ ຫຼື ບໍ່ (ໂດຍພະນັກງານ ຫຼື ພໍ່ແມ່/ຜູ້ປົກຄອງ). [48]

46 ຄູ່ມືກ່ຽວກັບການເອົາໃຈໃສ່ບົດບາດຍິງຊາຍໃນອາຊຽນ ແຖວທີ 3.2.3. ການທົບທວນລະດັບພາກພື້ນຂອງ ACWC ຂໍ້ສະເໜີແນະນໍາ 2.2.

47 ອີງການ UNICEF (2006).

48 Surtees, R. ຫຼັກການດ້ານຈັນຍາບັນ ສໍາລັບການກັບຄືນສູ່ສັງຄົມຂອງຜູ້ຖືກຄ້າມະນຸດ: ປະສົບການຈາກບາການ. ເອກະສານຜະລິດຄັ້ງທີ #5 (ສະຖາບັນ Nexus: 2013)

## ຄໍາແນະນໍາ #5:

ອະນຸຍາດໃຫ້ເດັກ ທີ່ຖືກກັກຂັງ, ຖືກຈັບຕົວ, ຖືກສົງໄສ ຫຼື ຖືກຫາ ຫຼື ຖືກຕັ້ງຂໍ້ຫາການກະທໍາຜິດທາງອາຍາ ໄດ້ຕິດຕໍ່ຫາພໍ່ແມ່ ຫຼື ຜູ້ປົກຄອງໂດຍທັນທີ ແລະ ຫ້າມບໍ່ໃຫ້ມີການສໍາພາດ ໂດຍບໍ່ມີທະນາຍຄວາມ ຫຼື ຜູ້ທີ່ໃຫ້ການຊ່ວຍເຫຼືອລ້າທາງດ້ານກົດໝາຍ ແລະ ພໍ່ແມ່ ຫຼື ຜູ້ປົກຄອງທີ່ມີຢູ່ ເພື່ອຜົນປະໂຫຍດສູງສຸດຂອງເດັກ.[49]

## ຄໍາແນະນໍາ #6:

ເດັກ ຄວນໄດ້ຮັບຂໍ້ມູນໃນລັກສະນະທີ່ເໝາະສົມກັບອາຍຸ ແລະ ວຸດທິພາວະຂອງເຂົາເຈົ້າ. ການໃຫ້ຂໍ້ມູນແກ່ພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ເບິ່ງແຍງ ຄວນເປັນສິ່ງເພີ່ມເຕີມ ແລະ ບໍ່ແມ່ນທາງເລືອກ ເພື່ອຈະສື່ສານຂໍ້ມູນຫາເດັກ.[50]

## ຄໍາແນະນໍາ #7:

ກະກຽມການສໍາພາດເດັກ ໂດຍໃຫ້ມີຜູ້ໃຫຍ່ທີ່ເດັກໄວ້ວາງໃຈຢູ່ນໍາ. ບຸກຄົນດັ່ງກ່າວນີ້ ມີໜ້າທີ່ຮັບຜິດຊອບໃນການເບິ່ງແຍງຜົນປະໂຫຍດສູງສຸດຂອງເດັກ. ບຸກຄົນດັ່ງກ່າວອາດຈະເປັນຜູ້ປົກຄອງ, ຜູ້ຕາງໜ້າທາງດ້ານກົດໝາຍ ຫຼື ຖ້າຫາກບໍ່ໄດ້ຮັບການແຕ່ງຕັ້ງ, ອາດຈະເປັນຄູ ຫຼື ນັກສັງຄົມສົງເຄາະ.[51]

## ຄໍາແນະນໍາ #8:

ການຖາມຄໍາຖາມ ຄວນຈະພິຈາລະນາເຖິງລັກສະນະ ແລະ ພື້ນຖານຄອບຄົວຂອງເດັກ. ຄວນນໍາໃຊ້ພາສາທີ່ເປັນມິດກັບເດັກ. ເດັກ ຄວນມີໂອກາດໃນການເລົ່າເລື່ອງຂອງເຂົາເຈົ້າໃນຮູບແບບຂອງເຂົາເຈົ້າເອງ ກ່ອນທີ່ພວກເຂົາຈະຖືກຖາມຄໍາຖາມທີ່ເຈາະຈົງ. ການສໍາພາດຄວນເລີ່ມຕົ້ນດ້ວຍຄໍາຖາມເປີດ-ປິດ ແລະ ຄໍາຖາມກົງ ຫຼື ຄໍາຖາມນໍາ ເຊິ່ງຄວນຈະສະຫງວນໄວ້ ເພື່ອສໍາພາດສ່ວນສຸດທ້າຍ.

49 ອີງການ UNODC. ຫຼັກການ ແລະ ຄໍາແນະນໍາຂອງອົງການສະຫະປະຊາຊາດ ໃນການເຂົ້າເຖິງການຊ່ວຍເຫຼືອທາງດ້ານກົດໝາຍໃນລະບົບຍຸຕິທໍາທາງອາຍາ. (ວຽນນາ: 2013). ລາຍລະອຽດເພີ່ມເຕີມ https://www.unodc.org/documents/justice-and-prison-reform/UN_principles_and_guidlines_on_access_to_legal_aid.pdf

50 ອີງການ UNODC (2013)

51 ການທົບທວນລະດັບພາກພື້ນຂອງ ACWC

## ຄຳແນະນຳ #9:

ດຳເນີນການປະເມີນ ຜົນປະໂຫຍດສູງສຸດຂອງເດັກ ໄວທີ່ຈະໄວໄດ້ ເມື່ອເດັກຖືກກຳນົດວ່າມີຄວາມສ່ຽງ. ທັດສະນະຂອງເດັກຕໍ່ກັບຂັ້ນຕອນ ແລະ ການປະເມີນຄວນໄດ້ຮັບການພິຈາລະນາ. ສິ່ງນີ້ຄວນເປັນຂະບວນທີ່ມີການດຳເນີນການເພື່ອຜົນປະໂຫຍດສູງສຸດຂອງເດັກ ໂດຍອີງໃສ່ການກະທຳທີ່ເອົາເດັກເປັນໃຈກາງ ແລະ ພື້ນຖານການການພິຈາລະນາ ແລະ ຈຸດປະສົງຂອງມາດຕະການທີ່ກະທົບຕໍ່ກັບເດັກ.[52]

## ຄຳແນະນຳ #10:

ການກັກຂັງຜູ້ຖືກເຄາະຮ້າຍທີ່ເປັນເດັກ ບໍ່ສາມາດໃຫ້ເຫດຜົນພື້ນຖານຢ່າງດຽວບໍ່ມີໃຜຢູ່ນຳ ຫຼື ໄດ້ແຍກກັນຢູ່ກັບເດັກ, ສະຖານະການເຄື່ອນເຄື່ອນຍ້າຍແຮງງານ ຫຼື ທີ່ຢູ່ອາໄສ ຫຼື ບໍ່ມີສິ່ງດັ່ງກ່າວນີ້. ເຊັ່ນດຽວກັນ, ຫຼີກລ້ຽງການເອົາຜູ້ຖືກເຄາະຮ້າຍທີ່ເປັນເດັກ ໄປຢູ່ໃນສູນພັກເຊົາ ຫຼື ສະຖານສົງເຄາະ ແລະ ຈະເຮັດໄດ້ກໍຕໍ່ເມື່ອໄດ້ມີການຊອກຫາທາງເລືອກອື່ນໃນການເບິ່ງແຍງເດັກແລ້ວ. ການເອົາເດັກໄປຢູ່ໃນສະຖານທີ່ດັ່ງກ່າວ ຄວນເຮັດໃນໄລຍະເວລາທີ່ສັ້ນທີ່ສຸດ ທີ່ເປັນໄປໄດ້ ແລະ ຄວນໄດ້ຮັບການຕິດຕາມຢ່າງເປັນປະຈຳຈາກໜ່ວຍງານອິດສະຫຼະ.[53]

## ຄຳແນະນຳ #11:

ຜູ້ຖືກເຄາະຮ້າຍທີ່ເປັນເດັກ ບໍ່ຄວນຖືກກຳນົດຕົວ ແລະ ຕ້ອງພະຍາຍາມທຸກວິທີທາງເພື່ອປົກປ້ອງຄວາມເປັນສ່ວນຕົວຂອງເດັກ.[54] ເດັກບໍ່ມີຄວາມສາມາດທີ່ຈະໃຫ້ຄວາມຍິນຍອມໃນການເຜີຍແຜ່, ພິມເຜີຍແຜ່ ຫຼື ນຳສະເໜີ ຫຼື ຂຽນເປັນລາຍລັກອັກສອນ ຫຼື ເຄື່ອງມືທີ່ເຫັນພາບໃດໆ ທີ່ຈະກຳນົດວ່າພວກເຂົາເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຮູບພາບຂອງຜູ້ຖືກເຄາະຮ້າຍ ທີ່ເປັນເດັກ ບໍ່ຄວນຖືກນຳໃຊ້ ເພາະວ່າຈະມີຄວາມສ່ຽງທີ່ຈະສາມາດລະບຸຕົວຕົນຂອງເຂົາເຈົ້າ.

52 ຫ້ອງການຂອງຄະນະກຳມາທິການໃຫຍ່ເພື່ອສິດທິມະນຸດ. ຄູ່ມື ແລະ ຫຼັກການກ່ຽວກັບຂໍ້ສະເໜີແນະນຳ ກ່ຽວກັບສິດທິມະນຸດ ແລະ ການຄ້າມະນຸດ. (n.d.) https://www.ohchr.org/Documents/Publications/Traffickingen.pdf

53 ເຄື່ອງມືຕົວແບບໃນການຈັດຕັ້ງປະຕິບັດຂອງຜູ້ປະຕິບັດງານຕົວຈິງຂອງອາຊຽນ (2019).

54 ຄຳແນະນຳ ແລະ ຂັ້ນຕອນໃນພາກພື້ນອາຊຽນ; ການທົບທວນລະດັບພາກພື້ນຂອງ ACWC.

## ຄຳແນະນຳ #12:

ເດັກທຸກຄົນ ຄວນໄດ້ຮັບການແຈ້ງບອກ ແລະ ມີສ່ວນຮ່ວມໃນທຸກໆການຕັດສິນໃຈ ກ່ຽວກັບການມີສ່ວນຮ່ວມຂອງເຂົາເຈົ້າໃນຂະບວນຍຸຕິທຳທາງອາຍາ ລວມທັງ ຂໍ້ມູນຂ່າວສານ ກ່ຽວກັບຕາຕາລາງການພິຈາລະນາຄະດີ, ສິດຂອງເຂົາເຈົ້າໃນການເຂົ້າເຖິງການຊ່ວຍເຫຼືອທາງດ້ານກົດໝາຍ, ການເຂົ້າເຖິງຄ່າຊົດເຊີຍ. ຜູ້ທີ່ຮັບຜິດຊອບໃນຂະແໜງຍຸຕິທຳ ແລະ ຜູ້ໃຫ້ການບໍລິການທີ່ກ່ຽວຂ້ອງ ຄວນໄດ້ຮັບການຝຶກອົບຮົມສະເພາະດ້ານ ກ່ຽວກັບຫຼັກການແລະ ການປະຕິບັດການມີສ່ວນຮ່ວມ ແລະ ປົກປ້ອງເດັກໃນຂະບວນຍຸຕິທຳທາງອາຍາ.

## ຄຳແນະນຳ #13:

ຮັບປະກັນວ່າ ການດຳເນີນຄະດີທາງຍຸຕິທຳ ແລະ ທາງບໍລິຫານ ໄດ້ເຮັດຂຶ້ນໃນບັນຍາກາດ ແລະ ລັກສະນະທີ່ອະນຸຍາດໃຫ້ເດັກ ໄດ້ຍິນ ບໍ່ວ່າຈະເປັນທາງກົງ ຫຼື ຜ່ານຜູ້ຕາງໜ້າ ຫຼື ໜ່ວຍງານທີ່ເໝາະສົມ ໃນລັກສະນະທີ່ສອດຄ່ອງກັບຂັ້ນຕອນການປະຕິບັດຕາມກົດໝາຍພາຍໃນ. ພິຈາລະນາກ່ຽວກັບອາຍຸ ແລະ ວຸດທິພາວະຂອງເດັກ ທີ່ອາດຈະຈຳເປັນຕ້ອງແກ້ໄຂໃນຂັ້ນຕອນ ແລະ ການປະຕິບັດທາງຍຸຕິທຳ ແລະ ບໍລິຫານ.[55]

## ຄຳແນະນຳ #14:

ຂໍ້ມູນສ່ວນຕົວ ແລະ ຄວາມເປັນສ່ວນຕົວຂອງເດັກ ຜູ້ທີ່ມີສ່ວນຮ່ວມ ຫຼື ໄດ້ມີສ່ວນຮ່ວມໃນຂະບວນການຍຸຕິທຳ ຫຼື ນອກຂະບວນການຍຸຕິທຳ ແລະ ການຊ່ວຍເຫຼືອອື່ນ ຄວນໄດ້ຮັບການປົກປ້ອງໃນທຸກໆຂັ້ນຕອນ ແລະ ການປົກປ້ອງດັ່ງກ່າວຄວນໄດ້ຮັບການຄຸ້ມຄອງຕາມກົດໝາຍ. ໂດຍທົ່ວໄປແລ້ວ ໝາຍຄວາມວ່າຈະບໍ່ມີການເປີດເຜີຍ ຫຼື ເຜີຍແຜ່ຂໍ້ມູນ ຫຼື ຂໍ້ມູນສ່ວນຕົວ ໂດຍສະເພາະທາງສື່ ທີ່ສາມາດເປີດເຜີຍ ຫຼື ເປີດເຜີຍຕົວຂອງເດັກໃນທາງອ້ອມ, ລວມມີຮູບພາບຂອງເດັກ, ລາຍລະອຽດຂອງເດັກ ຫຼື ຄອບຄົວຂອງເດັກ, ຊື່ ແລະ ທີ່ຢູ່ສະມາຊິກຄອບຄົວຂອງເດັກ ແລະ ການບັນທຶກວິດີໂອ ແລະ ສຽງ.[56]

55 ອີງການ UNODC (2013).

56 ອີງການ UNODC (2013).

## ຄຳແນະນຳ #15:

ການພ້ອມພຽງຂອງຄອບຄົວ ເປັນສິ່ງທຳອິດ ແລະ ເປັນທາງເລືອກທີ່ມັກຖືກນຳໃຊ້ໃນການຮັບຮອງເອົາເດັກ. ສິ່ງນີ້ຄວນຖືກດຳເນີນການໃນທຸກໆສະຖານະການທີ່ເຫັນວ່າມີຄວາມປອດໄພ ແລະ ດີຕໍ່ກັບສຸຂະພາບຂອງເດັກ. ໃນກໍລະນີທີ່ເປັນໄປບໍ່ໄດ້, ທາງເລືອກອື່ນທີ່ຈະເອົາເດັກໄປຢູ່ ລວມມີ ການເບິ່ງແຍງໃນຄອບຄົວໃຫຍ່/ຄອບຄົວຂະຫຍາຍ/ຕາມລຳດັບເຄືອຍາດ, ຄອບຄົວອຸປະຖຳ, ກຸ່ມບ້ານນ້ອຍໆ ແລະ ອື່ນໆ. ສູນພັກເຊົາ ແລະ ສະຖາບັນຕ່າງໆ ຄວນພິຈາລະນາໃຫ້ເປັນທາງເລືອກສຸດທ້າຍ ໃນກໍລະນີທີ່ຜູ້ຖືກເຄາະຮ້າຍເປັນເດັກ ແລະ ຄວນເປັນວິທີແກ້ໄຂບັນຫາຊົ່ວຄາວ ເມື່ອມີຄວາມຈຳເປັນ. ຍ້ອນວ່າເດັກ ແລະ ໄວໜຸ່ມເປັນກຸ່ມທີ່ມີຄວາມແຕກຕ່າງກັນ (ແຕກຕ່າງດ້ານອາຍຸ, ເພດ, ວຸດທິພາວະ, ລະດັບການພັດທະນາ, ປະສົບການທີ່ຖືກຄ້າມະນຸດ, ສະຖາບສ່ວນຕົວ ແລະ ຄອບຄົວ, ແລະ ຄວາມຕ້ອງການໃນການຊ່ວຍເຫຼືອ) ເຊິ່ງຄວນມີທາງເລືອກຫຼາຍລະດັບທີ່ແຕກຕ່າງກັນ.

## ຄຳແນະນຳ #16:

ການບໍລິການ ເພື່ອສະໜັບສະໜູນຜູ້ຖືກເຄາະຮ້າຍທີ່ເປັນເດັກ ໃນການກັບຄືນສູ່ສັງຄົມ ຄວນປັບໃຫ້ເຂົ້າກັບບຸກຄົນ ແລະ ຄວາມຕ້ອງການສະເພາະ ແລະ ຕ້ອງໄດ້ອອກແບບ ແລະ ຈັດຕັ້ງປະຕິບັດດ້ວຍວິທີການທີ່ເປັນມິດກັບເດັກ.[57] ຫຼັກການກ່ຽວກັບສິດທິເດັກ ແລະ ຫຼັກການສະເພາະຂອງເດັກ ຄວນສະໜັບສະໜູນວຽກນີ້.

57 ການທົບທວນລະດັບພາກພື້ນຂອງ ACWC

## ກຸ່ມຜູ້ດ້ອຍໂອກາດ: ຄໍາແນະນໍາຕໍ່ກັບ DNH

ສະຖານະທາງດ້ານເພດ ແລະ ເສດຖະກິດ-ສັງຄົມ ຂອງບຸກຄົນ ກໍານົດຄວາມສ່ຽງຕໍ່ກັບການຄ້າມະນຸດ. ໃນບາງກຸ່ມ ອີງໃສ່ດ້ານເພດຍິງ-ຊາຍ, ເພດ, ອາຍຸ, ຊົນເຜົ່າ, ສາສະໜາ, ລາຍຮັບໃນຄົວເຮືອນ, ລະດັບການສຶກສາ, ສະຖານະດ້ານພົນລະເມືອງ ແລະ ຄວາມພິການ ອາດຈະເຮັດໃຫ້ມີຄວາມສ່ຽງທີ່ຈະຖືກຄ້າມະນຸດຫຼາຍຂຶ້ນ. ອີງການ UNDOC ພິຈາລະນາຜູ້ຖືກເຄາະຮ້າຍ ເປັນສະຖານະການສ່ວນບຸກຄົນ, ສະພາບການ ຫຼື ສະພາບແວດລ້ອມ.[58] ໃນຂະນະດຽວກັນ ສະຖານະທາງດ້ານເພດຍິງ-ຊາຍ ແລະ ເສດຖະກິດ-ສັງຄົມ ຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຍັງມີຜົນກະທົບຕໍ່ກັບຄວາມສາມາດຂອງເຂົາເຈົ້າໃນການເຖິງສິດ, ການປົກປ້ອງ ແລະ ການຊ່ວຍເຫຼືອ.

ການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ທີ່ມີການແຜ່ລະບາດຢ່າງຕໍ່ເນື່ອງ ຈະເພີ່ມຄວາມສ່ຽງໃຫ້ແກ່ແຮງງານເຄື່ອນຍ້າຍ ແລະ ກຸ່ມຄົນຜູ້ດ້ອຍໂອກາດອື່ນໆໃນອາຊີຕາເວັນອອກສ່ຽງໃຕ້ ແລະ ເພີ່ມເງື່ອນໄຂໃຫ້ແກ່ການຄ້າມະນຸດ ແລະ ການເປັນຂ້າທາດສະໄໝໃໝ່. ໄພຫວ່າງງານທີ່ເພີ່ມຂຶ້ນເປັນຈໍານວນຫຼວງຫຼາຍ ອັນເນື່ອງມາຈາກການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19, ໝາຍຄວາມວ່າ ຜູ້ຄ້າມະນຸດ ແລະ ຜູ້ຈັດຫາ, ນາຍໜ້າ ແລະ ຜູ້ໃຊ້ແຮງງານທີ່ບໍ່ມີຫຼັກສິນທໍາໃດໆ ບໍ່ມີຄວາມຫຍຸ້ງຍາກທີ່ຈະກໍານົດເປົ້າໝາຍ ຜູ້ທີ່ເປັນກຸ່ມຄົນຜູ້ດ້ອຍໂອກາດ, ຢູ່ໃນສະພາບການທີ່ຫຍຸ້ງຍາກ ຫຼື ຂັດສົນຈາກຄວາມຕ້ອງການໃນການຈ້າງງານ.[59]

58 ອີງການ UNODC. ບັນທຶກແນະນໍາກ່ຽວກັບ ການສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອເປັນວິທີການໃນການຄ້າມະນຸດ ໃນມາດຕາທີ 3 ຂອງອານຸສັນຍາວ່າດ້ວຍການປ້ອງກັນ, ການປາບປາມ ແລະ ການລົງໂທດການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກ ເຊິ່ງເປັນສ່ວນໜຶ່ງໃຫ້ແກ່ສົນທິສັນຍາສາກົນວ່າດ້ວຍການຕ້ານອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ (ວຽນນາ: 2012), ແຖວທີ 2.3. ລາຍລະອຽດເພີ່ມເຕີມ https://www.unodc.org/documents/human-trafficking/2012/UNODC_2012_Guidance_Note_-_Abuse_of_a_Position_of_Vulnerability_E.pdf

59 ອີງການສະຫະປະຊາຊາດ ເພື່ອຕ້ານອາຊະຍາກໍາ ແລະ ຢາເສບຕິດ. ບົດລາຍງານກ່ຽວກັບການຄ້າມະນຸດໃນທົ່ວໂລກ. 2020. (ວຽນນາ: 2020) https://www.unodc.org/documents/data-and-analysis/tip/2021/GLOTiP_2020_15jan_web.pdf

**ຄຳແນະນຳ #1:**

ຜູ້ສຳພາດ ແລະ ຜູ້ສະໜອງການບໍລິການ ຕ້ອງໄດ້ປະເມີນວ່າພວກເຂົາມີທັດສະນະຄະຕິດ້ານລົບ, ອັກຄະຕິ ຫຼື ຄວາມຮູ້ສຶກຢຽດເຊື້ອຊາດກ່ຽວກັບບຸກຄົນທີ່ພວກເຂົາໄດ້ສຳພາດ/ໃຫ້ການຊ່ວຍເຫຼືອ ຫຼື ບໍ່.

**ຄຳແນະນຳ #2:**

ຈັດຫາຜູ້ແປພາສາໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ມາຈາກກຸ່ມຄົນຊົນເຜົ່າ ແລະ ກຸ່ມຄົນທີ່ມີຄວາມພິການ. ຮັບປະກັນວ່າຜູ້ຖືກເຄາະຮ້າຍມີຄວາມສະບາຍໃຈກ່ຽວກັບເພດຍິງ-ຊາຍຂອງຜູ້ແປພາສາ.

**ຄຳແນະນຳ #3:**

ສະເໜີໃຫ້ຜູ້ຍິງ ແລະ ເດັກຍິງ ແລະ ໄວໜຸ່ມຍິງ ກ່ຽວກັບທາງເລືອກທີ່ຈະເບິ່ງແຍງໂດຍຜູ້ປະຕິບັດຕົວຈິງ ທີ່ເປັນເພດຍິງ. ຖ້າບໍ່ມີ, ຜູ້ຍິງຄວນຢູ່ໃນບຳເວລາກວດຮ່າງກາຍ. ເຊັ່ນດຽວກັນ, ມັນເປັນສິ່ງທີ່ສຳຄັນ ທີ່ຕ້ອງສະເໜີທາງເລືອກໃຫ້ຜູ້ຊາຍ ແລະ ໄວໜຸ່ມເພດຊາຍ ທີ່ຈະຖືກເບິ່ງແຍງໂດຍຜູ້ປະຕິບັດຕົວຈິງທີ່ເປັນເພດຊາຍ.[60]

**ຄຳແນະນຳ #4:**

ເນື່ອງຈາກສະຖານະທີ່ດ້ອຍໂອກາດທາງສັງຄົມຂອງພວກເຂົາ, ຄວາມສ່ຽງຫຼາຍຢ່າງທີ່ກ່ຽວກັບກັບກຸ່ມຄົນຜູ້ດ້ອຍໂອກາດໃນການດຳເນີນຄະດີຕາມກົດໝາຍຄວນຈະໄດ້ຮັບການປະເມີນຢ່າງລະອຽດ ແລະ ປຶກສາຫາລືກັບຜູ້ຖືກເຄາະຮ້າຍກ່ອນການດຳເນີນການ. ສິດໃນການໄດ້ຮັບຂໍ້ມູນ, ການຮັກສາຄວາມລັບ ແລະ ຄວາມເປັນສ່ວນຕົວຂອງພວກເຂົາ ຄວນຖືກນຳໃຊ້ໃນທີ່ນີ້.

**ຄຳແນະນຳ #5:**

ຈັດຫາການຊ່ວຍເຫຼືອສະເພາະ ເຊັ່ນ: ຜູ້ປົກຄອງຕາມກົດໝາຍ ໃຫ້ແກ່ບຸກຄົນທີ່ມີຄວາມພິການທາງດ້ານສະໝອງ, ຄວາມພິການທາງດ້ານຈິດໃຈ ຫຼື ບຸກຄົນທີ່ບໍ່ສາມາດເຂົ້າຮ່ວມຢ່າງເຕັມສ່ວນໃນຂັ້ນຕອນຄວາມຍິນຍອມ. ຜູ້ປົກຄອງຕາມກົດໝາຍແມ່ນບຸກຄົນທີ່ໄດ້ຮັບມອບອຳນາດຢ່າງເຕັມສ່ວນຈາກບຸກຄົນ ຫຼື ທີ່ປຶກສາງທາງດ້ານກົດໝາຍ ທີ່ໄດ້ຮັບມອບອຳນາດຢ່າງເປັນລາຍລັກອັກສອນ. ອົງການຈັດຕັ້ງຕ່າງໆ ຄວນຈະປຶກສາກັບທະນາຍຄວາມ ກ່ຽວກັບຄວາມຍິນຍອມຂອງບຸກຄົນ ຜູ້ທີ່ບໍ່ໄດ້ຢູ່ໃນຖານະທີ່ຈະໃຫ້ຄວາມຍິນຍອມທີ່ຖືກຕ້ອງຕາມກົດໝາຍໄດ້ອັນເນື່ອງມາຈາກເງື່ອນໄຂທາງດ້ານຮ່າງກາຍ ແລະ ຈິດໃຈ.[61]

60 ອົງການ IOM (2007)

61 ອົງການ IOM (2007)

## ຄໍາແນະນໍາ #6:

ຄວາມຕ້ອງການສະເພາະຂອງກຸ່ມຄົນຜູ້ດ້ອຍໂອກາດ ຄວນຈະເອົາໃຈໃສ່ຕາມຈຸດປະສົງ ແລະ ໃນລັກສະນະທີ່ບໍ່ມີອັກຄະຕິ ໂດຍບໍ່ໃຊ້ພາສາທີ່ສື່ເຖິງຄວາມອິດົນສົງສານ ຫຼື ຄວາມອັບອາຍ.

## ຄໍາແນະນໍາ #7:

ຂໍ້ມູນທັງໝົດ ຄວນຈັດຫາໃຫ້ໃນລັກສະນະທີ່ສອດຄ່ອງກັບຄວາມຕ້ອງການຂອງບຸກຄົນທີ່ກຶກໜັງສື ແລະ ຂໍ້ມູນດັ່ງກ່າວ ຄວນຖືກຈັດຫາໃຫ້ໃນພາສາທີ່ບຸກຄົນເຫຼົ່ານັ້ນເຂົ້າໃຈໄດ້.

## ຄໍາແນະນໍາ #8:

ຜູ້ຖືກເຄາະຮ້າຍຄວນຈະໄດ້ຮັບຂໍ້ມູນຢ່າງເຕັມສ່ວນກ່ຽວກັບສິດ, ໂອກາດ, ທາງເລືອກ ແລະ ການເຂົ້າຮ່ວມຢ່າງຫ້າວຫັນຕໍ່ກັບທຸກໆການຕັດສິນໃຈກ່ຽວກັບການບໍລິການທີ່ພວກເຂົາຕ້ອງການ (ຫຼື ບໍ່ຕ້ອງການ) ທີ່ຈະໄດ້ຮັບ.[62]

## ຄໍາແນະນໍາ #9:

ຄໍານຶງເຖິງບັນຖັດຖານທາງສັງຄົມ ທີ່ມີຜົນກະທົບດ້ານລົບຕໍ່ກັບຜູ້ຍິງ ແລະ ສິ່ງທ້າທາຍສະເພາະທີ່ຜູ້ລອດຊີວິດ ທີ່ເປັນແມ່ຍິງ, ຜູ້ຊາຍ ແລະ ເດັກ ໄດ້ປະສົບພົບພໍ້ ແລະ ຮັບປະກັນວ່າທຸກໆການບໍລິການ ໄດ້ຮັບການອອກແບບ ເພື່ອຕອບສະໜອງຕໍ່ກັບບັນດາມິຕິຕ່າງໆເຫຼົ່ານີ້ ເຊັ່ນ: ການສະໜັບສະໜູນດ້ານຈິດຕະ-ສັງຄົມ,ຂໍ້ມູນທາງດ້ານກົດໝາຍ, ຜູ້ຕາງໜ້າ ແລະ ສະຖານທີ່ພັກເຊົາທີ່ປອດໄພ.[63]

## ຄໍາແນະນໍາ #10:

ຮັບປະກັນວ່າຜູ້ຖືກເຄາະຮ້າຍ ໄດ້ເຂົ້າເຖິງການບໍລິການຢ່າງກ້ວາງຂວາງຈາກຫຼາຍຂະແໜງການ ທີ່ຕອບສະໜອງດ້ານເພດຍິງ-ຊາຍ ເຊັ່ນ ການປຶກສາດ້ານຈິດຕະ-ສັງຄົມ, ການຊ່ວຍເຫຼືອທາງດ້ານກົດໝາຍ, ການບໍລິການດ້ານສັງຄົມ ແລະ ສຸຂະພາບຈະເລີນພັນ, ສະຖານທີ່ສໍາລັບແມ່ຍິງເທົ່ານັ້ນ, ການສະໜັບສະໜູນຈາກເພື່ອນ ແລະ ການເຂົ້າເຖິງສູນພັກເຊົາຂອງແມ່ຍິງ ແລະ ທີ່ພັກຊົ່ວຄາວ.

62 Surtees, R. ການສະໜັບສະໜູນການກັບຄືນສູ່ສັງຄົມຂອງຜູ້ຖືກຄ້າມະນຸດ. ຄູ່ມືຂອງອະນຸພາກພື້ນແມ່ນໍ້າຂອງ (ກຸງເທບ, ສະຖາບັນ NEXUS, ອົງການ UN-ACT ແລະ ອົງການສຸພານິມິດ, 2017).

63 Ibid.

## ຄຳແນະນຳ #11:

ຮັບປະກັນວ່າການພັດທະນາ ແຜນງານດ້ານການພັດທະນາທັກສະ ແລະ ການຝຶກອົບຮົມ ໄດ້ຫຼີກລ້ຽງການຢໍ້າຄືນ ແນວຄິດຍຶດຕິດແບບດັ້ງເດີມກ່ຽວກັບເພດຍິງ-ຊາຍ ທີ່ຈະສ້າງຄວາມສ່ຽງໃຫ້ແກ່ແມ່ຍິງທີ່ມີຄ່າແຮງງານທີ່ຕໍ່າ ແລະ ອາຊີບທີ່ຖືກຂູດຮີດ. ໃນການເຮັດສິ່ງນີ້, ການພັດທະນາທັກສະ ແລະ ການຝຶກອົບຮົມຄວນເນັ້ນໃສ່ການແກ້ໄຂບັນຫາການແບ່ງແຍກອາຊີບ ໂດຍຈັດຝຶກອົບຮົມໃນອາຊີບ ແລະ ຂະແໜງການທີ່ມີຄຸນນະພາບ ແລະ ຜົນຕອບແທນທີ່ສູງ ແລະ ສົ່ງເສີມແມ່ຍິງມີສ່ວນຮ່ວມໃນການເຂົ້າຮ່ວມການຝຶກອົບຮົມນີ້ ຢ່າງຫ້າວຫັນ ຖ້າຫາກວ່າພວກເຂົາຕ້ອງການ.[64]

## ຄຳແນະນຳ #12:

ນຳສະເໜີມາດຕະການ ທີ່ແກ້ໄຂການຕີກາບາບຂອງຜູ້ຖືກເຄາະຮ້າຍຈາກການຂູດຮີດທາງເພດ ແລະ ບຸກຄົນທີ່ມີເຊື້ອພະຍາດ HIV ຫຼື ພະຍາດຕິດຕໍ່ທາງເພດສຳພັນ ໂດຍສ້າງຕັ້ງການບໍລິການດ້ານສຸຂະພາບຈະເລີນພັນ ແລະ ຄວາມລັບດ້ານເພດ ໂດຍອີງໃສ່ສິດທິ, ກຸ່ມສະໜັບສະໜູນເພື່ອນມິດ, ການເຮັດວຽກໂດຍກົງກັບຄອບຄົວ, ຊຸມຊົນ ແລະ ອົງການຈັດຕັ້ງທາງສັງຄົມ. [65]

## ຄຳແນະນຳ #13

ແຜນງານສຳລັບການກັບຄືນສູ່ສັງຄົມຂອງແຮງງານເຄື່ອນຍ້າຍທີ່ສົ່ງກັບ ຄວນຈະພິຈາລະນາເງື່ອນໄຂທາງດ້ານເສດຖະກິດ-ສັງຄົມ ໃນປະເທດຕົ້ນກຳເນີດຂອງເຂົາເຈົ້າ ບໍ່ພຽງແຕ່ສຳລັບເຂົາເຈົ້າເທົ່ານັ້ນ ແຕ່ຍັງລວມເອົາຄອບຄົວຂອງເຂົາເຈົ້ານຳ.

## ຄຳແນະນຳ #14:

ຮ່ວມມືກັບໜ່ວຍງານ ແລະ ສະຖາບັນອື່ນໆ ເພື່ອຮັບປະກັນການບໍລິການສະໜັບສະໜູນທີ່ກວ້າງຂວາງ ແລະ ການເບິ່ງແຍງທີ່ຕໍ່ເນື່ອງ. [66]

64 ກຸ່ມປະສານງານຂອງ ICAT ວ່າດ້ວຍການສົ່ງຂໍ້ສະເໜີແນະນຳຂອງ CEDAW.

65 Ibid.

66 Surtees, R (2017).

# ກໍລະນີສຶກສາ

## ກໍລະນີສຶກສາ #1 [67] ການກໍານົດຕົວຜູ້ຖືກເຄາະຮ້າຍຂອງເຈົ້າໜ້າທີ່ດ່ານໜ້າ

ຣົວ ແມ່ນຍິງໜຸ່ມ ຜູ້ທີ່ໄດ້ຖືກຄັດເລືອກໃຫ້ເຮັດວຽກໂດຍບໍລິສັດທີ່ສັນຍາກັບລາວວ່າຈະໄດ້ເຮັດວຽກໃນເມືອງຫຼວງ ໃນຕໍາແໜ່ງຊ່າງຕັດຫຍິບ. ລາວໄດ້ຢືມເງິນຈາກໝູ່ເພື່ອນ ແລະ ຄອບຄົວ ເພື່ອຈ່າຍຄ່າທໍານຽມໃຫ້ແກ່ຜູ້ຈັດຫາງານ ແຕ່ເມື່ອລາວໄປຮອດຕົວເມືອງ, ລາວຈຶ່ງຮູ້ວ່າ ໜີ້ ຂອງລາວທີ່ມີຕໍ່ບໍລິສັດຈັດຫາງານນັ້ນມີຫຼາຍກວ່າສອງເທົ່າ ແລະ ລາວ ພ້ອມດ້ວຍແມ່ຍິງອີກ 25 ຄົນ ຫຼືຫຼາຍກວ່ານັ້ນ ໄດ້ຖືກໂນ້ມນ້າວໃຫ້ເຮັດວຽກໃນສະຖານທີ່ບໍລິການອາບອົບນວດ ເພື່ອທີ່ຈະຫາເງິນໄດ້ຫຼາຍ ແລະ ໄດ້ໄວຂຶ້ນ. ທໍາອິດ ລາວເຊື່ອວ່າມັນເປັນວຽກນວດແທ້ໆ, ແຕ່ລາວກໍຮູ້ວ່າ ລາວຖືກຄາດຫວັງໃຫ້ບໍລິການທາງເພດແກ່ລູກຄ້າ. ຫຼັງຈາກທີ່ບໍລິການລູກຄ້າຄົນທໍາອິດ, ລາວຮູ້ສຶກມີຄວາມລະອາຍໃຈ ແລະ ຮູ້ສຶກວ່າຖືກຕົວະ. ເຈົ້າຂອງຮ້ານອາບອົບນວດບອກລາວວ່າ ບໍ່ມີໃຜທີ່ຈະຈ້າງລາວໃຫ້ເຮັດວຽກເປັນຊ່າງຕັດຫຍິບອີກຕໍ່ໄປ ກັບປະຫວັດການເຮັດວຽກຂອງລາວທີ່ເປັນຄົນຂາຍບໍລິການທາງເພດ.

ມື້ໜຶ່ງ, ສະຖານທີ່ບໍລິການອາບອົບນວດ ໄດ້ຖືກກວດຄົ້ນ, ຣົວ ແລະ ແມ່ຍິງ ແລະ ເດັກຍິງຄົນອື່ນໆ ໄດ້ຖືກກອບກູ້ອອກຈາກສະຖານະການທີ່ຫຍຸ້ງຍາກນັ້ນ. ຕໍາຫຼວດ ແລະ ນັກສືບທີ່ກ່ຽວຂ້ອງກັບການກວດຄົ້ນ ເກືອບຈະເຊື່ອແລ້ວວ່າແມ່ຍິງເຫຼົ່ານີ້ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ນັກສືບຄົນໜຶ່ງ ກໍາລັງສໍາພາດແມ່ຍິງ ແລະ ການສໍາພາດດໍາເນີນໄປບໍ່ໄດ້ດີປານໃດ. ຣົວ ແມ່ນຜູ້ຍິງຄົນທີ່ສາມທີ່ນັກສືບໄດ້ສໍາພາດ ແລະ ຣົວເອງ ຄືກັບແມ່ຍິງຄົນອື່ນໆ ທີ່ຢັ້ງຢືນວ່າຕົນເອງບໍ່ໄດ້ຕົກເປັນຂ້າທາດ.

ຣົວ: ຂ້ອຍໄດ້ເງິນດີ. ຂ້ອຍສາມາດຫາເງິນໃຫ້ຕົນເອງ ແລະ ຄອບຄົວຂ້ອຍໄດ້. ຍ້ອນແນວນັ້ນຂອງຈຶ່ງຢູ່ນີ້. ຂ້ອຍມີອິດສະລະທີ່ຈະໄປຈະມາໄດ້. ມັນເປັນທາງເລືອກຂອງຂ້ອຍ.

ນັກສືບ: ແຕ່ພວກເຮົາໄດ້ຮັບຂໍ້ມູນທີ່ໜ້າເຊື່ອຖືໄດ້ວ່າ ເຈົ້າອາດຈະຖືກພາມາບ່ອນນີ້ ຍ້ອນຖືກຫຼອກຫຼວງ. ເຈົ້າບໍ່ຄິດບໍ່ວ່າ ເຈົ້າໄດ້ມານີ້ ເພື່ອຈະເຮັດອັນອື່ນ?

ຣົວ: ແມ່ນແລ້ວ. ຂ້ອຍຄິດວ່າຂ້ອຍຈະໄດ້ເຮັດວຽກເປັນຊ່າງຕັດຫຍິບ. ແຕ່ຂ້ອຍເຫັນແລ້ວວ່າສາມາດຫາເງິນໄດ້ຫຼາຍໃນທຸລະກິດນີ້.

ນັກສືບ: ບໍ່ມີໃຜບັງຄັບເຈົ້າໃຫ້ເຮັດວຽກນີ້ບໍ່? ບໍ່ມີໃຜບອກເຈົ້າບໍ່ວ່າ ມັນບໍ່ເປັນແຕ່ທາງດຽວທີ່ເຈົ້າຈະຊໍາລະໜີ້ບໍ່?

ຣົວ: ບາງທີ່ຂ້ອຍອາດຈະໄດ້ຮັບການຊ່ວຍເຫຼືອຫຼາຍກວ່ານີ້ ຖ້າຂ້ອຍບອກເຈົ້າວ່າ ຂ້ອຍຖືກມັດໄວ້ກັບຕຽງນອນຂ້ອຍທຸກໆຄືນ ແລະ ພວກເຂົາຕີຂ້ອຍ ແລະ ບັງຄັບຂ້ອຍໃຫ້ເຮັດວຽກນີ້. ແຕ່ນັ້ນ ບໍ່ແມ່ນຄວາມຈິງ.

ນັກສືບ: ອື່ມ, ຂ້ອຍຕ້ອງການຄວາມຈິງເທົ່ານັ້ນ, ແຕ່ຂ້ອຍກັງວົນວ່າເຈົ້າເວົ້າສິ່ງນີ້ອອກມາຍ້ອນວ່າເຈົ້າມີຄວາມຢ້ານກົວ. ເຈົ້າກໍຮູ້, ຖ້າທຸກຢ່າງເປັນໄປຕາມທີ່ເຈົ້າເວົ້າ, ເຈົ້າອາດຈະຕ້ອງກັບບ້ານກັບໄປຫາຄອບຄົວ. ສິ່ງນີ້ເປັນສິ່ງທີ່ເຈົ້າຕ້ອງການບໍ່?

ຣົວ: ບໍ່...ບໍ່...ຂໍຮ້ອງລະ, ເຈົ້າຈະບໍ່ບອກຄອບຄົວຂ້ອຍແມ່ນບໍ່? ກະລຸນາຢ່າບອກຄອບຄົວຂອງຂ້ອຍວ່າເຈົ້າພົບຂ້ອຍໄດ້ແນວໃດ........

67 ດັດແກ້ຈາກ ການຊ່ວຍເຫຼືອຜູ້ລອດຊີວິດຈາກການຄ້າມະນຸດ: ສຶກສາກໍລະນີທີ່ມີວັດທະນະທໍາທີ່ຫຼາກຫຼາຍ . ໂຄງການຂອງ O.L. ມູນນິທິ Pathy Family. (2017).

## **ຈຸດຊີ້ບອກ** ການບໍ່ເຮັດໄພອັນຕະລາຍໃດໆ

- ຫຼາຍໆສິ່ງສາມາດຈໍາກັດອິດສະລະພາບ ລວມທັງ ຄວາມຮູ້ສຶກລະລາຍໃຈກັບສະຖານະການຂອງຕົນເອງ. ມັນເປັນປະສົບການທົ່ວໄປຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຫຼາຍຄົນ. ໃນຂະນະທີ່ຮົວອາດຈະມີອິດສະລະໃນການໄປ-ມາ ແຕ່ລາວມີຄວາມຢ້ານກົວຢ່າງຊັດເຈນວ່າຄອບຄົວລາວຈະຮູ້.

- ຮົວ ອາດຈະເຊື່ອວ່າ ການເຮັດວຽກເປັນຄົນບໍລິການທາງເພດ ບໍ່ສາມາດກັບຄືນສູ່ສັງຄົມຫຼັກໄດ້ອີກ. ໃນກໍລະນີນີ້ ລາວເຊື່ອວ່າ ມັນຈະດີກວ່າສໍາລັບລາວໃນໄລຍະຍາວ ທີ່ຈະປົກປ້ອງຜູ້ຄ້າມະນຸດ ແລະ ຍັງມີລາຍຮັບເພື່ອສະໜັບສະໜູນລາວ ແລະ ຄອບຄົວຂອງລາວ.

- ດ້ວຍຄວາມຫງຸດຫງິດ, ນັກສືບໄດ້ມີການຂົ່ມຂູ່ທາງອ້ອມວ່າຮົວຈະຖືກສົ່ງກັບບ້ານ ຖ້າຫາກລາວບໍ່ໃຫ້ຄວາມຮ່ວມມື. ມັນອາດຈະເປັນກໍລະນີນີ້, ແຕ່ວິທີການທີ່ລາວເວົ້າ ຮົວ ບໍ່ມີອໍານາດ ແລະ ບໍ່ມີທາງເລືອກອື່ນທີ່ຈະເລືອກໄດ້.

- ມັນເປັນສິ່ງສໍາຄັນທີ່ຕ້ອງຈື່ໄວ້ວ່າເປົ້າໝາຍໃນການສໍາພາດ ບໍ່ແມ່ນເພື່ອໃຫ້ໄດ້ຂໍ້ມູນດ້ວຍວິທີການໃດກໍຕາມ, ແຕ່ເພື່ອຊ່ວຍໃຫ້ກໍາຈັດສິ່ງທ້າທາຍ ໃນການບອກຄວາມຈິງທັງໝົດ. ເມື່ອສິ່ງທ້າທາຍເຫຼົ່ານັ້ນໄດ້ຖືກລະບຸ ແລະ ຖືກຈໍາກັດໃຫ້ໄດ້ຫຼາຍທີ່ສຸດ. ທະນາຍຄວາມ, ຕໍາຫຼວດ ແລະ ຜູ້ສະໜອງການບໍລິການ ຕ້ອງຮັບຮູ້ ແລະ ຍອມຮັບທາງເລືອກຂອງຜູ້ຖືກເຄາະຮ້າຍວ່າພວກເຂົາຈະເວົ້າ ຫຼື ບໍ່. ມັນບໍ່ແມ່ນຫຼັກຈັນຍາທໍາທີ່ຕ້ອງຕົວະ/ໃຊ້ເລ່ລ່ຽມ, ຫຼອກລວງ ຫຼື ຂົ່ມຂູ່ຜູ້ຖືກເຄາະຮ້າຍ ເພື່ອໃຫ້ເວົ້າ. ການໃຊ້ເລ່ລ່ຽມດັ່ງກ່າວ ຈະເປັນຢໍ້າຄືນອໍານາດໃນການຂູດຮີດ ແລະ ບໍ່ຮັບປະກັນວ່າຈະໄດ້ຮັບຂໍ້ມູນທີ່ຖືກຕ້ອງ.

68 ດັດແກ້ຈາກ ການຊ່ວຍເຫຼືອຜູ້ລອດຊີວິດຈາກການຄ້າມະນຸດ: ສຶກສາກໍລະນີທີ່ມີວັດທະນະທຳທີ່ຫຼາກຫຼາຍ . ໂຄງການຂອງ O.L. ມູນນິທິ Pathy Family. (2017).

## ກໍລະນີສຶກສາ #2 [68] ທະນາຍຄວາມ ແລະ ພະນັກງານອົງການ

ທະນາຍຄວາມຈິດອາສາທາງດ້ານກົດໝາຍ ທີ່ເປັນເພດຊາຍ ແລະ ພະນັກງານອົງການ NGO ໄດ້ປຶກສາຫາລືກ່ຽວກັບກໍລະນີຂອງເດັກຊາຍ ທີ່ອ້າງວ່າລາວເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ລາວບອກວ່າ ລາວຖືກພາມາປະເທດນີ້ຕອນທີ່ລາວມີອາຍຸ 17 ປີ ແລະ ຖືກບັງຄັບໃຫ້ເປັນໂສເພນີ, ແຕ່ວ່າເລື່ອງລາວບໍ່ມີຫຍັງເພີ່ມເຕີມ.

ທະນາຍຄວາມ: ມັນດຳເນີນບໍ່ສະດວກ. ມັນເປັນໄປບໍ່ໄດ້ເລີຍທີ່ຈະໄດ້ເລື່ອງໂດຍກົງຈາກລາວ. ລາວຕ້ອງເຂົ້າໃຈວ່າ ລາວຕ້ອງບອກຂ້ອຍວ່າມັນເກີດຫຍັງຂຶ້ນແທ້ ຖ້າຂ້ອຍຈະໃຫ້ການຊ່ວຍເຫຼືອແກ່ລາວ.

ພະນັກງານອົງການ NGO: ມັນຕ້ອງໃຊ້ເວລາເພື່ອສ້າງຄວາມເຊື່ອໃຈກັບລາວ. ຂ້ອຍໄດ້ເຮັດວຽກກັບລາວປະມານສອງສາມອາທິດ ແລະ ຕອນນີ້ລາວກຳລັງເປີດໃຈ.

ທະນາຍຄວາມ: ຂ້ອຍເຂົ້າໃຈ ແຕ່ພວກເຮົາບໍ່ມີເວລາ. ພວກເຮົາຕ້ອງການຫຼັກຖານທີ່ພຽງພໍ ເພື່ອຈະນຳໄປແຈ້ງຕຳຫຼວດ ແລະ ຖ້າເວລາຜ່ານໄປຫຼາຍເທົ່າໃດ ພວກເຮົານິໂອກາດທີ່ຈະປະສົບຜົນສຳເລັດໜ້ອຍ. ຂ້ອຍຮູ້ວ່າຂ້ອຍກຳລັງກົດດັນລາວ, ແຕ່ລາວຕ້ອງເຂົ້າໃຈວ່າ ຖ້າລາວບໍ່ໃຫ້ຄວາມຮ່ວມມື ລາວຈະຖືກສົ່ງໄປບ້ານ. ສິ່ງນີ້ບໍ່ແມ່ນການຂົ່ມຂູ່ ແຕ່ມັນເປັນເລື່ອງຈິງ.

ພະນັກງານອົງການ NGO: ຂ້ອຍບໍ່ຄິດວ່າ ລາວຈະເຂົ້າໃຈວ່າເປັນຫຍັງພວກເຮົາຈຶ່ງຖາມລາວ ເພື່ອໃຫ້ຂໍ້ມູນທຸກຢ່າງ ແລະໃຫ້ລາຍລະອຽດແກ່ພວກເຮົາທຸກຢ່າງ. ແນ່ນອນທີ່ສຸດມັນເປັນການສ້າງຄວາມບອບຊ້ຳທາງດ້ານຈິດໃຈຊ້ຳຄືນແກ່ລາວ.

ທະນາຍຄວາມ: ອື່ມ. ຕອນນີ້ ເບິ່ງຄືວ່າລາວກຳລັງຕົວະຢູ່. ທຳອິດ ລາວບອກຂ້ອຍວ່າ ລາວມາທີ່ນີ້ດ້ວຍການຍ່າງມາ, ແລ້ວລາວບອກຂ້ອຍວ່າ ທີ່ຈິງແລ້ວລາວມາທາງລົດບັນທຸກ. ແລ້ວລາວບອກຂ້ອຍວ່າ ລາວບໍລິການລູກຄ້າ 15 ຄົນ ຕໍ່ມື້, ແຕ່ມື້ຕໍ່ມາ ລາວເວົ້າວ່າລາວບໍລິການ 7 ຄົນ, ແລ້ວກໍ 30 ຄົນ. ລາວບອກວ່າລາວຖືກກັງໄວ້ ແຕ່ລາວກະບອກເວລາທີ່ລາວອອກໄປນອກກັບໝູ່ລາວ. ລາວບອກຂ້ອຍວ່າລາວອາຍຸ 17 ປີ ແລ້ວລາວບອກຂ້ອຍວ່າ ລາວ 20 ປີ. ມັນບໍ່ຈົບສິ້ນ. ຂ້ອຍບໍ່ຮູ້ວ່າກຳລັງຕົວະ ເພື່ອປົກປ້ອງໃຜບາງຄົນ ຫຼື ລາວຢ້ານອັນໃດ ແຕ່ຂ້ອຍບໍ່ສາມາດຊ່ວຍລາວ ຫຼື ເດັກນ້ອຍຄົນອື່ນໆໄດ້ ຈົນກວ່າຂ້ອຍຈະໄດ້ຂໍ້ມູນຕົງປະເດັນ.

ພະນັກງານອົງການ NGO: ຂ້ອຍບໍ່ຄິດແທ້ໆວ່າລາວຕົວະ. ຂ້ອຍຄິດວ່າລາວສັບສົນ ແລະ ມີຄວາມບອບຊ້ຳດ້ານຈິດໃຈ ທີ່ເຮັດໃຫ້ຄວາມຈື່ຈຳເລື່ອງລາວຕ່າງໆສັບສົນ ແລະ ພວກເຮົາກຳລັງເຮັດວຽກຜ່ານຜູ້ແປພາສາ ແລະ ຂ້ອຍຄິດວ່າຈະເຮັດໃຫ້ມັນຍາກຂຶ້ນອີກ.

## **ຈຸດຊີ້ບອກ ການບໍ່ເຮັດໄພອັນຕະລາຍໃດໆ**

- ຄວາມບອບຊ້ຳ ສາມາດເຮັດໃຫ້ຄວາມຊົງຈຳບໍ່ຊັດເຈັນ ແລະ ຄຸມເຄືອ. ຫຼາຍໆຄົນ ທີ່ມີຄວາມບອບຊ້ຳທາງດ້ານຈິດໃຈຢ່າງຮຸນແຮງ ໃນຂັ້ນຕົ້ນຈະມີຄວາມຫຍຸ້ງຍາກໃນການເລົ່າເລື່ອງທີ່ສອດຄ່ອງກັນ. ໜ່ວຍຄວາມຈຳເຮັດໜ້າທີ່ປົກປ້ອງຜູ້ຖືກເຄາະຮ້າຍ ແລະ ພາບບາງພາບມີຄວາມຊັດເຈນໃນຂະນະທີ່ບາງບາດອາດຈະຖືກປິດກັ້ນໂດຍສົມບູນ. ຖ້າວ່າຜູ້ຖືກຄ້າມະນຸດ ບໍ່ສາມາດຈື່ຈຳ ຫຼື ປ່ຽນແປງເຫດການໄດ້, ບໍ່ໄດ້ໝາຍຄວາມວ່າ ພວກເຂົາຕົວະ ຫຼື ບໍ່ໃຫ້ຄວາມຮ່ວມມື. ມັນເປັນສິ່ງທີ່ຈຳເປັນທີ່ຈະຕ້ອງໄດ້ສະແດງຄວາມອົດທົນ ກ່ຽວກັບບັນຫາຄວາມຈື່ຈຳ ແລະ ບໍ່ກົດກັ້ນບຸກຄົນຈາກການເພີ່ມເພີ່ມ ຫຼື ປ່ຽນແປງເຫດການໃນເບື້ອງຕົ້ນ ແລະ ລາຍລະອຽດກ່ຽວກັບປະສົບການຂອງພວກເຂົາຕາມຫຼັງ ເນື່ອງຈາກຄວາມຊົງຈຳອາດຈະກັບຄືນມາ.

- ເດັກໜຸ່ມຊາຍ ອາດຈະມາຈາກວັດທະນະທຳທີ່ອີງໃສ່ສັນຍາລັກ, ຄຳປຽບທຽບ, ຂໍ້ສະຫຼຸບ ແລະ ສະພາບແວດລ້ອມອ້ອມຂ້າງຫຼາຍກວ່າ ເພື່ອຖ່າຍທອດຄວາມໝາຍ ແທນທີ່ຈະເປັນຄຳເວົ້າ. ແນວໂນ້ມໃນການສື່ສານທາງອ້ອມສາມາດເຮັດໃຫ້ມີຄວາມຫຍຸ້ງຍາກຂຶ້ນ ເມື່ອການສົນທະນາກ່ຽວກັບຫົວຂໍ້ທີ່ມັນຫຍຸ້ງຍາກ ແລະ ເຈັບປວດ ເຊັ່ນ: ຄວາມບອບຊ້ຳທາງດ້ານຈິດໃຈ ແລະ ການຂູດຮີດທາງເພດ. ໃນກໍລະນີນີ້ ເດັກໜຸ່ມຊາຍ ອາດຈະພະຍາຍາມທີ່ຈະເລົ່າເລື່ອງຂອງລາວທັງໝົດ ແຕ່ມັນເຮັດໃຫ້ໄອຍະການສັບສົນ.

- ຜູ້ຖືກເຄາະຮ້າຍ ມີແນວແນ້ວທີ່ຈະປະຕິບັດສະພາບການຂອງຄວາມຢ້ານກົວ - ປະຕິກິລິຍາຄວາມຢ້ານກົວຈາກຜູ້ຄ້າມະນຸດ ໃນການຮ່ວມມື ແລະ ບໍ່ມີຄວາມເຊື່ອໃຈກັບການບັງຄັບໃຊ້ກົດໝາຍອີງໃສ່ປະສົບການຜ່ານມາຈາກປະເທດບ້ານເກີດຂອງຕົນ.

- ຄວາມກົດດັນ ແລະ ຄຳບອກໄບ້ຂອງການຂົ່ມຂູ່ ແລະ ບັງຄັບທີ່ສະແດງອອກໃນການສຳພາດກັບທະນາຍຄວາມນັ້ນ ອາດຈະຢ້ຳເຕືອນຜູ້ຖືກເຄາະຮ້າຍຈາກຜູ້ທີ່ຂູດຮີດລາວ. ສະນັ້ນ, ມັນຈຶ່ງບໍ່ເປັນເລື່ອງທີ່ແປກ ທີ່ເດັກຊາຍໜຸ່ມຈະໃຫ້ຄວາມໄວ້ວາງໃຈທີ່ຊ້າ, ຕໍ່ຕ້ານການເປີດເຜີຍຄວາມຈິງທັງໝົດ ຫຼື ມີຄວາມສັບສົນກ່ຽວກັບລາວລາຍລະອຽດ ແລະ ເລື່ອງລາວທັງໝົດ.

- ລາວອາດຈະບໍ່ສະດວກໃຈທີ່ຖືກສຳພາດໂດຍທະນາຍຄວາມຍິງ/ຊາຍ.

- ເດັກຊາຍໜຸ່ມ ຕ້ອງຕັດສິນໃຈວ່າລາວຕ້ອງການຈະບອກເລື່ອງລາວຂອງລາວໃຫ້ແກ່ທະນາຍຄວາມ ຫຼື ບໍ່. ເພື່ອທີ່ຈະເຮັດການຕັດສິນໃຈນີ້ ລາວຕ້ອງເຂົ້າໃຈວ່າເປັນຫຍັງລາວຈຶ່ງຖືກບອກໃຫ້ເຮັດການສຳພາດ ແລະ ຜົນໄດ້ຮັບທັງໝົດທີ່ອາດຈະເກີດຂຶ້ນ. ມັນເປັນທາງເລືອກຂອງລາວສະເໝີທີ່ຈະເວົ້າ ຫຼື ບໍ່ເວົ້າ.

- ເດັກຊາຍໜຸ່ມ ຄວນໄດ້ຮັບເວລາຢ່າງພຽງພໍເພື່ອຟື້ນຟູ ແລະ ສະທ້ອນຄືນເລື່ອງຂອງລາວໃນບາດກ້າວຕໍ່ໄປ. ຖ້າລາວຕັດສິນໃຈທີ່ບອກເລື່ອງຂອງລາວຕໍ່ກັບທະນາຍຄວາມ, ທະນາຍຄວາມສາມາດເຮັດວຽກກັບລາວ ເພື່ອສ້າງເລື່ອງເລົ່າຂອງລາວຄືນໃໝ່ ເພື່ອທີ່ລາວຈະສາມາດບອກເຫດການໄດ້ຊັດເຈນຂຶ້ນແກ່ທະນາຍຄວາມ.

69 ດັດແກ້ຈາກ ການຊ່ວຍເຫຼືອຜູ້ລອດຊີວິດຈາກການຄ້າມະນຸດ: ສຶກສາກໍລະນີທີ່ມີວັດທະນະທໍາທີ່ຫຼາກຫຼາຍ . ໂຄງການຂອງ O.L. ມູນນິທິ Pathy Family. (2017).

## ກໍລະນີສຶກສາ #3 [69] ທະນາຍຄວາມສໍາພາດຜູ້ຖືກເຄາະຮ້າຍທີ່ເປັນເດັກ

ຂ້ອຍຮູ້ວ່າມັນເປັນສິ່ງທີ່ຍາກ, ແຕ່ຂ້ອຍຕ້ອງການໃຫ້ເຈົ້າບອກວ່າວ່າມັນເກີດຫຍັງຂຶ້ນແທ້, ພ້ອມກັບລາຍລະອຽດໃຫ້ຫຼາຍທີ່ສຸດ. ຊູມີ, ທະນາຍຄວາມທີ່ເຮັດວຽກໃຫ້ແກ່ໜ່ວຍງານທີ່ໃຫ້ການຊ່ວຍເຫຼືອແກ່ຜູ້ລອດຊີວິດຈາກການຄ້າມະນຸດທາງເພດ ເຊິ່ງໄດ້ຢຸດເວົ້າ ໃນເວລາທີ່ຜູ້ແປພາສາ ໄດ້ແປພາສາໃຫ້ແກ່ຜູ້ທີ່ລາວໃຫ້ການຊ່ວຍເຫຼືອ ເຊິ່ງເປັນເດັກຍິງ ອາຍຸ 15 ປີ.

ເດັກຍິງບອກວ່າ ລາວຕ້ອງການທີ່ຈະຊ່ວຍດໍາເນີນຄະດີກັບຜູ້ກະທໍາຜິດ ແລະ ຍິນດີທີ່ຈະບອກທຸກຢ່າງທີ່ເກີດຂຶ້ນ.

ພວກເຮົາພົບກັນຄັ້ງຫຼ້າສຸດ, ເຈົ້າໄດ້ບອກຂ້ອຍກ່ຽວກັບເຫດການທົ່ວໄປທີ່ເກີດຂຶ້ນ ແລະ ໄດ້ບອກວ່າຜູ້ຄ້າມະນຸດ ໄດ້ໃຊ້ຄວາມຮຸນແຮງຕໍ່ເຈົ້າ. ເຈົ້າບອກຂ້ອຍຕື່ມອີກໄດ້ບໍ່ກ່ຽວກັບຄວາມຮຸນແຮງນັ້ນ? ຊູມີ ຢຸດເວົ້າອີກຄັ້ງ ເພື່ອໃຫ້ຜູ້ແປພາສາ ແປພາສາ.

ຈາກນັ້ນເດັກຍິງເລີ່ມເວົ້າ. ລາວເວົ້າເປັນເວລາດົນ ແລະ ເລີ່ມຮ້ອງໄຫ້. ເຖິງແມ່ນວ່າ ຊູມີ ຈະບໍ່ເຂົ້າໃຈສິ່ງທີ່ລາວເວົ້າ, ແຕ່ລາວກໍປະສານສາຍຕາກັບເດັກຍິງ ແລະ ສະແດງຄວາມເຫັນອົກເຫັນໃຈໃນທຸກວິທີທາງ ທີ່ລາວຈະສາມາດເຮັດໄດ້.

ຂ້ອຍຖືກຕີ ແລະ ຖືກມັດ, ກ່າວໂດຍຜູ້ແປພາສາ. ພວກເຂົາບັງຄັບຂ້ອຍເຮັດຫຼາຍສິ່ງຫຼາຍຢ່າງ ຂ້ອຍຄິດວ່າເຈົ້າກໍຮູ້.

ຊູມີ ປິ່ນມາຫາຜູ້ແປພາສາ. ນັ້ນແມ່ນທັງໝົດທີ່ລາວເວົ້າຫວາ? ຟັງເບິ່ງແລ້ວຄືວ່າລາວໄດ້ໃຫ້ຂໍ້ມູນຫຼາຍກວ່ານີ້.

ຜູ້ແປພາສາ ເວົ້າວ່າ, ແມ່ນແລ້ວ, ໃນພາສາຂອງພວກເຮົາຈະມີຄໍາເວົ້າທີ່ຍາວກວ່າ ແລະ ຈະໃຊ້ຫຼາຍຄໍາສັບເພື່ອອະທິບາຍສິ່ງດຽວກັນ.

ຊູມີ ສືບຕໍ່. ເຈົ້າບອກວ່າ ພວກເຂົາບັງຄັບເຈົ້າໃຫ້ເຮັດຫຼາຍສິ່ງຫຼາຍຢ່າງ. ຂໍໃຫ້ເຈົ້າເລົ່າລາຍລະອຽດສະເພາະກ່ຽວກັບສິ່ງທີ່ພວກເຂົາໃຫ້ເຮັດໄດ້ບໍ່?

ຜູ້ແປພາສາໄດ້ແປພາສາ ແລະ ເດັກຍິງເລີ່ມນໍ້າຕາໄຫຼ, ເບິ່ງຄືສັບສົນ ແລະ ຫງຸດຫງິດ.

## จุดຊີ້ບອກ ການບໍ່ເຮັດໄພອັນຕະລາຍໃດໆ

- ມັນເປັນສິ່ງທີ່ສຳຄັນ ເພື່ອຮັບປະກັນວ່າຜູ້ຖືກເຄາະຮ້າຍມີຄວາມຮູ້ສຶກສະບາຍໃຈທີ່ຈະເລົ່າປະສົບການຂອງເຂົາເຈົ້າຕໍ່ກັບຜູ້ແປພາສາ. ກ່ອນເລີ່ມຂະບວນການສຳພາດ, ມັນເປັນສິ່ງທີ່ດີ ທີ່ຈະສົ່ງເສີມຮູບແບບການສ້າງຄວາມສຳພັນລະຫວ່າງຜູ້ຖືກເຄາະຮ້າຍ ແລະ ຜູ້ແປພາສາ ລວມທັງ ໃຫ້ຜູ້ແປພາສາມີເວລາໃນການແນະນຳຕົນເອງ.

- ບາງຄັ້ງຜູ້ແປພາສາ ຮູ້ສຶກບໍ່ສະບາຍໃຈທີ່ຈະແປລາຍລະອຽດຂອງເຫດການ ໂດຍສະເພາະລາຍລະອຽດລັກສະນະທາງເພດ ທີ່ອາດຈະເປັນສິ່ງທີ່ຕ້ອງຫ້າມ. ໃນກໍລະນີ ຄືເຫດການນີ້, ເດັກຍິງໜຸ່ມ ອາດຈະຮັບຮູ້ວ່າຜູ້ແປພາສາບໍ່ສະບາຍໃຈທີ່ຈະແປ ແລະ ອາດຈະແກ້ໄຂເລື່ອງທີ່ລາວເລົ່າ.

- ຄຳສັບສະເພາະອາດຈະບໍ່ມີຢູ່ ຫຼື ອາດຍາກທີ່ຈະແປ. ເມື່ອມີກໍລະນີນີ້ ບາງຄັ້ງຜູ້ຖືກເຄາະຮ້າຍໄດ້ບອກເລົ່າເຫດການ ດ້ວຍວິທີທາງວັດທະນະທຳທີ່ເໝາະສົມ (ສິ່ງນີ້ມັກຈະຍາວກວ່າ ແລະ ມີບໍລິບົດທີ່ຫຼາຍກວ່າ) ແຕ່ມັນຍາກທີ່ຈະເຊື່ອມໂຍງຄວາມໝາຍທີ່ແທ້ຈິງຂອງເລື່ອງທີ່ບອກເລົ່າ ດ້ວຍການແປໃນຄຳສັບທີ່ແນ່ນອນ.

- ການເພີ່ມບຸກຄົນທີ່ສາມເຂົ້າໃນການສຳພາດ ເປັນສິ່ງທີ່ຍາກສະເໝີ. ຜູ້ຖືກເຄາະຮ້າຍອາດຈະຮູ້ສຶກຖືກເປີດເຜີຍ ແລະ ດ້ອຍໂອກາດຫຼາຍຂຶ້ນ. ສິ່ງທີ່ ອາດຈະສົ່ງຜົນກະທົບຕໍ່ກັບເນື້ອຫາໃນການເລົ່າເລື່ອງຂອງຜູ້ຖືກເຄາະຮ້າຍໄດ້ເຊັ່ນກັນ.

- ໃນທຸກໆວັດທະນະທຳ, ເຖິງວ່າໃນບາງວັດທະນະທຳອາດຈະຫຼາຍກວ່າວັດທະນະທຳອື່ນ, ແມ່ຍິງອາດຈະໂທດຕົນເອງຕໍ່ກັບການຕົກເປັນຜູ້ຖືກເຄາະຮ້າຍທາງເພດໄດ້. ຖ້າຜູ້ຖືກເຄາະຮ້າຍໂທດຕົນເອງ ຫຼື ຮູ້ສຶກວ່າຜູ້ແປພາສາໂທດເຂົາເຈົ້າຕໍ່ກັບເຫດການທີ່ເກີດຂຶ້ນ, ໂດຍທຳມະຊາດແລ້ວ ລາວຈະລັງເລທີ່ຈະເວົ້າຢ່າງເປີດເຜີຍ.

- ຄຳແນະນຳທີ່ສຳຄັນໃນການເຮັດວຽກຢ່າງມີປະສິດທິພາບກັບຜູ້ແປພາສາ ແມ່ນບໍ່ໃຫ້ຜູ້ຖືກເຄາະຮ້າຍເວົ້າເປັນເວລາດົນ ໂດຍບໍ່ມີການແປ. ຜູ້ແປພາສາຄວນແປເປັນແຕ່ລະປະໂຫຍກໄປ ແລະ ທຸກໆຝ່າຍ ລວມທັງ ຜູ້ສຳພາດ - ຈະຕ້ອງໄດ້ເຕືອນເຫດການນີ້ຫຼາຍໆຄັ້ງ ຕະຫຼອດໄລຍະຂອງການສຳພາດ.

- ຖ້າຂໍ້ມູນທີ່ຮວບຮວມ ມີລັກສະນະສະເພາະຂອງຄວາມອ່ອນໄຫວແລ້ວ, ມັນເປັນສິ່ງທີ່ດີທີ່ຈະເຮັດວຽກຮວມກັບຜູ້ແປພາສາກ່ອນລ່ວງໜ້າ ເພື່ອຮັບປະກັນວ່າ ຜູ້ແປພາສາເຂົ້າໃຈຄວາມສຳຄັນຂອງການແປໃນແຕ່ລະລາຍລະອຽດ.

- ທະນາຍຄວາມ ຊູມີ ແມ່ນທະນາຍຄວາມມືອາຊີບ ແລະ ມີຄວາມເຫັນອົກເຫັນໃຈຕໍ່ກັບຄຳຖາມທີ່ໄດ້ສອບຖາມ. ລາວມີຄວາມລະມັດລະວັງທີ່ ເພື່ອບໍ່ໃຫ້ຜູ້ຖືກເຄາະຮ້າຍຕຳນິຕົນເອງຕໍ່ກັບເຫດການທີ່ເກີດຂຶ້ນ ແລະ ຍັງອະນຸຍາດໃຫ້ຜູ້ຖືກເຄາະຮ້າຍໄດ້ເລົ່າເຫດການທີ່ເກີດຂຶ້ນ.

70 ດັດແກ້ຈາກ ການຊ່ວຍເຫຼືອຜູ້ລອດຊີວິດຈາກການຄ້າມະນຸດ: ສຶກສາກໍລະນີທີ່ມີວັດທະນະທຳທີ່ຫຼາກຫຼາຍ . ໂຄງການຂອງ O.L. ມູນນິທິ Pathy Family. (2017).

71 ດັດແກ້ຈາກ ການຊ່ວຍເຫຼືອຜູ້ລອດຊີວິດຈາກການຄ້າມະນຸດ: ສຶກສາກໍລະນີທີ່ມີວັດທະນະທຳທີ່ຫຼາກຫຼາຍ . ໂຄງການຂອງ O.L. ມູນນິທິ Pathy Family. (2017).

## ກໍລະນີສຶກສາ #4 [70] ຜູ້ພິພາກສາເວົ້າກັບຜູ້ຖືກເຄາະຮ້າຍທີ່ເປັນເພດຊາຍ

ຜູ້ພິພາກສາ ເລີ່ມມີຄວາມຫງຸດຫງິດ. ບອກຂ້ອຍອີກຄັ້ງ ເປັນຫຍັງເຈົ້າຈຶ່ງບໍ່ໜີອອກໄປ?

ຂ້າພະເຈົ້າ ໄດ້ບອກທ່ານແລ້ວ ຜູ້ພິພາກສາ ທີ່ເຄົາລົບ, ພວກເຂົາໄດ້ເອົາໜັງສືເດີນທາງຂ້າພະເຈົ້າໄປ. ຂ້າພະເຈົ້າບໍ່ສາມາດໜີອອກໄປໄດ້.

ຜູ້ພິພາກສາ ການເຂົ້າ-ອອກເມືອງ ກໍາລັງຟັງຜູ້ຊາຍທີ່ຊື່ວ່າ ເມືອງ . ລາວ ແລະ ທະນາຍຄວາມຂອງລາວອ້າງວ່າ ລາວໄດ້ຖືກຄ້າມະນຸດມາປະເທດນີ້ ດ້ວຍການຫຼອກລວງ. ອີງຕາມຂໍ້ມູນຂອງເມືອງ, ລາວໄດ້ຈ່າຍຄ່າທຳນຽມໃຫ້ແກ່ນາຍໜ້າຂອງລາວ ເພື່ອໃຫ້ຊອກວຽກທີ່ດີ ເພື່ອເຮັດວຽກໃນຮ້ານອາຫານ. ແຕ່ວ່າ ລາວອ້າງວ່າລາວໄດ້ຖືກເປັນຂ້າທາດໃນໂຮງງານປຸງແຕ່ງອາຫານທະເລ. ລາວບອກວ່າ ລາວບໍ່ເຄີຍໄດ້ຮັບຄ່າຈ້າງເລີຍ ນັບແຕ່ລາວໄດ້ເລີ່ມເຮັດວຽກຈົນມາໄດ້ 11 ເດືອນແລ້ວ. ລາວເຮັດວຽກທຸກໆມື້ ທີ່ມີສະພາບທີ່ສົກກະປົກ ແລະ ນອນໃນຫ້ອງນ້ອຍຮ່ວມກັບອີກ 14 ຄົນ, ຫ້ອງບໍ່ມີອາການຖ່າຍເທ ແລະ ພວກເຂົາຍັງຖືກຂັງໄວ້ໃນຫ້ອງຕອນກາງຄືນ. ເມື່ອໂຮງງານຖືກສອບສວນເລື່ອງການໜີພາສີ ແລະ ການສໍ້ໂກງ, ພວກເຂົາປ່ອຍໂຕ ເມືອງ ແລະ ບຸກຄົນອື່ນໆ ໂດຍບໍ່ຈ່າຍຄ່າແຮງງານໃຫ້ເຂົາເຈົ້າເລີຍ.

ຜູ້ພິພາກສາ: ເຈົ້າບໍ່ຈຳເປັນຕ້ອງມີໜັງສືເດີນທາງ ເພື່ອຈະໜີໄປ. ເປັນຫຍັງເຈົ້າ ຈຶ່ງບໍ່ຊອກມື້ໃດມື້ໜຶ່ງໜີໄປຈາກໂຮງງານ?

ເມືອງ: ຂ້າພະເຈົ້າ...ຂ້າພະເຈົ້າບໍ່ສາມາດໜີໄດ້, ຜູ້ພິພາກສາທີ່ເຄົາລົບ.

ຜູ້ພິພາກສາ: ເປັນຫຍັງຈຶ່ງໜີບໍ່ໄດ້? ພວກເຂົາໄດ້ຂົ່ມຂູ່ເຈົ້າບໍ່? ພວກເຂົາໄດ້ທຳຮ້າຍເຈົ້າບໍ່? ພວກເຂົາເຄີຍໃຊ້ຄວາມຮຸນແຮງກັບເຈົ້າບໍ່?

ເມືອງ: ບໍ່

ຜູ້ພິພາກສາ: ພວກເຂົາໄດ້ຂົ່ມຂູ່ຄອບຄົວຂອງເຈົ້າ ທີ່ຢູ່ບ້ານບໍ່?

ເມືອງ: ບໍ່. ແຕ່ຂ້າພະເຈົ້າບໍ່ມີເງິນ ແລະ ບໍ່ມີເອກະສານ. ຂ້າພະເຈົ້າ ຕ້ອງເຮັດແນວໃດ?

ຜູ້ພິພາກສາ: ເຈົ້າສາມາດໜີອອກມາ ແລະ ໄປຫາຕຳຫຼວດ ແລະ ບອກຕຳຫຼວດວ່າພວກເຂົາໄດ້ເຮັດຫຍັງກັບເຈົ້າ.

ເມືອງ: ແຕ່ວ່າ ຈາກນັ້ນ ພວກເຂົາອາດຈະຈັບຕົວຂ້າພະເຈົ້າ

ຜູ້ພິພາກສາ: ເປັນຫຍັງ? ເຈົ້າກຳລັງບອກຂ້ອຍວ່າເຈົ້າລະເມີດກົດໝາຍບໍ່? ມັນມີເຫດຜົນອັນໃດບໍ່ທີ່ພວກເຂົາຈະຕ້ອງຈັບຕົວເຈົ້າ?

ເມືອງ: ເພາະວ່າຂ້າພະເຈົ້າບໍ່ມີເອກະສານ, ຜູ້ພິພາກສາທີ່ເຄົາລົບ. [71]

## ຈຸດຊີ້ບອກ ການບໍ່ເຮັດໃພອັນຕະລາຍໃດໆ

- ເມື່ອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີສ່ວນຮ່ວມກັບສິ່ງໃດໜຶ່ງທີ່ຜິດກົດໝາຍ - ຄືກັບຫຼາຍໆຄົນທີ່ເຮັດຜ່ານມາ - ສິ່ງນີ້ເປັນອຸປະສັກອັນໃຫຍ່ຫຼວງ ເພື່ອຊອກຫາການຊ່ວຍເຫຼືອ. ຜູ້ຖືກເຄາະຮ້າຍຮູ້ສິ່ງນີ້ ແລະ ມັກຈະໃຊ້ຄວາມຢ້ານກົວຂອງຜູ້ຖືກເຄາະຮ້າຍ. ຜູ້ຖືກເຄາະຮ້າຍສ່ວນໃຫຍ່ບໍ່ຮູ້ ຫຼື ບໍ່ເຂົ້າໃຈວ່າພວກເຂົາມີສິດທີ່ຈະເຂົ້າເຖິງການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ການປົກປ້ອງບາງຢ່າງ.

- ຜູ້ພິພາກສາຄວນຮັບຮູ້ວ່າ ມັນບໍ່ແມ່ນເລື່ອງງ່າຍທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະໜີອອກຈາກສະຖານະການທີ່ພວກເຂົາພົບຢູ່. ຜູ້ຖືກເຄາະຮ້າຍສ່ວນໃຫຍ່ ຮູ້ສຶກວ່າຕົນເອງບໍ່ສາມາດຄວບຄຸມສະຖານະການຂອງຕົນເອງໄດ້. ມັນເປັນເລື່ອງປົກກະຕິທີ່ພວກເຂົາຈະຮູ້ສຶກສິ້ນຫວັງ ແລະ ຖືກຕັດອອກຈາກສັງຄົມ. ມັນເປັນສິ່ງທີ່ຈຳເປັນ ທີ່ຕ້ອງເຂົ້າໃຈຄວາມຮູ້ສຶກທີ່ສັບສົນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ອາດຈະມີປະສົບການ, ບໍລິບົດທາງດ້ານການເມືອງ ແລະ ກົດໝາຍ ທີ່ພວກເຂົາຈາກມາ.

- ເມືອງ ອາດຈະຖືກຂູດຮີດ ແຕ່ບໍ່ຕ້ອງການບອກຜູ້ພິພາກສາຕໍ່ກັບຄວາມຈິງທັງໝົດ. ຜູ້ຖືກເຄາະຮ້າຍຫຼາຍຄົນຮູ້ສຶກອັບອາຍທີ່ສຸດທີ່ຖືກຕົວະຍົວະຫຼອກລວງ. ໃນຖານະທີ່ເປັນຜູ້ຊາຍ, ເມືອງ ອາດມີຄວາມເຊື່ອທີ່ວ່າລາວຕ້ອງນຳສະເໜີຕົນເອງວ່າເປັນຄົນທີ່ເຂັ້ມແຂງ ແລະ ສາມາດຄວບຄຸມສະຖານະການຂອງຕົນເອງໄດ້. ຜູ້ພິພາກສາ ຄວນຈະປັບປ່ຽນ ເປີດໃຈຮັບຟັງເລື່ອງເລົ່າຂອງເມືອງ ເພື່ອຈະໄດ້ຮັບຂໍ້ມູນທີ່ແທ້ຈິງທັງໝົດ ກ່ຽວກັບສະຖານະການນີ້.

72 ດັດແກ້ຈາກ Surtees, R (2013).

## ກໍລະນີສຶກສາ #5 [72] ໄພອັນຕະລາຍທີ່ອາດຈະເກີດຂຶ້ນ ແລະ ຄວາມບອບຊ້ຳທາງດ້ານຈິດໃຈ ໃນໄລຍະການພິຈາລະນາຄະດີຢູ່ສານ

ຣີກ ມີສ່ວນຮ່ວມໃນການດຳເນີນຄະດີຕາມກົດໝາຍທີ່ກ່ຽວຂ້ອງກັບປະສົບການຖືກຄ້າມະນຸດຂອງລາວ - ຄະດີທຳອິດແມ່ນການຄ້າມະນຸດ ແລະ ອີກຄະດີແມ່ນການຂົ່ມຂືນທຳຊຳເລົາ. ລາວໄດ້ຮ້ອງຂໍເພື່ອໃຫ້ການແບບສ່ວນຕົວ ແຕ່ຄຳຮ້ອງຂໍຖືກປະຕິເສດ. ອົງການ NGO ທີ່ໄດ້ໃຫ້ການຊ່ວຍເຫຼືອ ຣີກ ຮ້ອງຂໍຫ້ອງລໍຖ້າແບບສ່ວນຕົວໃນໄລຍະຮັບຟັງການພິຈາລະນາຄະດີຂອງລາວ. ພວກເຂົາຍັງກະກຽມໃຫ້ ຣີກ ໃຫ້ການສຳລັບທັງສອງຄະດີ ໃນມື້ດຽວກັນເພື່ອປະຢັດເວລາ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍ. ຣີກ ໄດ້ຮັບຄວາມບອບຊ້ຳທາງດ້ານຈິດໃຈຢ່າງຮຸນແຮງ ເພື່ອຮັບມືກັບສອງຄະດີໃນເວລາດຽວກັນ ພ້ອມທັງ ຕ້ອງປະເຊີນໜ້າກັບຜູ້ທີ່ຄ້າມະນຸດ ແລະ ຜູ້ທີ່ຂົ່ມຂືນລາວ.

ໃນໄລຍະການພິຈາລະນາຄະດີ, ຍາດພີ່ນ້ອງຂອງຈຳເລີຍ (ຫຼາຍກວ່າສາມຄົນ) ໄດ້ເຍາະເຍີ້ຍ ຣີກ ແລະ ຜູ້ພິພາກສາບໍ່ໄດ້ດຳເນີນການໃດໆຕໍ່ກັບການຄຸມຄາມນີ້. ສິ່ງນີ້ເຮັດໃຫ້ລາວມີຄວາມຢ້ານກົວ. ນອກນັ້ນ, ຜູ້ພິພາກສາ ໄດ້ຖາມຄຳຖາມສ່ວນຕົວຕໍ່ກັບ ຣີກ ເຊິ່ງເປັນຄຳຖາມທີ່ບໍ່ກ່ຽວຂ້ອງກັບຄະດີ. ລາວສູນເສຍຄວາມໄວ້ວາງໃຈໃນຂະບວນການທາງກົດໝາຍ ແລະ ມີຄວາມຢ້ານກົວ ຍ້ອນການຖືກຂົ່ມຂູ່ຈາກຜູ້ຄ້າມະນຸດ/ຜູ້ທີ່ຂົ່ມຂືນ ແລະ ຄອບຄົວຂອງຈຳເລີຍ.

ຜູ້ພິພາກສາ: ເຈົ້າເຄີຍມີແຟນກ່ອນຈະຖືກຂົ່ມຂືນບໍ່?

ຣີກ: ບໍ່ມີ, ຜູ້ພິພາກສາທີ່ເຄົາລົບ...

ຜູ້ພິພາກສາ: ເຈົ້າມັກໄປສັງສັນ ແລະ ມີເວລາອັນມ່ວນຊື່ນບໍ່?

ຣີກ: ບໍ່, ຜູ້ພິພາກສາທີ່ເຄົາລົບ...

ຜູ້ພິພາກສາ: ເຈົ້າມັກໃສ່ເສື້ອຜ້າທີ່ເປີດເຜີຍ ເພື່ອດຶງດູດຄວາມສົນໃຈຂອງຜູ້ຊາຍບໍ່?

ຣີກ: ບໍ່, ຜູ້ພິພາກສາທີ່ເຄົາລົບ...

(ຜູ້ທີ່ເຂົ້າຮ່ວມໃນທີ່ປະຊຸມສານ ອາດຈະໄດ້ຍິນສຽງດັງໆທີ່ວ່າ ຣີກເປັນເດັກຍິງທີ່ບໍ່ດີ ແລະ ມັກອອກໄປສັງສັນກັບເດັກຊາຍທີ່ບໍ່ດີ.)

## ຈຸດຊີ້ບອກ ການບໍ່ເຮັດໃພອັນຕະລາຍໃດໆ

- ອົງການ NGO ພະຍາຍາມປະຢັດເວລາຂອງ ຣິກ ແລະ ຄ່າໃຊ້ຈ່າຍໃນການເດີນທາງ ດ້ວຍການກະກຽມໃຫ້ລາວໃຫ້ການໃນສອງຄະດີ ໃນມື້ດຽວກັນ. ເຖິງແນວໃດກໍຕາມ, ພວກເຂົາບໍ່ໄດ້ຄຳນຶງເຖິງຄວາມບອບຊ້ຳທາງດ້ານຈິດໃຈທີ່ອາດຈະເກີດຂຶ້ນ ເຊິ່ງເປັນຜົນສະທ້ອນທີ່ລາວອາດຈະໄດ້ຮັບ, ເຊິ່ງອາດຈະມີຜົນກະທົບຕໍ່ກັບການຟື້ນຟູຄືນ ລວມທັງຄວາມສາມາດຂອງລາວໃນການສືບຕໍ່ເປັນສ່ວນໜຶ່ງຂອງຂະບວນການຍຸຕິທຳທາງອາຍາ.

- ໄອຍະການທີ່ເປັນຕົວແທນຂອງຜູ້ຖືກເຄາະຮ້າຍ ຄວນຈະຕ້ອງຂໍໃຫ້ໃຫ້ມີການພິຈາລະນາຄະດີແບບປິດລັບ. ໝາຍຄວາມວ່າມີພຽງແຕ່ຜູ້ຖືກເຄາະຮ້າຍ, ຜູ້ສະໜັບສະໜູນຜູ້ຖືກເຄາະຮ້າຍ ແລະ ພາກສ່ວນອື່ນໆທີ່ຈຳເປັນ ທີ່ອະນຸຍາດໃຫ້ເຂົ້າຫ້ອງປະຊຸມສານ ເຊັ່ນ: ຜູ້ຖືກຫາ ແລະ ທະນາຍຄວາມຂອງຜູ້ຖືກຫາ, ຜູ້ອຳນວຍການຂອງສານ, ຜູ້ບັນທຶກໃນທີ່ປະຊຸມສານ, ຜູ້ແປພາສາ ແລະ ອື່ນໆ.

- ສານຄວນຈະປົກປ້ອງຣິກ ດ້ວຍການບໍ່ເປີດເຜີຍຕົວຕົນຂອງຣິກ ໃນເວລາພິຈາລະນາຄະດີ ແລະ ຮັບປະກັນວ່າຂໍ້ມູນໃດໆ ທີ່ຈະເປີດເຜີຍຕົວຕົນ ຫຼື ທີ່ຢູ່ຂອງລາວ ບໍ່ຄວນຈະຖືກກ່າວເຖິງ. ພວກເຂົາຄວນມີມາດຕະການປົກປ້ອງຄວາມປອດໄພຂອງຣິກຈາກຜູ້ທີ່ກະທຳຜິດຜ່ານມາດຕະການຕ່າງໆ ເຊັ່ນ: ຈຳກັດຈຳນວນຄົນໃນທີ່ປະຊຸມສານ ໂດຍພິຈາລະນາສະເພາະບຸກຄົນທີ່ຈຳເປັນເທົ່ານັ້ນ, ມີຜູ້ຕິດຕາມຄຸ້ມກັນການໄປການມາໃນອາຄານຕຶກຂອງສານ, ນຳໃຊ້ທາງເຂົ້າທີ່ແຍກຕ່າງຫາກ ເພື່ອເຂົ້າມາອາຄານຕຶກຂອງສານ, ຫ້ອງລໍຖ້າສ່ວນຕົວ ແລະ ອື່ນໆ.

- ຜູ້ພິພາກສານຄວນຈະມີຄວາມລະອຽດອ່ອນກວ່າເກົ່າຕໍ່ກັບ ຣິກ ເພື່ອຮັບປະກັນວ່າລາວຈະບໍ່ຮູ້ສຶກຖືກຂົ່ມຂູ່ ຫຼື ຖືກເຄາະຮ້າຍຊ້ຳຄືນອີກ ໃນເວລາພິຈາລະນາຄະດີຂອງສານ. ຜູ້ພິພາກສາຄວນຈະດຳເນີນການແຊກແຊງຢ່າງຫ້າວຫັນໃນນາມຂອງຣິກ ຖ້າຫາກລາວຖືກຄຸມຄາມ. ຜູ້ພິພາກສາ ຄວນຈະບອກໃຫ້ຍາດພີ່ນ້ອງຂອງຈຳເລີຍ ແລະ ບຸກຄົນທີ່ບໍ່ຈຳເປັນອື່ນໆອອກນອກຫ້ອງປະຊຸມສານ ໃນເວລາທີຜູ້ຖືກເຄາະຮ້າຍໄດ້ໃຫ້ການ. ຜູ້ພິພາກສາ ບໍ່ຄວນຖາມຄຳຖາມທີ່ເປັນສ່ວນຕົວ ຫຼື ຄຳຖາມທີ່ບໍ່ກ່ຽວຂ້ອງກັບຄະດີ.

## ກໍລະນີສຶກສາ #6 [73] ທະນາຍຄວາມທີ່ເວົ້າກັບຜູ້ຖືກເຄາະຮ້າຍທີ່ເປັນເດັກ

ຂ້ອຍບໍ່ສາມາດບອກເຈົ້າໄດ້ວ່າ ເຈົ້າຕ້ອງເຮັດຫຍັງ, ກ່າວໂດຍ ລີຊ້າ, ທະນາຍຄວາມ ທີ່ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍທີ່ຖືກຄ້າທາງເພດ ທີ່ອາຍຸບໍ່ທັນບັນລຸນິຕິພາວະ. ເຈົ້າມີທາງເລືອກວ່າຈະເວົ້າກັບຕໍາຫຼວດ ຫຼື ບໍ່. ບໍ່ມີຜູ້ໃດທີ່ຈະບັງຄັບໃຫ້ເຈົ້າເວົ້າ, ແຕ່ວ່າຖ້າເຈົ້າເວົ້າ ມັນອາດຈະຊ່ວຍຄະດີເຈົ້າ ແລະ ຊ່ວຍຜູ້ອື່ນໆທີ່ອາດຈະຍັງຢູ່ໃນສະຖານະການດຽວກັນ.

ລູກຄວາມຂອງລີຊ້າ, ໃໝ, ໄດ້ໃຊ້ສາຍຕາຂອງລາວແນມລົງທີ່ພື້ນ. ຂ້ອຍຄິດວ່າເຈົ້າຮູ້ດີທີ່ສຸດ. ເຈົ້າເປັນທະນາຍຄວາມ. ກະລຸນາບອກຂ້ອຍວ່າຂ້ອຍຄວນເຮັດຫຍັງ.

ອື່ມ...ມັນເປັນທາງເລືອກຂອງເຈົ້າ, ແຕ່ຂ້ອຍຄິດວ່າເຈົ້າຄວນເວົ້າກັບຕໍາຫຼວດ. ໃໝ ງຶກຫົວ, ແຕ່ສາຍຕາຍັງເບິ່ງພື້ນ.

ລີຊ້າ ຮູ້ສຶກບໍ່ໝັ້ນໃຈກ່ຽວກັບເລື່ອງນີ້. ອາທິດແລ້ວນີ້, ໃໝ ບອກວ່າລາວຕ້ອງການຈະເວົ້າກັບຕໍາຫຼວດ ແຕ່ຕອນທີ່ສໍາພາດກັບຕໍາຫຼວດ ລາວເວົ້າວ່າບໍ່ມີຫຍັງເລີຍ. ລາວບໍ່ໝັ້ນໃຈວ່າສິ່ງໃດແທ້ທີ່ ໃໝ ຕ້ອງການ ແລະ ຈໍາເປັນ. ລາວບໍ່ໝັ້ນໃຈວ່າ ບັນຫາຄວາມປອດໄພທັງໝົດໄດ້ຮັບການພິຈາລະນາຢ່າງພຽງພໍ. ລາວພົບວ່າເກືອບເປັນໄປບໍ່ໄດ້ເລີຍທີ່ຈະເຮັດໃຫ້ມີຄວາມສົມດູນລະຫວ່າງການໃຫ້ຄໍາແນະນໍາແກ່ ໃໝ ແລະ ຮັບປະກັນວ່າ ໃໝ ມີຊ່ອງທາງໃນການຕັດສິນໃຈດ້ວຍຕົນເອງ.

ໂອເຄ, ໃໝ. ພວກເຮົາຈະເຮັດໃນສິ່ງທີ່ເຈົ້າຕ້ອງການ. ແຕ່ຂ້ອຍຢາກຮັບປະກັນວ່າເຈົ້າເຂົ້າໃຈແລ້ວວ່າເຈົ້າເປັນຫົວໜ້າຂ້ອຍ. ຂ້ອຍສາມາດບອກເຈົ້າໄດ້ວ່າອັນໃດທີ່ຂ້ອຍຄິດວ່າດີທີ່ສຸດ, ແຕ່ເຈົ້າຕ້ອງບອກຂ້ອຍວ່າຕ້ອງເຮັດອັນໃດ.

ໃໝ ຍິ້ມ ແລະ ເງີຍໜ້າຂຶ້ນບຸດໜຶ່ງ. ຈາກນັ້ນກໍກົ້ມໜ້າລົງພື້ນອີກຄັ້ງ ແລະ ງຶກຫົວ.

ລີຊ້າ ເວົ້າຕໍ່. ເວົ້າກັບຕໍາຫຼວດແມ່ນດີທີ່ສຸດ, ແຕ່ເຈົ້າບໍ່ຈໍາເປັນຕ້ອງເຮັດ. ເຈົ້າອາຍຸຕໍ່າກວ່າ 18 ປີ ແລະ ນັ້ນໝາຍຄວາມວ່າເຈົ້າມີສິດ ແລະ ເຈົ້າສາມາດຢູ່ນີ້ ແລະ ໄປໂຮງຮຽນ ເຖິງວ່າເຈົ້າຈະບໍ່ເວົ້າ. ເຈົ້າເຂົ້າໃຈບໍ່?

ໂດຍ.

ແລ້ວ ເຈົ້າຢາກເຮັດຫຍັງ?

ເຈົ້າຄິດວ່າແນວໃດ? ຂ້ອຍຢາກໃຫ້ເຈົ້າແນະນໍາຂ້ອຍວ່າຕ້ອງເຮັດແນວໃດ.

73 ດັດແກ້ຈາກ ການຊ່ວຍເຫຼືອຜູ້ລອດຊີວິດຈາກການຄ້າມະນຸດ: ສຶກສາກໍລະນີທີ່ມີວັດທະນະທໍາທີ່ຫຼາກຫຼາຍ . ໂຄງການຂອງ O.L. ມູນນິທິ Pathy Family. (2017).

## จุดຊີ້ບອກ ການບໍ່ເຮັດໃພອັນຕະລາຍໃດໆ

- ເມື່ອຜູ້ຖືກເຄາະຮ້າຍທີ່ເປັນເດັກ ໄດ້ຮັບການກຳນົດຕົວ, ຜູ້ປົກຄອງຄວນໄດ້ຮັບການແຕ່ງຕັ້ງໂດຍໄວເທົ່າທີ່ຈະໄວໄດ້ ໂດຍອີງການທີ່ມີສິດອຳນາດ ເພື່ອນຳພາເດັກໃນທຸກຂັ້ນຕອນ ຈົນເຖິງການແກ້ໄຂບັນຫາໄລຍະຍາວ ເພື່ອຜົນປະໂຫຍດສູງສຸດຂອງເດັກ ທີ່ໄດ້ຮັບການກຳນົດ ແລະ ຈັດຕັ້ງປະຕິບັດ. ໃນກໍລະນີນີ້, ຍັງບໍ່ມີຄວາມຊັດເຈນວ່າ ໃໝ ມີພໍ່ແມ່ ຫຼື ໄດ້ແຕ່ງຕັ້ງຜູ້ປົກຄອງ ຜູ້ທີ່ຕິດຕາມ-ນຳພາລາວ ຕະຫຼອດໄລຍະຂອງຂະບວນການ.

- ທະນາຍຄວາມ ລີຊ້າ ໄດ້ພະຍາຍາມເຮັດໃນສິ່ງທີ່ຖືກຕ້ອງ ດ້ວຍການສ້າງຄວາມເຂັ້ມແຂງໃຫ້ແກ່ ໃໝ ແລະ ເຮັດໃຫ້ລາວຕັດສິນໃຈດ້ວຍຕົນເອງ. ລາວໄດ້ສະເໜີທາງເລືອກສອງສາມທາງໃຫ້ແກ່ ໃໝ ແລະ ແຈ້ງສິດຂອງ ໃໝ ໃຫ້ຊາບ.

- ເຖິງຢ່າງໃດກໍຕາມ, ໃໝ ຍັງຂາດຂໍ້ຄວາມທາງອ້ອມ, ຂໍ້ຄວາມທີ່ບໍ່ແມ່ນຄຳເວົ້າ. ລາວຟັງຄຳເວົ້າຂອງ ໃໝ ເພື່ອໃຫ້ບອກສິ່ງທີ່ ໃໝຕ້ອງການ ຫຼາຍວ່າຈະເບິ່ງພຶດຕິກຳຂອງ ໃໝ ກັບຕຳຫຼວດ ແລະ ພາສາກາຍຂອງລາວໃນເວລາສຳພາດ.

- ລີຊ້າ ເບິ່ງຄືວ່າຍັງບໍ່ທັນມີຄວາມເຂົ້າໃຈຕໍ່ກັບມຸມມອງໂລກວັດທະນະທຳຂອງ ໃໝ, ມັນອາດຈະເປັນສິ່ງທີ່ບໍ່ສຸພາບ ສຳລັບລາວຖ້າຫາກຈະບອກຄວາມຕ້ອງການຂອງລາວໂດຍກົງ. ຢູ່ໃນຄອບຄົວ ແລະ ຊຸມຊົນຂອງ ໃໝ, ບາງຄົນມັກຈະບອກຄວາມຕ້ອງການຂອງເຈົ້າ. ນອນນັ້ນ, ໃໝ ຮູ້ສຶກບໍ່ສະບາຍໃຈຢ່າງຊັດເຈນ ແລະ ມີຄວາມກັງວົນໃນການປະເຊີນໜ້າທີ່ເອົາຕົນເອງເປັນໃຈກາງ, ບໍ່ມີຄວາມເຄົາລົບ ແລະ ບໍ່ຮູ້ບຸນຄຸນ.

- ລີຊ້າ ຄວນຈະມີຄວາມອ່ອນໄຫວຫຼາຍກວ່ານີ້ ຕໍ່ກັບຄວາມແຕກຕ່າງດ້ານອາຍຸລະຫວ່າງລາວ ແລະ ໃໝ. ໃນວັດທະນະທຳຂອງ ໃໝ, ລາວຖືກຄາດຫວັງທີ່ຈະເຄົາລົບຜູ້ທີ່ອາຍຸຫຼາຍກວ່າລາວ ແລະ ລາວເຫັນລີຊ້າເປັນເອື້ອຍ. ສະນັ້ນ, ລາວຕ້ອງການສະແດງໃຫ້ລີຊ້າເຫັນວ່າລາວເຄົາລົບຄວາມຄິດເຫັນ ແລະ ຄຳແນະນຳຂອງລີຊ້າ. ເມື່ອລີຊ້າພະຍາຍາມທີ່ຈະປັບປ່ຽນອຳນາດ, ໃໝ ໄດ້ຍິ້ມ. ນີ້ອາດຈະໝາຍເຖິງຫຼາຍສິ່ງຫຼາຍຢ່າງ - ນັບແຕ່ການຍ້ອງຍໍຊື່ນຊົມຈົນເຖິງຄວາມບໍ່ສະບາຍໃຈທີ່ເຫັນໄດ້ຢ່າງຊັດເຈນ.